# ຈຸດປະກາຍ

໑ ISSN 1813-3630 ພິມອອກເທື່ອທີ 4



## ທັດສະນະ
### ຕໍ່ການພັດທະນາໃນ ສ.ປ.ປ.ລາວ

ສຸຂະອະນາໄມ, ກະເສດສວນຄົວ, ການຄ້າມະນຸດ ແລະ ການສໍ້ລາດບັງຫຼວງການຊ່ວຍເຫຼືອ

# ຈຸດປະກາຍ

## ພິມຄັ້ງທີ 4


ການກະຈາຍລະບົບສຸຂະອະນາໄມ: ເປັນການນຳໄປສູ່ຊຸມຊົນ ທີ່ຍັງຂາດການບໍລິການໂຄງລ່າງຢ່າງຄົບຖ້ວນ 5
*ໂດຍ ໂລນຄຳ ອາດສະນາວົງ, ຣານຈິດ ເປເຣຣາ ແລະ ທຳມະຣາດ ກູຕາເຕບ*

ກະເສດສວນຄົວໃນ ສ.ປ.ປ. ລາວ - ການເຊື່ອມໂຍງກັນລະຫວ່າງຄວາມອຸດົມສົມບູນທາງດ້ານຊີວະການກະເສດ ແລະ ຄວາມພຽງພໍ ຂອງອາຫານ 20
*ໂດຍ Pernille M. Dyg and ສາລົມສີ ພິທະຍາພອນ*

ການຄ້າມະນຸດ ແລະ ການຫລຸດຜ່ອນ ຄວາມທຸກຈົນ: ສອງດ້ານໃນຫຼຽນອັນດຽວ 32
*ໂດຍ ສະເວຍ ໂມແລນ*

ຄວາມສຳນຶກກ່ຽວກັບການສໍ້ລາດບັງຫລວງ ໃນໂຄງການຊ່ວຍເຫລືອລ້າຈາກຕ່າງປະເທດ 46
*ໂດຍ ເຄຣີ ຟູເອີ*


## ການແລກປ່ຽນຂໍ້ມູນເພື່ອສົ່ງເສີມການພັດທະນາ

ໃນເດືອນມີນາປີ 2003, ທີມງານອົງການສະຫະປະຊາຊາດປະຈຳຢູ່ ສປປ ລາວໄດ້ພົບປະເພື່ອປຶກສາຫາລື ເຖິງວິທີການເພື່ອສົ່ງເສີມການໂອ້ລົມສົນທະນາ ແລະ ແລກປ່ຽນຂໍ້ມູນຂ່າວສານ ເຊິ່ງກັນແລະ ກັນ ໃນການເຮັດວຽກ ເພື່ອການພັດທະນາຂອງປະເທດ. ທີມງານດັ່ງກ່າວຈຶ່ງໄດ້ຕົກລົງສ້າງໜັງສືວາລະສານເພື່ອເປັນເວທີຂອງການໂອ້ລົມສົນທະນາ ແລະ ປຶກສາຫາລືໃນດ້ານວຽກງານເລີ່ມເຮັດບົດບັນທຶກ ທີ່ຈະສະໜອງກອງປະຊຸມ ໂຕ້ວາທີວ່າດ້ວຍວຽກງານການພັດທະນາ, ແລະຫຼັງຈາກນັ້ນໄດ້ສ້າງຄະນະກຳມະການຮຽບຮຽງ ເພື່ອຊີ້ນຳນຳພາ. ຄະນະກຳມະການຮຽບຮຽງວາລະສານ ຈຸດປະກາຍ ເຊື່ອໝັ້ນ ຢ່າງຍິ່ງວ່າ ຈຸດປະສົງຂອງການຫຼຸດຜ່ອນຄວາມທຸກຍາກ ແລະ ການສົ່ງເສີມການພັດທະນາໃນສ.ປ.ປ.ລາວ ຈະດຳເນີນໄປໄດ້ດີກວ່າເກົ່າ ຖ້າຫາກມີການແລກປ່ຽນຂໍ້ມູນຂ່າວສານ ແລະ ແນວຄວາມຄິດທີ່ສ້າງສັນ. ບົດເລື່ອງທີ່ສະເໜີໃນວາລະສານດັ່ງກ່າວນີ້ ຈະເປັນສິ່ງທ້າທາຍແນວຄວາມຄິດຂອງພວກເຮົາໃນປະຈຸບັນ ແລະ / ຫຼື ມີຂໍ້ມູນຂ່າວສານ ຍັງບໍ່ທັນໄດ້ຮັບການພິມເຜີຍແຜ່ມາກ່ອນ. ພວກເຮົາຫວັງຢ່າງຍິ່ງວ່າວາລະສານ ຈຸດປະກາຍຈະເປັນສິ່ງກະຕຸ້ນຊຸກຍູ້ ໂອ້ລົມສົນທະນາກ່ຽວກັບວຽກງານ ການພັດທະນາໄດ້ຢ່າງຫ້າວຫັນ ແລະ ປະກອບສ່ວນເຮັດໃຫ້ເກີດມີຄວາມເຂົ້າໃຈ ທີ່ດີຂຶ້ນກ່ຽວກັບສິ່ງທ້າທາຍ ໃນການພັດທະນາຢູ່ໃນສ.ປ.ປ.ລາວ.

# ຄຳນຳ

ເມື່ອພິຈາລະນາເບິ່ງ ປະຕິກິລິຍາຂອງຄົນທົ່ວໄປທີ່ພະນັກງານ ຂອງພວກເຮົາພົບພໍ້, ຈົດໝາຍທີ່ບັນນາທິການໄດ້ຮັບ, ວາລະສານຈຸດປະກາຍໄດ້ເຕີບໃຫຍ່ຂະຫຍາຍຕົວຢູ່ໃນການເຄື່ອນໄຫວ ແລະ ການເປັນເຈົ້າການຂອງຜູ້ອ່ານ. ສິ່ງນີ້ມັນໄດ້ສ້າງຄວາມເພິ່ງພໍໃຈໃຫ້ແກ່ພວກເຮົາ ໃນທີມງານຂອງປະເທດສະຫະປະຊາຊາດ, ພ້ອມດຽວກັນນັ້ນມັນກໍ່ຍັງເປັນຄວາມພາກພູມໃຈ ສຳລັບຄົນລາວທີ່ໄດ້ມີສ່ວນຮ່ວມໃນວາລະສານດັ່ງກ່າວ. ພວກເຮົາຫວັງວ່າ ຄວາມຮູ້ສຶກໃນການເປັນເຈົ້າຂອງປະເທດຊາດຂອງ ວາລະສານຈຸດປະກາຍນີ້ຈະຍືນຍົງ ແລະ ຂະຫຍາຍຕົວສືບຕໍ່ໄປ, ແລະ ການຈັດພິມກໍ່ສາມາດເຂົ້າເຖິງນັກອ່ານ ແລະ ນັກຂຽນຄົນລາວສ່ວນຫຼາຍ.

ຍ້ອນຄຳນຶງເຖິງສິ່ງນີ້, ພວກເຮົາຈິ່ງໄດ້ມອບລາງວັນ ການປະກອບສ່ວນໃນການສຶກສາຄົ້ນຄວ້າທີ່ດີທີ່ສຸດ ໃຫ້ແກ່ນັກຂຽນຄົນລາວທີ່ສົ່ງບົດເລື່ອງເຂົ້າມາໃຫ້ພວກເຮົາ. ລາຍລະອຽດແມ່ນຢູ່ດ້ານຫຼັງຂອງສະບັບນີ້, ແລະ ຂ້າພະເຈົ້າກໍ່ຂໍສະເໜີໃຫ້ຜູ້ທີ່ເຫັນປະກາດແຈ້ງການນີ້ສົ່ງຂ່າວນີ້ຕໍ່ໄປຫາເພື່ອນ ແລະ ເພື່ອນຮ່ວມງານຂອງພວກເຂົາດ້ວຍ. ນີ້ແມ່ນໂອກາດອັນດີສຳລັບການຖ່າຍທອດຄວາມຄິດ ແລະ ປະສົບການ ເພື່ອສິ່ງທີ່ດີຂອງທຸກໆຄົນພາຍໃນປະເທດ.

ໃນສະບັບທີ 4 ຂອງວາລະສານຈຸດປະກາຍນີ້ ຍັງຈະສືບຕໍ່ ເວົ້າເຖິງປະສົບການໃນການພັດທະນາພາກປະຕິບັດ ແລະ ວິທະຍາສາດແບບປະສົມປະສານ ກັບຫົວຂໍ້ທີ່ບາງຄັ້ງກໍ່ຍາກທີ່ຈະປະຕິບັດໃຫ້ສຳເລັດແຕ່ຈຳເປັນຈະຕ້ອງເວົ້າເຖິງ. ໃນ "ການກະຈາຍລະບົບສຸຂະອານະໄມ" ລອນຄຳ ອັດສະນະວົງ ແລະ ເພື່ອນຂອງເພິ່ນທີ່ມາຈາກສະຖາບັນເຕັກໂນໂລຊີ ຂອງອາຊີ ໄດ້ໃຫ້ຂໍ້ສະເໜີທີ່ເປັນຈິງ ເພື່ອນຳເອົາລະບົບບຳບັດນ້ຳເສຍມານຳໃຊ້ ຢູ່ໃນຊຸມຊົນຄົນທຸກຍາກທີ່ຢູ່ຕົວເມືອງ. ເອກະສານ "ກະເສດສວນຄົວ" ປະກອບກັບຄວາມຮູ້ ທີ່ມາຈາກອົງການອາຫານ ແລະ ການກະເສດໂລກ ແລະ ກະຊວງກະສິກຳ ແລະ ປ່າໄມ້ ໄດ້ບັນຍາຍເຖິງໂຄງການທົດລອງທີ່ປະສົບຜົນສຳເລັດ ຊຶ່ງມັນໄດ້ນຳເອົາຜົນປະໂຫຍດທາງດ້ານເສດຖະກິດ ແລະ ໂພຊະນາການ ມາໃຫ້ຊາວບ້ານ. ໃນດ້ານມືດຂອງການພັດທະນາ ຂຽນໂດຍ Sverre Molland ແລະ Cary Feuer ຊຶ່ງໃນບົດເລື່ອງສ່ວນຕົວ ໄດ້ເວົ້າເຖິງການຄ້າມະນຸດ ແລະ ການສໍ້ລາດບັງຫຼວງຢູ່ໃນໂຄງການຊ່ວຍເຫຼືອຕ່າງໆ. ທັງສອງບົດເລື່ອງນີ້ເປັນເລື່ອງທີ່ລະອຽດອ່ອນ ແລະ ຍາກທີ່ຈະເວົ້າເຖິງ, ແຕ່ພວກເຮົາໝົດທຸກຄົນຕ້ອງ "ຜ່ານຜ່າກັບອຸປະສັກ" ແລະ ປຶກສາຫາລືເຖິງເລື່ອງດັ່ງກ່າວ ຖ້າພວກເຮົາຫວັງທີ່ຈະນຳເອົາຄວາມວັດທະນາຖາວອນໄລຍະຍາວມາສູ່ທົ່ວທຸກພາກຂອງປວງຊົນລາວ.

ຂ້າພະເຈົ້າຫວັງວ່າທ່ານຈະເຫັນການກະຕຸກຊຸກຍູ້ຂອງບົດເລື່ອງ ແລະ ຄວາມເໝາະສົມໃນວິທີການຂອງພວກເຂົາ. ຖ້າຫາກທ່ານຍັງບໍ່ເຫັນ, ກໍ່ໃຫ້ຂ້າພະເຈົ້າບອກອີກເທື່ອໜຶ່ງເລີຍວ່າ ວາລະສານຈຸດປະກາຍແມ່ນເວທີສຳລັບການແບ່ງປັນຄວາມຄິດເຫັນ. ດັ່ງທີ່ປະກາດແຈ້ງການມອບລາງວັນຂອງພວກເຮົາເວົ້າວ່າ"ຂຽນມາເລີຍ"

ຟິນ ເຣສເກ ນຽນເຊັນ
ຜູ້ປະສານງານອົງການສະຫະປະຊາຊາດປະຈຳລາວ

# ຈົດໝາຍ

**ເຖິງເພື່ອນຮ່ວມງານ,**

ພາຍຫຼັງທີ່ໄດ້ອ່ານເບິ່ງເນື້ອໃນຂອງສາມບົດເລື່ອງ ທີ່ຕີພິມອອກໃນວາລະສານ ຈຸດປະກາຍສະບັບທີ່ແລ້ວນັ້ນ, ຂ້າພະເຈົ້າເຫັນວ່າ ໃນສະບັບທີ່ 2 ນັ້ນ, ມີບົດເລື່ອງທີ່ເວົ້າເຖິງ ການໃຫ້ການສຶກສາແກ່ເດັກຊົນເຜົ່າທີ່ຢູ່ໃນສປປ ລາວ ຊຶ່ງຂຽນໂດຍ ສູກສະຫວ່າງ ສີມະນະ, ເມື່ອບໍ່ດົນມານີ້ ຜູ້ກ່ຽວເອງກໍ່ໄດ້ອ່ານບົດດັ່ງກ່າວ ໃນກອງປະຊຸມສາກົນຄັ້ງທີ່ໜຶ່ງ ກ່ຽວກັບການສຶກສາຄົ້ນຄວ້າໃນລາວ, ຊຶ່ງກອງປະຊຸມດັ່ງກ່າວຈັດຂຶ້ນ ຢູ່ມະຫາວິທະຍາໄລອີລີນອຍ ພາກເໜືອ, ແລະ ມັນກໍ່ໄດ້ຮັບການຕ້ອນຮັບເປັນຢ່າງດີ. ເມື່ອຂ້າພະເຈົ້າໄດ້ອ່ານບົດເລື່ອງຂອງເພິ່ນແລ້ວ ກໍ່ເຫັນວ່າ ພາສາເວົ້າຂອງລາວນັ້ນແມ່ນມີປະໂຫຍດໃນການສິດສອນພາສາລາວໃຫ້ແກ່ເດັກຊົນເຜົ່າ, ເຊັ່ນ ຊົນເຜົ່າຂະມຸ ຊຶ່ງພາສາແມ່ຂອງພວກເຂົາບໍ່ມີນ້ຳສຽງຂຶ້ນລົງ, ທັງນີ້ທັງນັ້ນກໍ່ຕໍ່ເມື່ອມີຄອມພິວເຕີ ໃຫ້ແກ່ພວກເຂົາ. ພວກເຮົາຄົງຈະສາມາດຊ່ວຍເຫຼືອ ອົງການຈັດຕັ້ງຢູ່ໃນລາວທີ່ຕ້ອງການສະໜັບສະໜູນ ໂຄງການບຸລິມະສິດໃດໜຶ່ງໃນຂົງເຂດວຽກງານດັ່ງກ່າວ. ສຳລັບຊາວໜຸ່ມແລ້ວ, ຄວາມກະຕືລືລົ້ນໃນການນຳໃຊ້ເຕັກໂນໂລຊີນັ້ນໄດ້ກາຍເປັນສິ່ງກະຕຸກຊຸກຍູ້ ໃຫ້ພວກເຂົ້າເຈົ້າມີຄວາມຫ້າວຫັນໃນວຽກງານການຮ່ຳຮຽນ.

ມັນເປັນສິ່ງວິເສດຫຼາຍ ທີ່ວາລະສານຈຸດປະກາຍ ພິມອອກເປັນສອງພາສາທັງພາສາອັງກິດ ແລະພາສາລາວ. ພວກເຮົາຈະເພີ່ມການເຊື່ອມຕໍ່ ແລະ ເຮັດໃຫ້ມັນມີຄວາມໂດດເດັ່ນຢູ່ໃນເວັບໄຊທ໌ຂອງພວກເຮົາຄື, www.seasite.niu.edu/lao, ເພື່ອໃຫ້ທຸກບົດເລື່ອງທີ່ໜ້າສົນໃຈ ຢ່າງກວ້າງຂວາງນັ້ນມີໄວ້ໃຫ້ແກ່ຄົນທີ່ເຂົ້າມາເບິ່ງເວັບໄຊທ໌ພາສາ ແລະ ວັດທະນະທຳລາວຂອງພວກເຮົາ. ຂໍສະແດງຄວາມຍິນດີນຳ ການມີສ່ວນຮ່ວມ ແລະ ການປະກອບສ່ວນທີ່ດີ ຕໍ່ການສຶກສາຄົ້ນຄວ້າໃນລາວ

John F. Hartmann, ສາດສະດາຈານດ້ານພາສາ ແລະ ວັນນະຄະດີ ຕ່າງປະເທດ
ສູນການສຶກສາຄົ້ນຄວ້າອາຊີ ຕາເວັນອອກສ່ຽງໃຕ້
ມະຫາວິທະຍາໄລອີລີນອຍພາກເໜືອ

jhartman@niu.edu

**ຮຽນບັນນາທິການ,**

ຂໍຂອບໃຈທີ່ເປີດກວ້າງໃຫ້ຜູ້ອ່ານສາມາດຖາມຄຳຖາມໄດ້. ຂ້າພະເຈົ້າເອງກໍ່ມີຄຳຖາມສອງຂໍ້ ແລະຄຳຄິດເຫັນບາງຢ່າງຕໍ່ວາລະສານຈຸດປະກາຍ:

1. ວາລະສານດັ່ງກ່າວນີ້ພິມອອກມາເພື່ອຜູ້ອ່ານກຸ່ມເປົ້າໝາຍໃດ?

2. ທ່ານເຫັນດີນຳບໍກັບຄຳເຫັນ ໃນບົດບັນນາທິການຂອງສະບັບ ທີ 3 ທີ່ວ່າ "ເຫດຜົນທີ່ບົ່ມຊ້ອນ

ໃນການພິມວາລະສານຈຸດປະກາຍ ແມ່ນ ທັກສະດ້ານການອ່ານ ໃນສປປ ລາວຍັງຕ່ຳຫຼາຍ"?

ຂ້າພະເຈົ້າຍັງບໍ່ທັນໄດ້ອ່ານສະບັບທີ່ເປັນພາສາລາວເທື່ອ, ແຕ່ຂ້າພະເຈົ້າກໍ່ເຊື່ອວ່າ ຜູ້ທີ່ຈະອ່ານວາລະສານດັ່ງກ່າວນີ້ ອາດຈະເປັນຜູ້ທີ່ມີລະດັບການສຶກສາ ຫຼື ວຽກງານຕົວຈິງໃດໜຶ່ງ ທີ່ແນ່ນອນ - ບຸກຄົນເຫຼົ່ານີ້ມີ'ທັກສະດ້ານການອ່ານ' ແລະ ພວກເຂົາກໍ່ອາດຈະຮັກການອ່ານເຊັ່ນດຽວກັນ. ອີກຢ່າງໜຶ່ງ, ກໍ່ອາດຈະເປັນຍ້ອນຜູ້ອ່ານເອງ, ຂ້າພະເຈົ້າໄດ້ມີໂອກາດໂອ້ລົມ ກັບຫຼາຍຄົນທີ່ມີພື້ນຖານ ແລະ ມາຈາກສະຖານທີ່ ທີ່ແຕກຕ່າງກັນ, ແລະ ເຫດຜົນທີ່ພວກເຂົາບໍ່ອ່ານວາລະສານຈຸດປະກາຍກໍ່ຄື (1) ພວກເຂົາບໍ່ມີຄວາມສົນໃຈ, (2) ພວກເຂົາບໍ່ຈຳເປັນຕ້ອງຮູ້, (3) ວາລະສານດັ່ງກ່າວບໍ່ໄດ້ພິມອອກມາເພື່ອພວກເຂົາ, (4) ພວກເຂົາບໍ່ເຂົ້າໃຈເນື້ອໃນ - ຊຶ່ງສິ່ງນີ້ອາດຈະພົວພັນໄປເຖິງ ລະດັບການສຶກສາຂອງພວກເຂົາ ແລະ (5) ວາລະສານເອງກໍ່ບໍ່ມີພຽງພໍຕາມຄວາມຮຽກຮ້ອງຕ້ອງການ. ສະນັ້ນວາລະສານ ຈຸດປະກາຍ ຈຶ່ງບໍ່ແມ່ນສຳລັບທຸກຄົນ - ຂ້າພະເຈົ້າເວົ້າແນວນີ້ຖືກບໍ?

ອີງຕາມຊື່ ຈຸດປະກາຍ, ຄວາມໝາຍທີ່ໜຶ່ງ ທີ່ຂ້າພະເຈົ້າເຂົ້າໃຈແມ່ນ'ຄວາມຫວັງໃໝ່'('ຈຸດປະກາຍ' ແມ່ນເປັນຄືກັບການໃຕ້ແສງທຽນແຫ່ງຊີວິດ ສ່ວນຄວາມໝາຍ'ແນວຄິດໃໝ່'ເປັນຄວາມໝາຍທີ່ສອງທີ່ຂ້າພະເຈົ້າຮູ້ຈັກ.

## ຊື່ ແລະ ບ່ອນຢູ່ທີ່ສະໜອງໃຫ້

ບັນນາທິການ: ທ່ານເຂົ້າໃຈຖືກຕ້ອງສົມຄວນ ທີ່ວ່າວາລະສານຈຸດປະກາຍ ແມ່ນວາລະສານວິຊາການ ແນໃສ່ກຸ່ມເປົ້າໝາຍຜູ້ອ່ານທີ່ມີຄວາມຮູ້ດ້ານວິຊາການ ແລະ ວິຊາສະເພາະໃດໜຶ່ງເປັນຫຼັກ. ພວກເຮົາເນັ້ນໃສ່ບັນຫາດ້ານການພັດທະນາ, ແຕ່ບໍ່ໄດ້ພະຍາຍາມ ແລະ ເຮັດໃຫ້ມັນມີຄວາມໜ້າສົນໃຈເທົ່າທີ່ຄວນ - ບົດເລື່ອງທີ່ແຕກຕ່າງກັນ ໃນວາລະສານນີ້ຈະສະທ້ອນໃຫ້ເຫັນ ຄວາມຮຽກຮ້ອງຕ້ອງການ ຂອງກຸ່ມຄົນທີ່ແຕກຕ່າງກັນ. ຊຶ່ງມັນເປັນຄືແນວນັ້ນແທ້ ໃນ ສປປ ລາວ, ທັງນັກພັດທະນາ ແລະ ນັກສຶກສາ ວິຊາການຕ່າງໆ, ການອ່ານໃນພາສາໃດໜຶ່ງ ບໍ່ໄດ້ປະຕິບັດຢ່າງກວ້າງຂວາງຄືກັນກັບວັດທະນະທຳອື່ນໆ, ແລະ ວາລະສານຈຸດປະກາຍ ເອງ ກໍ່ເຫັນໄດ້ເຖິງບັນຫາດັ່ງກ່າວໃນສ່ວນໃດໜຶ່ງ ໂດຍມີເປົ້າໝາຍທີ່ຈະປັບປຸງສະພາບດັ່ງກ່າວນັ້ນໃຫ້ດີຂຶ້ນ. ຖ້າຫາກຜູ້ອ່ານທ່ານໃດຮູ້ຈັກຄົນທີ່ຕ້ອງການອ່ານວາລະສານນີ້ ແຕ່ຫາອ່ານບໍ່ໄດ້, ກໍ່ຂໍຄວາມກະລຸນາແຈ້ງໃຫ້ພວກເຮົາຮັບຮູ້ນຳ ແລະ ພວກເຮົາຈະໄດ້ຊອກຫາວິທີທາງແກ້ໄຂ.

**ອົງການສະຫະປະຊາຊາດໃນ ສປປ ລາວ ໄດ້ໃຫ້ການສະໜັບສະໜູນ ການຜະລິດວາລະສານຈຸດປະກາຍ. ມຸມມອງໃນການພັດທະນາລາວ ໂດຍມີເປົ້າໝາຍເພື່ອສົ່ງເສີມການສົນທະນາບັນຫາທັງໝົດ ທີ່ພົວພັນເຖິງການພັດທະນາພາຍໃນປະເທດ. ກອງບັນນາທິການເປັນຜູ້ກວດກາບົດຄືນເບິ່ງບົດຄວາມທີ່ສະເໜີໃນສະບັບນີ້. ຄຳຄິດເຫັນທີ່ສະແດງອອກ ໃນການພິມຄັ້ງນີ້ລ້ວນແລ້ວແຕ່ເປັນຂອງນັກຂຽນເອງ ແລະ ບໍ່ຈຳເປັນຈະຖືວ່າເປັນຕົວແທນຂອງອົງການສະຫະປະຊາຊາດໃນ ສປປ ລາວ.**

# ການກະຈາຍລະບົບສຸຂະອະນາໄມ: ເປັນການນຳໄປສູ່ຊຸມຊົນ ທີ່ຍັງຂາດ ການການບໍລິການໂຄງລ່າງຢ່າງຄົບຖ້ວນ

ໂດຍ ໂລນຄຳ ອາດສະນາວົງ, ຣານຈິດ ເປເຣຣາ ແລະ ທຳມະຣາດ ກູຕາເຕບ

*ການກະຈາຍລະບົບສຸຂະອະນາໄມລົງສູ່ຊຸມຊົນ ຈະສາມາດຍົກລະດັບສະພາບ ການດຳລົງຊີວິດຂອງຊຸມຊົນແອອັດ ໃນຂົງເຂດຕົວເມືອງ. ໃນບົດຄົ້ນຄວ້ານີ້ໄດ້ທົດສອບ ຄວາມເປັນໄປໄດ້ຂອງການ ປັບປຸງລະບົບສຸຂະອານະໄມ ດ້ວຍວິທີການມີສ່ວນຮ່ວມຂອງປະຊາຊົນ, ການສຶກສາຄົ້ນຄວ້ານີ້ໄດ້ປະຕິບັດຢູ່ບ້ານທົ່ງຂັນຄຳເໜືອ ຊຶ່ງເປັນບ້ານໜຶ່ງ ທີ່ມີການຢູ່ອາໄສຢ່າງແອອັດໃນນະຄອນຫລວງວຽງຈັນ. ໃນການສຶກສາໄດ້ເຫັນວ່າຊາວບ້ານ ທີ່ອາໄສຢູ່ໃນເຂດດັ່ງກ່າວມີຄວາມມຸ່ງຫວັງຢາກກຳຈັດ ນ້ຳເປື້ອນອອກຈາກຊຸມຊົນ ຊຶ່ງເປັນບຸລິມະສິດ ກ່ອນອັນອື່ນ. ການກະຈາຍລະບົບບຳບັດນ້ຳເປື້ອນ ຄວນເຮັດເປັນໜ່ວຍ 10 ຫລັງຄາເຮືອນ ຊຶ່ງການວິເຄາະຂໍ້ມູນສະແດງ ໃຫ້ເຫັນວ່າການກະຈາຍລະບົບບຳບັດ ແມ່ນສາມາດນຳໄປກໍ່ສ້າງຕົວຈິງໄດ້. ດ້ວຍເຫດນີ້ການສຶກສາເຫັນວ່າ ອຳນາດການປົກຄອງບ້ານ ຄວນຈັດເປັນໜ່ວຍ 10 ຫລັງຄາເຮືອນ ເພື່ອກໍ່ສ້າງອ່າງບຳບັດນ້ຳເສຍ ຊຶ່ງສາມາດບຳບັດນ້ຳເສຍໄດ້ ໃນໄລຍະ 20-30 ປີຈົນກ່ວາລັດຖະບານ ສາມາດກໍ່ສ້າງລະບົບບຳບັດຂະໜາດໃຫຍ່ ເພື່ອຮັບໃຊ້ໄດ້ ທັງໝົດ ຕົວເມືອງ.*

## ບົດນຳ

ການຂະຫຍາຍຕົວເມືອງຢ່າງໄວ ແລະ ການເພີ່ມຂຶ້ນຂອງປະຊາກອນ ໄດ້ເຮັດໃຫ້ຊ່ອງຫວ່າງຄວາມແຕກໂຕນ ລະຫວ່າງຄວາມຮຽກຮ້ອງຕ້ອງການ ແລະ ການຕອບສະໜອງ ການນຳໃຊ້ຂອງລະບົບໂຄງລ່າງ ດ້ານສຸຂະອະນາໄມ ຢູ່ໃນຕົວເມືອງ ຂອງບັນດາ ປະເທດກຳລັງພັດທະນາມີການເພີ່ມຂຶ້ນ. ຢູ່ໃນນະຄອນຫລວງຂອງ ສປປລາວ ລະບົບສຸຂະອານະໄມ ລວມຍັງຢູ່ໃນຂັ້ນເລີ່ມຕົ້ນປັບປຸງບຸລະນະ ແລະ ການຮັບໃຊ້ຍັງໄດ້ພຽງ ແຕ່ສ່ວນໜຶ່ງຂອງຕົວເມືອງ ບາງຊຸມຊົນ ໃນໃຈກາງຕົວເມືອງ ຍັງບໍ່ໄດ້ຊົມໃຊ້ເທື່ອ. ຈາກການຂາດເຂີນລະບົບສຸຂະອະນາໄມ ລວມປະຊາຊົນໄດ້ມີການຮຽກຮ້ອງ ໃຫ້ມີການກະກຽມດ້ວຍຕົນເອງ ແລະຈະນຳໄປເຖິງການແກ້ໄຂ ບັນຫາສະພາບແວດລ້ອມໃນຕົວ ເມືອງ. ໃນເວລາທີ່ບໍ່ມີໂຄງການຊຶ່ງຈະມາແກ້ໄຂ ສະພາບການ, ດັ່ງນັ້ນຈະຕ້ອງໄດ້ມີວິທີການແກ້ໄຂ ຢ່າງໜ້ອຍສຳລັບໄລຍະສັ້ນ ຫລື ໄລກາງເສຍກ່ອນ.

ການສຶກສາໄດ້ພະຍາຍາມສຳຫລວດ ຄວາມເປັນໄປໄດ້ຂອງການ ກະຈາຍລະບົບສຸຂະອານະໄມລົງສູ່ຊຸມຊົນໃນຕົວເມືອງ, ນີ້ແມ່ນໂຄງການທົດລອງ ຄວາມເປັນໄປໄດ້ໃນການລົງທຶນ ແລະ ສັງຄົມຍອມຮັບໃນການແກ້ໄຂ ລະບົບສຸຂະອະນາໄມທີ່ຈະຕ້ອງ ໄດ້ປະຕິບັດຢູ່ໃນນະຄອນຫລວງວຽງຈັນ. ຖ້າຫາກການສຶກສາຫາກ ເຫັນວ່າສາມາດນຳໃຊ້ໄດ້ ຈາກນັ້ນຈະໄດ້ມີການວາງແຜນ ໂຄງການປະຕິບັດຕົວຈິງ ພາຍໃຕ້ໂຄງການຄຸ້ມຄອງສະພາບແວດລ້ອມ ໃນຕົວເມືອງຂອງຂົງເຂດ ອາຊີຕາເວັນອອກສ່ຽງໃຕ້ (2003-2008) ຂອງສະຖາບັນເຕັກໂນໂລຊີແຫ່ງອາຊີ (ເອໄອທີ) ທີ່ບາງກອກ, ປະເທດໄທ.

ຜົນໄດ້ຮັບຂອງການກະຈາຍລະບົບບຳບັດນ້ຳເສຍ ລະບົບບຳບັດໃຫຍ່ແມ່ນມີຄວາມເໝາະສົມ ສຳລັບການຮັບໃຊ້ຂອງ ສຸຂະອະນາໄມໃນຕົວເມືອງໃຫຍ່, ແຕ່ລະບົບດັ່ງກ່າວຮຽກຮ້ອງ ໃຫ້ມີການລົງທຶນສູງ.

ທາງເລືອກຂອງລະບົບບຳບັດໃຫຍ່ ແມ່ນການກະກຽມສະເພາະ ຂອງລະບົບລວມອັນດຽວ. ສ່ວນການປ່ອຍລົງ ໃນທັນໃດຕາມບໍລິເວນ ຂອງຊຸມຊົນການກໍ່ສ້າງຊຸມບຳບັດ ຂະໜາດນ້ອຍດ້ວຍຕົນເອງ ຜູ້ຊົມໃຊ້ເຫັນວ່າການກຳຈັດນ້ຳ ເປື້ອນແມ່ນໄດ້ດີ. ການກະຈາຍລະບົບສຸຂະອະນາໄມ ລົງໃນລະດັບຊຸມຊົນ ເຫັນວ່າບໍ່ມີຄວາມເໝາະສົມ ຖ້າຫາກການຈັດຕັ້ງຂອງຊຸມຊົນ ຫາກມີຄວາມ ຫຍຸ້ງຍາກໃນການປະກອບສ່ວນ ໃນຂັ້ນພື້ນຖານ. ແນວໃດກໍ່ຕາມການກະຈາຍ ລະບົບສຸຂະອະນາໄມ ລົງສູ່ຊຸມຊົນໂດຍປະຕິບັດ ເປັນໜ່ວຍຂອງບ້ານ ແມ່ນເປັນການແກ້ໄຂທີ່ເໝາະສົມ ສຳລັບຕົວເມືອງ ທີ່ປະເຊີນໜ້າກັບບັນຫາທີ່ດິນ ແລະ ການເງິນ.

## ຮູບພາບ 1 ພື້ນຖານການກະຈາຍລະບົບສຸຂະອະນາໄມ




ຖ້າຫາກວ່າຊຸມຊົນ ສາມາດຕອບສະໜອງພື້ນທີ່ໄດ້ ໃນການແກ້ໄຂບັນຫາ ການກະຈາຍລະບົບສຸຂະອານະໄມ ຈະສາມາດປະສົບຜົນສຳເລັດ ໂດຍການປະກອບສ່ວນຂອງຊຸມຊົນ.

ການກະຈາຍລະບົບບຳບັດນ້ຳເສຍມີຜົນດີດັ່ງນີ້:

1. ປະຢັດເງິນ: ການກະຈາຍລະບົບຮັກສາໄດ້ການໃຊ້ຈ່າຍ ທີ່ບໍ່ຈຳເປັນໂດຍສຸມໃສ່ ການວັດແທກການຮັກສາຜົນປະໂຫຍດ (ປະເມີນຜົນສະພາບການຂອງຊຸມຊົນ/ສິ່ງທີ່ຈຳເປັນ, ແລະວິທີການບຳລຸງຮັກສາລະບົບ) ແທນທີ່ຂອງການກະທຳຊຶ່ງຈະວິກິດ.
2. ປົກປ້ອງການລົງທຶນຂອງເຈົ້າຂອງເຮືອນ :ການກະຈາຍລະບົບ ເຈົ້າຂອງເຮືອນໄດ້ຮັບຜົນປະໂຫຍດສູງສຸດດ້ວຍການກະຈາຍລະບົບບຳບັດ ແບບຊຸມເກັບອາຈົມ ນຳໄປເຖິງການລົງທຶນ ທີ່ແທ້ຈິງຂອງພວກເຂົາ.
3. ສົ່ງເສີມການຄຸ້ມຄອງອ່າງນ້ຳທີ່ດີກວ່າ: ການກະຈາຍລະບົບສາມາດຫລີກເວັ້ນ ໄດ້ການໄຫລຢ່າງມະຫາສານຂອງນ້ຳເສຍ ຈາກອ່າງນ້ຳໜຶ່ງຫາອ່າງອື່ນ ຊຶ່ງເຮັດໃຫ້ມີຜົນກະທົບ ເໝືອນກັບການບຳບັດໃຫ່ຍລວມບ່ອນດຽວ ໃນຕົວເມືອງ
4. ມີຄວາມເໝາະສົມສຳລັບກາບແກ້ໄຂສະພາບການຂອງຊຸມຊົນທີ່ມີຄວາມໜາແໜ້ນຕ່ຳ: ໃນຊຸມຊົນນ້ອຍທີ່ມີ ຄວາມໜາແໜ້ນຂອງປະຊາກອນຕ່ຳ (ແລະເກັບພາສີໄດ້ໜ້ອຍຫລາຍ), ການກະຈາຍລະບົບເປັນທາງເລືອກທີ່ດີ ຊຶ່ງສາມາດເກັບກູ້ມູນຄ່າກໍ່ສ້າງຄືນໄດ້.
5. ເປັນການຈັດຫາທາງເລືອກທີ່ເໝາະສົມ ສຳລັບສະພາບເງື່ອນໄຂຂອງແຕ່ລະພື້ນທີ່: ລະບົບກະຈາຍສາມາດອອກແບບສຳລັບພື້ນທີ່ ໂດຍທີ່ລະດັບນ້ຳຕື້ນ, ພື້ນຖານບໍ່ເລິກ, ການຊຶມເຂົ້າຂອງນ້ຳບໍ່ຫລາຍ ແລະຂະໜາດບໍ່ໃຫຍ່ມີຄວາມເໝາະສົມ.
6. ເປັນການແກ້ໄຂທີ່ສົມບູນສຳລັບຊົງເຂດລະບົບນິເວດ: ລະບົບແບບກະຈາຍສາມາດ ແກ້ໄຂບັນຫາລາຄາເພື່ອຮັບໃຊ້ໃນການບຳບັດ ການເຄື່ອນຍ້າຍທາດອາຫານ ແລະ ການເພາະເຊື້ອໂລກທັງບໍ່ເປັນການຈະບຳບັດຊ້ຳອີກ ແລະ ເປັນໂອກາດ ສາມາດນຳໃຊ້ໄດ້ອີກ ຢູ່ທີ່ຈຸດຜະລິດນ້ຳເສຍອອກມາ (ດູລັສ, 1998).

## ສິ່ງພິເສດສະເພາະຂອງການກະຈາຍລະບົບສຸຂະອະນາໄມ

ເປົ້າໝາຍລວມຂອງຍຸດທະສາດ ການຮັກສາສຸຂະອະນາໄມ ຄວນມີການຂະຫຍາຍການບໍລິການໄປສູ່ຄອບຄົວໂດຍທົ່ວກັນ, ເພື່ອສຳເລັດເປົ້າໝາຍນັ້ນ ຄວນຈະສຳເລັດບາດກ້າວທີໜຶ່ງກ່ອນ, ຊຶ່ງເຫັນວ່າສອດຄ່ອງກັນແນວຄິດທີ່ວ່າ " ຄິດຈະທຳໃຫ້ສຳເລັດອັນຍິ່ງໃຫຍ່ແຕ່ ເລີ່ມປະຕິບັດເປັນອັນນ້ອຍໆໄປ " ມັກຈະປະສົບຜົນສຳເລັດ. ແນວຄິດດັ່ງກ່າວຖ້າປຽບທຽບໃສ່ເປົ້າໝາຍການບຳບັດນ້ຳເສຍເຫັນວ່າ ມີຄວາມເໝາະສົມໃນການເຮັດເປັນອ່າງ ບຳບັດຂະໜາດນ້ອຍ ສຳລັບເປັນໜ່ວຍຫລັງຄາເຮືອນ. ການກະຈາຍລະບົບບຳບັດນ້ຳເສຍສາມາດເຮັດໃຫ້ ມີຜົນກະທົບຕໍ່ສຸຂະພາບຕ່ຳ: ສິ່ງເສດເຫລືອໄດ້ບຳບັດຢ່າງເຕັມສ່ວນ ແລະບໍ່ມີມົນລະພິດທາງອາກາດ. ແນວຄວາມຄິດໃນການນຳໃຊ້ ລະບົບກະຈາຍແມ່ນ ເພື່ອເຮັດໃຫ້ລາຄາຖືກລົງ ແລະສາມາດຈັດຕັ້ງປະຕິບັດ ໄດ້ໃຫ້ສຳເລັດຜົນ. ແນວໃດກໍ່ຕາມມູນຄ່າລວມຂອງລະບົບ ບຳບັດນ້ອຍລວມກັນແລ້ວກໍ່ຍັງຖືກກວ່າການກໍ່ສ້າງ ອ່າງບຳບັດໃຫຍ່ອັນດຽວ.

ເຕັກໂນໂລຊີສຳລັບການກະຈາຍລະບົບບຳບັດນ້ຳເສຍມີຜົນດີດັ່ງລຸ່ມນີ້:
- ນຳໃຊ້ເນື້ອທີ່ຂະໜາດນ້ອຍ
- ບໍ່ສິ້ນເປືອງພະລັງງານຫລາຍ
- ມີການປະຕິບັດແບບງ່າຍດາຍ
- ບໍ່ມີຜົນກະທົບຕໍ່ສິ່ງແວດລ້ອມຂອງທ້ອງຖິ່ນເຊັ່ນບໍ່ມີກິ່ນເໝັນ
- ການບຳບັດມີຄຸນນະພາບດີສາມາດຮັບເອົາໄດ້
- ຫລຸດຜ່ອນມູນຄ່າໃຊ້ຈ່າຍແລະການອະນາໄມສິ່ງເສດເຫລືອ

ແນວຄວາມຄິດຂອງການກະຈາຍ ລະບົບສຸຂະອະນາໄມມີຜົນດີຕໍ່ຊຸມຊົນ ທີ່ມີລາຍໄດ້ຕ່ຳສາມາດລົງທຶນ ໃນການກໍ່ສ້າງລະບົບດັ່ງກ່າວດ້ວຍຕົນເອງ ແລະການເປັນເຈົ້າຂອງທີ່ແທ້ຈິງ. ມີບາງບົດຮຽນຂອງປະເທດອື່ນ ຊຶ່ງພົວພັນກັບຊຸມຊົນທີ່ມີລາຍຮັບຕ່ຳ, ໃນການກະຈາຍທຶນ ແລະການກໍ່ສ້າງໂຄງລ່າງບົນພື້ນຖານການຊ່ວຍເຫລືອຕົນເອງ ຂອງຊຸມຊົນ ແລະຮັບຜິດຊອບໃນການບຸລະນະແລະສ້ອມແປງໂຄງລ່າງດ້ວຍຕົນເອງ. ການກະຈາຍລະບົບສຸຂະອະນາໄມລົງ ໄປໃນລະດັບຊຸມຊົນ: ບາງປະສົບການຈາກບັນດາປະເທດກຳລັງພັດທະນາ

ການກະຈາຍລະບົບສຸຂະອະນາໄມ ກຳລັງໄດ້ຮັບການປະຕິບັດສຳເລັດ ຜົນໃນບັນດາປະເທດກຳລັງພັດທະນາຢູ່ໃນທະວີບອາຊີ. ບາງບົດຮຽນ ແລະ ປະສົບການຈາກການ ກະຈາຍລະບົບດັ່ງກ່າວໄດ້ນຳສະເໜີໂດຍຫຍໍ້ລຸ່ມນີ້.

## ໂຄງການທົດລອງໂອຣານຈີ(ໂອ ພີ ພີ ). ປາກິດສະຖານ

ໂດຍການໃຫ້ທຶນຂອງທະນາຄານສິນເຊື່ອ ແລະ ການຄ້າສາກົນ, ໂຄງການພັດທະນາສຸຂະອະນາໄມລາຄາຖືກຊຶ່ງເອີ້ນວ່າ ໂອ ພີ ພີ ໄດ້ເລີ້ມຕົ້ນໃນປີ 1980 ສຳລັບປັບປຸງບັນດາຕົວເມືອງ ນ້ອຍຂອງໂອຣານຈີ. ຊຶ່ງເປັນເຂດທີ່ໃຫຍ່ກາດຊີ ອາບາດີຂອງປາກິດສະຖານ, ຊຶ່ງມີພົນລະເມືອງ 800.000 ຄົນທີ່ອາໄສຢູ່ເກືອບ 100.000 ຫລັງຄາເຮືອນ. ບັນດາຕົວເມືອງນ້ອຍດັ່ງກ່າວກວມເອົາເນື້ອທີ່ເກືອບ 5.000 ເອເຄີ( 1 ເອເຄີ = 4050ມ$^2$) ຂອງພື້ນແຜ່ນດິນຊຶ່ງໃນນັ້ນ 83% ໄດ້ມີການກໍ່ສ້າງສ່ວນ

ຫລາຍແລ້ວບໍ່ມີແຜນຜັງ. ໃນປີ 1985 ໄດ້ມີການຂະຫຍາຍແລະພັດທະນາຫລາຍກວ່າ 8.000 ເອເຕີ ຊຶ່ງມີຄວາມໜາແໜ້ນຂອງພົນລະເມືອງ 200 ຄົນຕໍ່1 ເອເຕີ.

ໂຄງການໄດ້ແກ້ໄຂການກໍ່ສ້າງລະບົບລະບາຍນ້ຳເສຍ ເພື່ອລະບາຍນ້ຳເສຍອອກຈາກເຂດທີ່ຢູ່ອາໃສ, ດ້ວຍການປະຕິບັດຂອງປະຊາຊົນ ໃນເຂດດັ່ງກ່າວດ້ວຍເຂົາເຈົ້າເອງ, ກັບການຊ່ວຍເຫລືອຈາກໂຄງການ. ຈຸດປະສົງຂອງໂຄງການແມ່ນເພື່ອສົ່ງເສີມ ໃຫ້ຊຸມຊົນ ສາມາດຊ່ວຍເຫລືອຕົນເອງ ແລະ ຂະຫຍາຍລະບົບລະບາຍນ້ຳເສຍ ໃຫ້ມີຄວາມເໝາະສົມໃນເຂດຊຸມຊົນຂອງ ກາຣາຊີ ແລະ ຍົກລະດັບການຈັດຕັ້ງຂອງຊຸມຊົນໃຫ້ສາມາດຂະຫຍາຍ ແລະດຳເນີນລະບົບດັ່ງກ່າວ. ສົ່ງເສີມການປະກອບສ່ວນຂອງປວງຊົນ ເຊິ່ງແມ່ນຄວາມພະຍາຍາມ ໃນອະນາຄົດ ຂອງໂຄງການ. ໃນການປະກອບສ່ວນຂອງປວງຊົນເທື່ອນີ້ ບໍ່ພຽງແຕ່ເປັນຄ່າແຮງງານເທົ່ານັ້ນ ແຕ່ເຂົາເຈົ້າຍັງໄດ້ປະກອບສ່ວນທຶນກ້ອນໃຫຍ່ສຳລັບການກໍ່ສ້າງ. ໂຄງການທົດລອງ ໂອ ພີ ພີ ນີ້ ໄດ້ແກ້ໄຂບັນຫາຂອງສຸຂະອະນາໄມ ຢູ່ໃນ 3 ລະດັບ, ດ້ວຍການເຄື່ອນຍ້າຍຂອງປະຊາຊົນ, ການຈັດຕັ້ງວິຊາການ ແລະ ຂະຫຍາຍການນຳເອົາເຕັກນິກ ແລະບົດແນະນຳເພື່ອຫລຸດຜ່ອນລາຄາໃຊ້ຈ່າຍ, ຊຶ່ງໄດ້ອະທິບາຍຢູ່ລຸ່ມນີ້:

ກ) ພາຍໃນເຮືອນ ຫ້ອງນ້ຳຄວນສະອາດ
ຂ) ໃນຂົງເຂດ ( ໃນຂົງເຂດຊຶ່ງບັນຈຸເອົາ 20 ເຖິງ30 ຫລັງຄາເຮືອນ) ດ້ວຍການນຳໃຊ້ ລະບົບລະບາຍນ້ຳເປື້ອນຢູ່ໃນພື້ນດິນ.
ຄ) ຈາກຂົງເຂດຫາຈຸດບຳບັດໂດຍການນຳໃຊ້ລະບົບລະບາຍອັນດັບ 2 ເປັນບ່ອນເກັບນ້ຳເປື້ອນ.

ໂຄງການທົດລອງໂອ ພີ ພີ ໄດ້ທົດລອງຄວາມເປັນໄປໄດ້ສຳລັບປະຊາຊົນ ຜູ້ທີ່ມີລາຍຮັບຕ່ຳສາມາດຕິດຕັ້ງລະບົບລະບາຍນ້ຳເສຍ ດ້ວຍເຂົາເຈົ້າເອງ ໃນລາຄາທີ່ສາມາດຈ່າຍໄດ້ .ທັງເປັນການທົດລອງການແກ້ໄຂອາຊີບ ໂດຍການກະຈາຍເຕັກໂນໂລຊີເຊັ່ນ: ລະບົບນ້ຳເສຍດ້ວຍວິທີ ກໍ່ສ້າງແບບຄອບຄົວ. ການປະສົມປະສານລະຫວ່າງແຫລ່ງທຶນຂອງປະຊາຊົນ ແລະ ການຊົດເຊີຍແມ່ນບັນຫາຂອງປະຊາຊົນຜູ້ທຸກຍາກໃນຕົວເມືອງ (ອານໂຊນເລນາ, 1993).

## ການມີສ່ວນຮ່ວມຂອງຊຸມຊົນ ສຳລັບການພັດທະນາ ແລະສ້ອມແປງໂຄງລ່າງ ຢູ່ສີລັງກາ

ອົງການພັດທະນາເຄຫາສະຖານແຫ່ງຊາດ (ເອນເຮສດີເອ) ສົ່ງເສີມການມີສ່ວນຮ່ວມຂອງຊຸມຊົນໃນການກະຈາຍໂຄງລ່າງ ລົງສູ່ເຂດອາໃສ ທີ່ມີລາຍໄດ້ຕ່ຳ, ແຕ່ນຳໃຊ້ວິທີແຕກຕ່າງກັນ ຈາກໂອລັນຈີຂອງປະເທດປາກິດສະຖານ. ອົງການພັດທະນາເຄຫາສະຖານແຫ່ງຊາດ ( ເອນ ເຮສ ດີ ເອ ) ໄດ້ເຮັດສັນຍາ ຊຶ່ງຄ້າຍກັບສັນຍາການຄ້າ ໃຫ້ແກ່ຄະນະກຳມະການທ້ອງຖິ່ນ ຊຶ່ງເອີ້ນວ່າ ສະພາພັດທະນາຊຸມຊົນ (ຊີ ດີ ຊີ ) ຢູ່ໃນເຂດອາໄສທີ່ມີລາຍຮັບຕ່ຳ. ຊຸມຊົນເປັນຜູ້ປະຕິບັດເອງໂດຍການຊ່ວຍເຫລືອທາງດ້ານເຕັກນິກ ຈາກ ເອນ ເຮສ ດີເອ ແລະ ຮັກສາຜົນກຳໄລຂອງໂຄງການດ້ວຍການປະກອບສ່ວນເປັນແຮງງານ, ແຕ່ການກຳນົດການອອກແບບ ແລະ ການຄຸ້ມຄອງໄດ້ຖືກແກ້ໄຂ ຢູ່ໃນໂຄງການຄືກັນ.

ໃນປີ 1985 ລັດຖະບານສີລັງກາໄດ້ກຳນົດແຜນງານ 1 ລ້ານເຮືອນ ຊຶ່ງຈຸດປະສົງ ເພື່ອຂະຫຍາຍພື້ນຖານທີ່ພັກອາໄສໃຫ້ແກ່ປະຊາກອນໃນປີ 1989. ໂຄງການນີ້ໄດ້ເນັ້ນໃສ່ ການປະກອບສ່ວນ

ຂອງຊຸມຊົນ ເພື່ອບັນລຸຈຸດປະສົງຄາດໝາຍ. ຄວາມມຸ່ງໝາຍຂອງໂຄງການ ແມ່ນເພື່ອສົ່ງເສີມການປະກອບສ່ວນຂອງຊຸມຊົນ ທີ່ມີລາຍໄດ້ຕ່ຳໃນຕົວເມືອງໃນການກໍ່ສ້າງ ພື້ນຖານໂຄງລ່າງ. ເອັນ ເຣສ ດີ ເອໄດ້ເຮັດສັນຍາເທື່ອທີ 1 ກັບຊຸມຊົນໃນປີ1986, ເພື່ອຟື້ນຟູຄືນລະບົບຂຸມອາບນ້ຳໃນເຂດຊຸມຊົນ ຊີວາລີປູລາຊຶ່ງມີ 1200 ຫລັງຄາເຮືອນ, ຊຶ່ງເປັນຊຸມຊົນໜຶ່ງທີ່ໃຫຍ່ໃນໂກລົມໂບ. ຢູ່ໃນຊຸມຊົນໄດ້ມີການອອກແບບຂຸມເອງ ແລະ ໄດ້ກໍ່ສ້າງເອງ ໂດຍນຳໃຊ້ເຕັກນິກ ເຂົ້າຊ່ວຍຫລັງໄດ້ມີການຝຶກອົບຮົມຈາກ ເອັນ ເຣສ ດີ ເອ. ການກໍ່ສ້າງຂຸມໄດ້ສຳເລັດ 1 ອາທິດກ່ອນແຜນການ ແລະ ຄຸນນະພາບຂອງການກໍ່ສ້າງສູງ. ການສົ່ງເສີມຂອງ ເອັນ ເຣສ ດີ ເອ ດ້ວຍວິທີນີ້ຊຸມຊົນໄດ້ມີການພັດທະນາ ເໝືອນກັນທັງເປັນການເພີ່ມທຶນໃຫ້ແກ່ຊຸມຊົນ ດ້ວຍການຈ່າຍແບບເປັນຕົວເລກ. ດັ່ງນັ້ນທຶນສ່ວນນີ້ ຍັງສາມາດນຳໃຊ້ສຳລັບ ສ້ອມແປງ ແລະ ພັດທະນາໂຄງລ່າງ ຂອງຊຸມຊົນອີກດ້ວຍ.

---

*ແນວຄວາມຄິດຂອງການກະຈາຍລະບົບສຸຂະອະນາໄມ*

*ແມ່ນເພື່ອວ່າຊຸມຊົນທີ່ມີລາຍໄດ້ຕ່ຳ ກໍ່ສາມາດລົງທຶນໃນ*

*ການກໍ່ສ້າງລະບົບດັ່ງກ່າວດ້ວຍຕົນເອງ ແລະ*

*ກາຍເປັນເຈົ້າຂອງທີ່ແທ້ຈິງ.*

---

ເອັນ ເຣສ ດີ ເອໄດ້ເຫັນດີໃຫ້ຄະນະກຳມະການເກັບເງິນ ຈາກຄອບຄົວຄືກັນ ຊຶ່ງໄດ້ນຳໃຊ້ລະບົບສຸຂະອານະໄມຮ່ວມກັນເຊັ່ນ: ຫ້ອງນ້ຳສາທາລະນະ, ຊຶ່ງມີຄວາມຈຳເປັນຕ້ອງໄດ້ອະນາໄມເປັນປະຈຳ ແລະ ດູດອາຈົມຢ່າງປົກກະຕິ. ບາງຊຸມຊົນໄດ້ຈັດຕັ້ງການອານະໄມຫ້ອງນ້ຳ ໂດຍໃຫ້ສາມະຊິກໃນຄອບຄົວເປັນຜູ້ເຮັດ. ບາງຊຸມຊົນໄດ້ຈ້າງຄົນອະນາໄມຫ້ອງນ້ຳ ແລະ ຕ້ອງໄດ້ຈ່າຍເງິນໃຫ້ແກ່ລາວຊຶ່ງໄດ້ຈາກການເກັບນຳຜູ້ຊົມໃຊ້. ສຳລັບການດູດອາຈົມ ຄະນະກຳມະການຊຸມຊົນ ໄດ້ນຳໃຊ້ບໍລິການຂອງກຳແພງນະຄອນ. ຊຸມຊົນຍັງໄດ້ກວດກາສ້ອມແປງຫ້ອງນ້ຳ ແລະ ກອກນ້ຳໂດຍນຳໃຊ້ຄວາມຊຳນິຊຳນານຂອງຄົນໃນຊຸມຊົນເອງ (ປາທີຣານາ ແລະ ແສງ 1992).

## ໂຄງການປັບປຸງກຳປົງ (ເຄ ໄອ ພີ ) ຢູ່ອິນໂດເນເຊຍ

ເຄ ໄອ ພີ ມີຈຸດເປົ້າໝາຍ ເພື່ອຍົກລະດັບຜູ້ທີ່ຢູ່ອາໃສໃນຂົງເຂດຕົວເມືອງ ໂດຍການເລັ່ງໃສ່ພື້ນຖານ ຂອງຊຸມຊົນ ຊຶ່ງໄດ້ເລີ່ມຕົ້ນໃນທ້າຍປີ 1970. ໂຄງການໄດ້ຮັບການສະໜັບສະໜູນຈາກຊຸມຊົນ ໃນທ້ອງຖິ່ນ ແລະ ໄດ້ປະສົບຜົນສຳເລັດສູງ. ການປະຕິບັດໄລຍະທີ່ໜຶ່ງຂອງໂຄງການ, ຊຸມຊົນໄດ້ປະກອບສ່ວນວັດສະດຸກໍ່ສ້າງ (ທໍ່ເບຕົງ, ສ່ວນປະກອບຮ່ອງລະບາຍນ້ຳ) ພ້ອມທັງແຮງງານ ແລະ ຊັບສົມບັດຂອງເຂົາເອງ. ກິດຈະກຳທີ່ໄດ້ພັດທະນາເຊັ່ນ: ຫົນທາງ, ຮ່ອງລະບາຍນ້ຳ, ທາງຍ່າງ,ໄຟທາງ ແລະການປະດັບປະດາ.ໃນປີ1974 ອຳນາດການປົກຄອງກຳແພງນະຄອນໄດ້ຈັດແບ່ງງົບປະມານພັດທະນາ ຕາມຄວາມຕ້ອງການຂອງຜູ້ທີ່ຢູ່ອາໃສໃນກຳປົງ. ຊຸມຊົນໄດ້ປະກອບສ່ວນ ປະມານເກືອບເຄິ່ງຂອງມູນຄ່າລວມ ຂອງໂຄງການ. ກົມຮັບຜິດຊອບ ວຽກງານສາທາລະນະ (ພີ ດັບເບີນຢູ ດີ) ໄດ້ຊ່ວຍເຫລືອທາງດ້ານເຕັກນິກ ສຳລັບ ການອອກແບບ ແລະ ແຜນການຂອງໂຄງການ. ເລີ່ມຈາກ 1974 ເຖິງ 1979 ປະມານ 54% ຂອງ 1.26 ລ້ານໂດລາ ແມ່ນທຶນຂອງຊຸມຊົນເອງ. ຢູ່ໃນໄລຍະທີໜຶ່ງ ໂຄງການແມ່ນສຸມໃສ່ ພຽງແຕ່ ປັບປຸງການກໍ່ສ້າງໂຄງລ່າງ (ນ້ຳປະປາ, ທໍ່ລະບາຍນ້ຳ ແລະ ສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມ). ໃນປີ 1990, ເຄ ໄອ ພີ ໄດ້ຂະຫຍາຍພື້ນທີ່ເຂດພັດທະນາ ຊຶ່ງລວມມີການພັດທະນາເສດຖະກິດ ແລະ ສັງຄົມ.

ຊຶ່ງໝາຍຄວາມວ່າໃຫ້ວຽກນ້ອຍປະຕິບັດ, ຊ່ວຍເຫລືອທາງດ້ານທຸລະກິດ, ຈັດຝຶກອົບຮົມ ແລະ ການພັດທະນາບຸກຄະລະກອນ ຊຶ່ງໄດ້ລວມຢູ່ໃນໂຄງການ ເຄ ໄອ ພີ. ໃນໄລຍະປີ 1974 ເຖິງ ປີ 1979, ຜົນໄດ້ຮັບຂອງໂຄງການ ຄື: 7.500 ເຮັກຕາ ໄດ້ມີການຍົກລະດັບຂຶ້ນ ແລະ ປະມານ 3.3 ລ້ານ ຂອງຜູ້ທີ່ຢູ່ອາໄສໄດ້ຮັບຜົນດີຈາກໂຄງການ (ປະມານ 70% ຂອງຈຳນວນປະຊາກອນລວມ ໃນຂົງເຂດເຄໄອພີ). (ສະກູເບີເລີ, 1996, ໜ້າ 42).

## ຄວາມເໝາະສົມແລະການຮັບເອົາ ໄດ້ກ່ຽວກັບການກະຈາຍລະບົບສຸຂະອະນາໄມ ສຳລັບເຂດຕົວເມືອງ ແລະ ເຂດອ້ອມຕົວເມືອງ ຢູ່ປະເທດຫວຽດນາມ [1]

ໂຄງການນີ້ແມ່ນໄດ້ຮັບທຶນຊ່ວຍເຫລືອ ຈາກລັດຖະບານສະວິດ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ບຸກຄະລະກອນ ເຂົ້າໃນວຽກງານເຕັກໂນໂລຊີ ແລະ ວິທະຍາສາດສິ່ງແວດລ້ອມ ຢູ່ທີ່ສູນວິສະວະກຳສິ່ງແວດລ້ອມ ສຳລັບເຂດອຸດສາຫະກຳ ແລະ ຕົວເມືອງ (ຊີ ອີ ອີ ທີ ໄອ ເອ), ຊຶ່ງມະຫາວິທະຍາໄລວິສະວະກອນຂອງຮາໂນຍ ໄດ້ຮ່ວມມືກັບສະຖາບັນເຕັກໂນໂລຊີ ແລະ ວິທະຍາສາດສິ່ງແວດລ້ອມແຫ່ງສະຫະພັນສະວິດ (ອີ ເອ ດັບເບີຢູເອຈີ). ແນວຄວາມຄິດຂອງການກະຈາຍລະບົບ ແລະ ເຕັກໂນໂລຊີ ເຂົ້າໃນການຄຸ້ມຄອງນ້ຳເສຍ ເຫັນວ່າເປັນລະບົບທີ່ດີ ຊຶ່ງໄດ້ນຳໃຊ້ໃນການພັດທະນາ ແລະ ປະຕິບັດຕົວຈິງຢູ່ຫວຽດນາມ. ຈຸດປະສົງຕົ້ນຕໍຂອງລະບົບແມ່ນແນໃສ່ ພັດທະນາຄູ່ມືເຕັກນິກສຳລັບອອກແບບ ເພື່ອບຸລະນະ ແລະ ສ້ອມແປງລະບົບກະຈາຍການບຳບັດນ້ຳເສຍ ແບບທຳມະຊາດ ໃນລາຄາທີ່ຕ່ຳ, ພ້ອມທັງສຸມໃສ່ ການປັບປຸງລະບົບຊຸມເກັບອາຈົມ ຢູ່ໃນຕົວເມືອງ ແລະເຂດອ້ອມຂ້າງຕົວເມືອງຂອງຫວຽດນາມ. ລະບົບດັ່ງກ່າວນີ້ໄດ້ຕິດຕັ້ງຕາມຄົວເຮືອນ ໃນເຂດຕົວເມືອງຮາໂນຍ, ບ່ອນທີ່ໄດ້ມີການຕິດຕາມກວດກາ. ພື້ນຖານແນວຄິດຂອງໂຄງການດັ່ງກ່າວ ແມ່ນຕ້ອງການບຳບັດນ້ຳເສຍ ແບບເປັນຈຸດ ແຕ່ເປັນລະບົບບຳບັດທີ່ລາຄາຖືກ ແລະ ເປັນການນຳໃຊ້ໂດຍກົງກັບຜົນຜະລິດທີ່ບຳບັດອອກມາ (ນ້ຳ, ບົ່ມເຮັດປຸຍ ແລະອາຍແກັດ). ວິທີການດັ່ງກ່າວແມ່ນເປັນການຄຸ້ມຄອງ ລະບົບສຸຂະອະນາໄມ ທີ່ມີຄວາມຈຳເປັນເໝາະສົມ ແລະ ມີປະໂຫຍດຫລາຍສຳລັບປະເທດກຳລັງພັດທະນາ ຊຶ່ງບັນຫານ້ຳ ແລະ ສຸຂະອະນາໄມກຳລັງ ກາຍເປັນບັນຫາທີ່ສຳຄັນ (ວຽດ ອີທີ ເອແອນ, 2003).

---

*ຂະໜາດຂອງນະຄອນຫລວງວຽງຈັນ ແລະ ກໍ່ໄດ້ມີການຈັດຕັ້ງຢ່າງເປັນ ລະບຽບທັງທາງດ້ານ ສັງຄົມ ກໍ່ຄືດ້ານຂະໜາດຂອງຊຸມຊົນ. ນີ້ເປັນເງື່ອນໄຂທີ່ດີສຳລັບການກະຈາຍລະບົບ ສຸຂະອະນາໄມ.*

---

[1] ໂຄງການແຊນເດັກ ກ່ຽວກັບການກະຈາຍການຄຸ້ມຄອງນ້ຳເປື້ອນ ( http.sandec.ch/Wastewater/DEWAT_Projec.htm)

ຖ້າຈະເວົ້າໂດຍຫຍໍ້ໆແລ້ວທັງສາມໂຄງການ ຢູ່ປະເທດປາກິດສະຖານ, ສີລັງກາ ແລະອິນໂດເນເຊຍ ເປົ້າໝາຍລວມແມ່ນແນໃສ່ ສົ່ງເສີມການມີສ່ວນຮ່ວມຂອງຊຸມຊົນ ແລະ ເປັນການຈັດຫາລະບົບລະບາຍນໍ້າເສຍທີ່ສາມາດປະຕິບັດ ໄດ້ຂອງຊຸມຊົນທີ່ມີລາຍໄດ້ຕໍ່າ ແລະ ພ້ອມທັງເປັນການພັດທະນາການຈັດຕັ້ງ ເພື່ອສາມາດຂະຫຍາຍ ແລະ ສ້ອມແປງລະບົບບຳບັດໄດ້ເອງ. ແຕ່ສຳລັບຢູ່ໃນກໍລະນີຂອງປະເທດວຽດນາມ ການປັບປຸງຄູ່ມື ໃນການອອກແບບເພື່ອບຸລະນະແລະສ້ອມແປງການກະຈາຍລະບົບແບບນ້ອຍ ດ້ວຍການນຳໃຊ້ລະບົບບຳບັດນໍ້າເສຍ ແບບທຳມະຊາດ ໃນລາຄາຕໍ່າ ເພື່ອປັບປຸງ ລະບົບຂຸມເກັບອາຈົມ ຢູ່ເຂດຕົວເມືອງ ແລະ ອ້ອມຕົວເມືອງແມ່ນໄດ້ນຳໃຊ້ແນວຄິດໃໝ່. ໂດຍທົ່ວໄປ ຄວາມຮັບຮູ້ວິທີ ທາງອອກໃນການແກ້ໄຂຢ່າງຮອບດ້ານ ຊຶ່ງໄດ້ມີການສົ່ງເສີມຈາກ ຊີ ອີ ອີ ທີ ໄອ ເອ & ອີ ເອ ດັບເບີນຢູ ເອ ຈີ. ແຕ່ສຳລັບບົດຄົ້ນຄ້ວາ ນີ້ແມ່ນເລັ່ງໃສ່ກວດສອບຄວາມເປັນ ໄປໄດ້ຂອງຊຸມຊົນທຸກຍາກເຂົ້າໃນວຽກງານຄຸ້ມຄອງ ລະບົບສຸຂະອະນາໄມຢູ່ນະຄອນຫລວງວຽງຈັນ, ສປປ ລາວ.

## ສະຖານທີ່ສຶກສາຄົ້ນຄ້ວາ

ຈຳນວນລວມຂອງຊຸມຊົນທີ່ຍັງຂາດການບໍລິການຢ່າງຄົບຖ້ວນ ຢູ່ໃນຂົງເຂດຕົວເມືອງວຽງຈັນ ຍັງບໍ່ທັນຫລາຍປານໃດ ແຕ່ກໍ່ມີການເພີ່ມຂຶ້ນໃນແຕ່ລະປີ. ຄິດເປັນເປີເຊັນຂອງ ຈຳນວນປະຊາກອນ ຢູ່ໃນຕົວເມືອງ ທີ່ອາໃສຢູ່ໃນເຂດຊຸມຊົນແອອັດ ກວມເອົາ 20% ແລະບັນຫາກ່ຽວກັບລະບົບສຸຂະອານະໄມ ຢູ່ນະຄອນຫລວງວຽງຈັນແມ່ນຍັງບໍ່ທັນມີຫລາຍປານໃດ ຄືກັບຕົວເມືອງໃຫຍ່ເຊັ່ນ: ບາງກອກ ແລະ ຈາກາຕາ. ນະຄອນຫລວງວຽງຈັນ ຍັງມີຄວາມສະດວກໃນການນຳໃຊ້ ການກະຈາຍລະບົບສຸຂະອານະໄມ ແລະ ປະຊາຊົນໄດ້ມີການຈັດຕັ້ງຢ່າງລະອຽດ ຢູ່ໃນຊຸມຊົນບໍ່ວ່າດ້ານສັງຄົມແລະກາລະໂອກາດ. ນີ້ເປັນເງື່ອນໄຂທີ່ດີສຳລັບການກະຈາຍລະບົບສຸຂະອະນາໄມ.

ບ້ານທົ່ງຂັນຄຳເໜືອ ເປັນບ້ານໜຶ່ງທີ່ເປັນຊຸມຊົນແອອັດ ຢູ່ໃນນະຄອນຫລວງວຽງຈັນ, ຊຶ່ງຕັ້ງຢູ່ໃຈກາງເມືອງຈັນທະບູລີ ແລະ ມີປະຊາກອນຈຳນວນ1574ຄົນ (243 ຫລັງຄາເຮືອນ). ມີເນື້ອທີ່ 13.6 ເຮັກຕາ, ເຂດແດນຂອງບ້ານຕິດກັບສາມເສັ້ນທາງໃຫຍ່ ແລະ ລັກສະນະຂອງບ້ານ ຍັງຂາດການບໍລິການດ້ານໂຄງລ່າງ ຢ່າງພຽງພໍຢູ່ໃນຕົວເມືອງ, ດັ່ງນັ້ນ ຈຶ່ງເຫັນເໝາະສົມສຳລັບ ໂຄງການທົດລອງ. ປະມານ 60% ຂອງຫລັງຄາເຮືອນຍັງທຸກ ແລະ ເງື່ອນໄຂສະພາບແວດລ້ອມ ຂອງບ້ານກໍ່ຍິ່ງເຮັດໃຫ້ພວກເຂົາທຸກຍາກລົງອີກ. ໃນປະຈຸບັນ 67% ຫລັງຄາເຮືອນຂອງບ້ານມີຂຸມເກັບອາຈົມ, ແຕ່ກໍ່ຍັງບໍ່ໄດ້ມາດຕະຖານຕາມລະບົບ. ສ່ວນຫລາຍຂຸມອາຈົມໄດ້ຮົ່ວຊຶມ ແລະ ເຮັດໃຫ້ມີມົນລະພິດກັບໜ້າດິນ ແລະ ນໍ້າຝົນມີກິ່ນເໝັນ. ບາງເຂດຂອງບ້ານລົດເກັບຂີ້ເຫຍື້ອ ບໍ່ສາມາດເຂົ້າໄປເຖິງ, ຜົນໄດ້ຮັບເຮັດໃຫ້ຂີ້ເຫຍື້ອໄດ້ຖືກສະສົມຢູ່ໃນບ້ານ ແລະ ໄຫລອຸດຕັນຮ່ອງລະບາຍນໍ້າ.

ລາຍຮັບແຕ່ລະເດືອນຂອງຄອບຄົວ




ເປົ້າໝາຍຂອງການສຶກສາຄົ້ນຄ້ວາມີດັ່ງນີ້:

1. ປະເມີນຜົນຂອງລະບົບສຸຂະອະນາໄມສິ່ງແວດລ້ອມຊຶ່ງປະຊາຊົນນຳໃຊ້ໃນປະຈຸບັນ.
2. ສັງລວມຄຳຄິດເຫັນກ່ຽວກັບການຈັດຕັ້ງປະຕິບັດ ການກະຈາຍລະບົບສຸຂະອະນາໄມ ຢູ່ໃນຊຸມຊົນຂອງພວກເຂົາ.
3. ຄົ້ນຫາການຮັບເອົາໄດ້ຂອງສັງຄົມ ແລະ ຄວາມເໝາະສົມທາງດ້ານເສດຖະກິດ ກ່ຽວກັບການຈັດຕັ້ງປະຕິບັດ ການກະຈາຍລະບົບສຸຂະອະນາໄມ.
4. ປະກອບຄຳເຫັນ ເພື່ອເປັນຄູ່ມືພື້ນຖານໃຫ້ແກ່ຊຸມຊົນ ແລະ ວິທີການປະກອບສ່ວນ ໃນການປັບປຸງສິ່ງແວດລ້ອມທາງດ້ານສຸຂະອະນາໄມ.

## ວິທີການໃນການສຶກສາຄົ້ນຄ້ວາ

ການສຶກສາໄດ້ນຳໃຊ້ຄຳຖາມເພື່ອສຳຫລວດ, ສຳພາດນຳຜູ້ອາວຸໂສ, ທີ່ປຶກສາຂອງບ້ານ ແລະ ການຈັດຕັ້ງຂອງບ້ານ, ພ້ອມທັງໄດ້ເດີນສັງເກດຕາມບ້ານ. ການສຳຫລວດໂດຍໃຊ້ຄຳຖາມໄດ້ເລືອກເອົາ 110 ຫລັງຄາເຮືອນ ຊຶ່ງກວມເອົາ 24 ໜ່ວຍຂອງບ້ານ .ຫົວໜ້າຄອບຄົວໄດ້ຖືກເລືອກສຳພາດສະເພາະ ໃນໄລຍະ 4 ອາທິດ ແຕ່ເດືອນກຸມພາ ຫາ ເດືອນມີນາ 2004. ຄຳຖາມສຳຫລວດໄດ້ກວມເອົາສະພາບຂອງສຸຂະອານະໄມ ໃນປະຈຸບັນຂອງບ້ານໂດຍທົ່ວໄປ ແລະ ຂອງແຕ່ລະຄອບຄົວ ໂດຍສະເພາະ, ທາງເລືອກຂອງການກະຈາຍລະບົບສຸຂະອານະໄມ, ຄວາມເພິ່ງພໍໃຈຈ່າຍຄ່າຊົມໃຊ້ ແລະ ຄວາມອາດສາມາດໃນການປະກອບສ່ວນ ກໍ່ສ້າງແລະສ້ອມແປງລະບົບກະຈາຍດັ່ງກ່າວ.

ການສຳພາດນຳທີ່ປຶກສາ ແລະ ການຈັດຕັ້ງຂອງບ້ານ ຄຳຖາມຈະເປັນແບບງ່າຍດາຍ ຊຶ່ງໄດ້ສຳພາດນຳນາຍບ້ານ, ຫົວໜ້າໂຮງຮຽນປະຖົມ, ຕົວແທນຂອງສະຫະພັນແມ່ຍິງ, ຊາວໜຸ່ມ ແລະ ສະຫວັດດີການຂອງບ້ານ. ນອກຈາກນັ້ນຍັງໄດ້ປຶກສາຫາລື ກັບຮອງເຈົ້າເມືອງຈັນທະບູລີ, ກັບພະນັກງານວິຊາການ ຈາກພະແນກ ຄົມມະນາຄົມ ຂົນສົ່ງໄປສະນີ ແລະກໍ່ສ້າງນະຄອນຫລວງ, ກັບຮອງຫົວໜ້າອົງການພັດທະນາແລະບໍລິການຕົວເມືອງວຽງຈັນ, ກັບຮອງອົງກອນທຳຄວາມສະອາດ ແລະ ຫົວໜ້າໂຄງການປັບປຸງສິ່ງແວດລ້ອມ ນະຄອນຫລວງວຽງຈັນ. ການເດີນສັງເກດຕາມບ້ານ

ແມ່ນເພື່ອຊອກຫາຄວາມຊື້ນເຄີຍຂອງ ຊາວບ້ານ ກ່ຽວກັບສຸຂະອານະໄມ, ການເລາະສັງເກດ ແມ່ນໄດ້ປະຕິບັດທັງຕອນກາງເວັນ ແລະ ກາງຄືນ, ພິເສດຍັງໄດ້ເລາະຕິດຕາມ ໃນໄລຍະທີ່ຝົນຕົກ ເພື່ອບັນທຶກ ບັນຫາກ່ຽວກັບລະບົບລະບາຍນໍ້າ ແລະສະພາບນໍ້າຖ້ວມໃນບ້ານ, ພ້ອມທັງໄດ້ຖ່າຍຮູບ ໄວ້ເປັນຫລັກຖານ ເພື່ອຄົ້ນຄ້ວາຕໍ່ໄປ.

## ການຄົ້ນພົບໃນການວິເຄາະຂໍ້ມູນ

ອີງຕາມການວິເຄາະຂໍ້ມູນ ທີ່ໄດ້ສໍາຫລວດມາຈາກແຕ່ລະຫລັງຄາເຮືອນ ເຫັນວ່າຜູ້ທີ່ອາໄສຢູ່ໃນຊຸມຊົນ ດັ່ງກ່າວບໍ່ມີຄວາມພໍໃຈກັບສະພາບສຸຂະອະນາໄມຂອງບ້ານ, ມີພຽງແຕ່ນໍ້າປະປາທີ່ດີກວ່າ, ສ່ວນອັນອື່ນແມ່ນ ບໍ່ສາມາດບໍລິການ ໄດ້ຕາມທີ່ຂະເຈົ້າຄາດຫວັງໄວ້, ນໍ້າປະປາເຖິງວ່າໄດ້ປັບປຸງ ໃນປັດຈຸບັນ ແຕ່ກໍ່ຍັງບໍ່ສາມາດບໍລິການໄດ້ຢ່າງທົ່ວເຖິງ (ເບິ່ງໃນຕາຕະລາງ ທີ 1).

**ຕາຕະລາງທີ່ 1: ຄວາມຄິດເຫັນຂອງຜູ້ຕອບສໍາພາດກ່ຽວກັບສະພາບສຸຂະອານະໄມ**

| ສ່ວນປະກອບຂອງສຸຂະອານະໄມ | ບໍ່ພໍໃຈຫລາຍ | ບໍ່ພໍໃຈ | ພໍໃຈແດ່ | ພໍໃຈ | ພໍໃຈຫລາຍ |
|---|---|---|---|---|---|
| ການກໍາຈັດອາຈົມ | 1% | 77% | 13% | 6% | 3% |
| ການກໍາຈັດນໍ້າເສຍຈາກຄົວເຮືອນ | 11% | 75% | 4% | 7% | 3% |
| ການກໍາຈັດຂີ້ເຫຍື້ອ | 2% | 33% | 31% | 28% | 6% |
| ການລະບາຍນໍ້າຝົນ | 1% | 57% | 26% | 8% | 8% |
| ການກໍາຈັດຍຸງ | | 50% | 38% | 7% | 5% |
| ນໍ້າປະປາ | 1% | 2% | 4% | 53% | 40% |
| ລວມ | 1% | 46% | 32% | 20% | 1% |

**sewage containing faecal matter; †wastewater from kitchens, baths and laundries*

ດັ່ງຕາຕະລາງທີ 1 ໄດ້ສະແດງໃຫ້ເຫັນວ່າ ບຸລິມະສິດທີ່ສູງທີ່ສຸດ ແມ່ນລະບົບການກໍາຈັດອາຈົມ. ໃນປະຈຸບັນ 67% ຂອງຈໍານວນຫລັງຄາເຮືອນຍັງ ນໍາໃຊ້ການບໍາບັດຕາມໃຕ້ດິນ, ມີພຽງແຕ່ 37% ຂອງຈໍານວນຫລັງຄາເຮືອນທີ່ໄດ້ນໍາໃຊ້ ຊຸມວິດທີ່ໄດ້ມາດຕະຖານ. ສາຍເຫດ ທີ່ພາໃຫ້ມີລະບົບ ສຸຂະອະນາໄມ ບໍ່ໄດ້ມາດຖານແມ່ນມາຈາກ 2 ສາຍເຫດຄື: ອັນທີໜຶ່ງປະຊາຊົນສ່ວນຫລາຍ ຍັງມີ ຄວາມຮັບຮູ້ຕໍ່າ ກ່ຽວກັບສຸຂະອະນາໄມ ແລະ ມາດຖານຂອງຄວາມສະອາດຈໍາເປັນຕ້ອງ ມີແບບຢ່າງ ໃຫ້ເຂົາເຈົ້າ, ຊຶ່ງເຫັນວ່າເຂົາເຈົ້າຍັງວາງອາຫານແລະ ແຕ່ງກິນຢູ່ໃກ້ກັບຫ້ອງນໍ້າທີ່ບໍ່ສະອາດ. ສາຍເຫດທີ່ສອງ ເຖິງວ່າເຂົາເຈົ້າມີຄວາມຮັບຮູ້ກໍ່ຕາມ ແຕ່ເຂົາກໍ່ຍັງມີຄວາມຫຍຸ້ງຍາກ ໃນການຈ່າຍ ເງິນເພື່ອກໍ່ສ້າງຫ້ອງນໍ້າທີ່ສະອາດ ແລະ ລະບົບກໍາຈັດອາຈົມແບບເປັນຈຸດ. ເຖິງແນວໃດກໍ່ຕາມ ເມື່ອໄດ້ນໍາສະເໜີການກໍາຈັດແບບເປັນໝວດຫລັງຄາເຮືອນ, ແບບບໍາບັດເປັນອ່າງໃຫຍ່ ແລະ ການບໍາບັດແບບເປັນຄົວເຮືອນເພື່ອແກ້ໄຂບັນຫາ, ແຕ່ສ່ວນຫລາຍແລ້ວ ແມ່ນເລືອກເອົາແບບ ເປັນໜ່ວຍຫລັງຄາເຮືອນ (ເບິ່ງຮູບສະແດງທີ 1). ສ່ວນຫລາຍເກືອບ 90% ຂອງຜູ້ຖືກສໍາພາດເຫັນດີ

ຈ່າຍເງິນຂອງຕົນເອງ ເພື່ອກໍ່ສ້າງຫ້ອງນ້ຳທີ່ສະອາດ ຖ້າຫາກວ່າການບຳບັດແບບເປັນໜ່ວຍຫລັງຄາເຮືອນຫາກຂະຫຍາຍເຖິງພວກເຂົາ. ພຽງແຕ່ 16% ຂອງຫົວໜ້າຄອບຄົວ ທີ່ເຫັນດີຈະຮ່ວມຈ່າຍໃນລາຄາທີ່ບຳບັດເປັນໜ່ວຍຂອງບ້ານ: ສ່ວນຫລາຍຍັງຄິດວ່າ ນີ້ແມ່ນຄວາມຮັບຜິດຊອບຂອງກຳແພງນະຄອນ ຊຶ່ງຈະເປັນຜູ້ຂະຫຍາຍລະບົບ ທີ່ຮັບເອົາໄດ້ໃຫ້ແກ່ບ້ານຂອງເຂົາເຈົ້າ.

**ຕາຕະລາງທີ່ 2. ບຸລິມະສິດຂອງລະບົບສຸຂະອານະໄມ**

| ລ/ດ | ລະບົບສຸຂະອານະໄມ | ອັນດັບ |
|---|---|---|
| 1 | ການກຳຈັດອາຈົມ | 1 |
| 2 | ການກຳຈັດນ້ຳເສຍຈາກຄົວເຮືອນ | 2 |
| 3 | ການກຳຈັດຂີ້ເຫຍື້ອ | 3 |
| 4 | ການລະບາຍນ້ຳຝົນ | 4 |
| 5 | ການກຳຈັດຍຸງ | 5 |
| 6 | ນ້ຳປະປາ | 6 |

**ຮູບສະແດງທີ 1. ການເລືອກວິທີກຳຈັດອາຈົມ**




ໃນການປຶກສາຫາລືກັບການຈັດຕັ້ງບ້ານ ສະແດງໃຫ້ເຫັນວ່າຖ້າຫາກວ່າບ້ານຂອງເຂົາເຈົ້າຖືກເລືອກໃຫ້ເຮັດເປັນໂຄງການທົດລອງ, ພວກເຂົາສາມາດປະກອບສ່ວນ ເຕັມທີ່ເຂົ້າໃນການປັບປຸງສຸຂະອະນາໄມ. ມີຄວາມຍິນດີຈ່າຍຄ່າຊົມໃຊ້ໃນແຕ່ລະເດືອນສຳລັບການບໍລິການເຊັ່ນ: ນ້ຳປະປາ, ການເກັບມ້ຽນຂີ້ເຫຍື້ອ ແລະ ການບຳບັດນ້ຳເສຍສູງເຖິງ 97%. ໂດຍທົ່ວໄປສ່ວນຫລາຍຜູ້ຖືກສຳພາດຖ້າບໍ່ສາມາດຈ່າຍເງິນຄ່າກໍ່ສ້າງ, ແຕ່ຈະປະກອບສ່ວນເປັນແຮງງານກໍ່ສ້າງ ແລະ ຮັບຜິດຊອບໃນການສ້ອມແປງ. ເກືອບ 75% ຂອງຜູ້ຖືກສຳພາດຈະປະກອບສ່ວນໃນການກໍ່ສ້າງເປັນເງິນຈຳນວນ 100.000 ກີບ ຖ້າຫາກການກະຈາຍລະບົບ ແບບເປັນໜ່ວຍຂອງບ້ານ ຫາກຖືກປະຕິບັດ (ເບິ່ງຢູ່ໃນຮູບສະແດງຜົນ 2). ນີ້ສະແດງໃຫ້ເຫັນວ່າການປັບປຸງລະບົບສຸຂະອະນາໄມ ດ້ວຍການປະກອບສ່ວນ

ໃນການກໍ່ສ້າງ ແມ່ນສາມາດປະຕິບັດໄດ້ຢູ່ໃນບ້ານນີ້. ເຫັນວ່າມີຜົນດີດ້ວຍວິທີການປະກອບສ່ວນຂອງຊຸມຊົນເຮັດໃຫ້ປະຊາຊົນ ມີຄວາມຮັບຜິດຊອບໃນການປັບປຸງ ແລະ ບູລະນະຊີວິດການເປັນຢູ່ໃນສະພາບແວດລ້ອມ ແລະ ຄວາມສະອາດຢູ່ໃນຕົວຈິງຂອງພວກເຂົາ.

__ຮູບສະແດງຜົນ 2. ຈຳນວນເງິນທີ່ສາມາດຈ່າຍສຳລັບໂຄງການ__




*Source: Questionnaire Survey, February 2004*

ຕາມການວິເຄາະທີ່ເໝືອນກັນ ຂອງຄວາມເປັນໄປໄດ້ຂອງ ການກະຈາຍລະບົບບຳບັດນ້ຳເສຍ (ອາຈົມ ແລະ ນ້ຳເສຍຈາກຄົວເຮືອນ) ຊຶ່ງສະແດງໃຫ້ເຫັນວ່າ ການນຳໃຊ້ການປະກອບສ່ວນ ແລະ ການຮ່ວມໃຊ້ຈ່າຍໂດຍສະເພາະ. ແນວໃດກໍ່ຕາມສຳລັບການກຳຈັດຂີ້ເຫຍື້ອ ແລະ ການລະບາຍນ້ຳຝົນຕາມການວິເຄາະຂໍ້ມູນ ແລະ ຕາມແນວຄິດຂອງຊາວບ້ານຄວນ ແມ່ນຄວາມຮັບຜິດຊອບຂອງອຳນາດການປົກຄອງທ້ອງຖິ່ນ.

## ສະຫລຸບ

ການກະຈາຍລະບົບສຸຂະອະນາໄມ ແມ່ນມີຄວາມເໝາະສົມສຳລັບປະເທດ ກຳລັງພັດທະນາ ເພາະວ່າມັນແມ່ນວິທີການແກ້ໄຂເຕັກໂນໂລຊີ ທີ່ເໝາະສົມທີ່ສາມາດຄຸ້ມຄອງ ແລະ ນຳໃຊ້ດ້ວຍຕົນເອງ. ຊຶ່ງເຫັນວ່າມີຄວາມຫຍຸ້ງຍາກ ສຳລັບປະເທດລາວ ທີ່ຈະຊອກຫາທຶນອັນມະຫາສານ ໃນການນຳໃຊ້ລະບົບລວມໃຫຍ່ ເໝືອນດັ່ງປະເທດທີ່ໄດ້ພັດທະນາແລ້ວ. ໃນປະຈຸບັນການປົກຄອງ ຂອງລາວໄດ້ມີການຫັນປ່ຽນ ຈາກສູນການຫັນລົງສູ່ທ້ອງຖິ່ນ ໂດຍຫັນເອົາແຂວງເປັນຫົວໜ່ວຍແຜນການ, ເມືອງເປັນຫົວໜ່ວຍງົບປະມານ ແລະ ບ້ານເປັນບ່ອນຈັດຕັ້ງປະຕິບັດການພັດທະນາ. ການປ່ຽນແປງດັ່ງກ່າວ ແມ່ນຮຽກຮ້ອງໃຫ້ຊຸມຊົນຕ້ອງ ໄດ້ປະກອບສ່ວນໃນການຈັດຕັ້ງປະຕິບັດ ຈາກທີ່ ເປັນແຕ່ຮັບການຊ່ວຍເຫລືອຈາກລັດ ຫລື ອົງການຈັດຕັ້ງອື່ນໆນຳມາຊ່ວຍໃຫ້. ໃນການສຳຫລວດສະແດງໃຫ້ເຫັນວ່າຕາມແນວຄິດຕົວຈິງ ເຮັດໃຫ້ພວກເຂົາຢາກມີສ່ວນຮ່ວມ ໃນການພັດທະນາ

ແຕ່ຄວາມສາມາດຂອງຊຸມຊົນອາດມີຂີດຈຳກັດ ທີ່ຈະເພີ່ມທະວີການມີສ່ວນຮ່ວມຂອງພວກເຂົາ.

ນະໂຍບາຍພັດທະນາຕົວເມືອງ ແລະ ຮັກສາສິ່ງແວດລ້ອມຂອງ ສປປ ລາວ ແມ່ນແນໃສ່ກະຈາຍການປົກຄອງ ແລະ ການກະຈາຍການແກ້ໄຂບັນຫາໂຄງລ່າງ, ໂດຍການແບ່ງຄວາມຮັບຜິດຊອບຈາກລັດຖະບານ ລົງສູ່ອຳນາດການປົກຄອງທ້ອງຖິ່ນ ແລະ ການຈັດຕັ້ງຂອງຊຸມຊົນ. ນີ້ສະແດງໃຫ້ເຫັນວ່າ ແນວຄວາມຄິດຂອງການສ້າງການກະຈາຍ ລະບົບສຸຂະອານະໄມ ລົງສູ່ຊຸມຊົນທີ່ມີການບໍລິການຍັງບໍ່ພຽງພໍ ແມ່ນບໍ່ພຽງແຕ່ເປັນການທົດລອງສຶກສາ ເທົ່ານັ້ນ ແຕ່ກໍ່ເປັນວິທີທາງເລືອກທີ່ດີ ໃນການແກ້ໄຂບັນຫາ ຂອງອຳນາດການປົກຄອງອີກດ້ວຍ. ພາກສ່ວນມູນຄ່າບູລະນະ ແລະສ້ອມແປງສາມາດ ເກັບຄືນໄດ້ນຳຜູ້ຊົມໃຊ້ ແຕ່ສຳລັບມູນຄ່າກໍ່ສ້າງຊຸມຊົນ ຈະສາມາດປະກອບໄດ້ສ່ວນໃດໜຶ່ງ. ນີ້ສະແດງວ່າອຳນາດການປົກຄອງ ທ້ອງຖິ່ນຄວນນຳໃຊ້ນະໂຍບາຍເຂົ້າໃນການປັບປຸງສິ່ງແວດລ້ອມ ແລະ ສືບຕໍ່ລົງທຶນໃສ່ການນຳໃຊ້ ຂອງສາທາລະນະ ແລະ

---

*ນະຄອນຫຼວງວຽງຈັນ, ການຮ່ວມກັນລະຫວ່າງລັດ ແລະ ເອກະຊົນຍັງບໍ່ທັນໄດ້ດີເທົ່າ ທີ່ຄວນ ເໝືອນກັບບາງປະເທດໃກ້ຄຽງ.*

---

ເຮັດໃຫ້ຊຸມຊົນມີຄວາມສີວິໄລ. ຄວນເລີ່ມຈາກຊຸມຊົນທີ່ມີປະຊາຊົນ ທຸກຈົນອາໃສຢູ່ຫລາຍ, ນະຄອນຫລວງວຽງຈັນ ໃນຕົວຈິງການຮ່ວມກັນລະຫວ່າງລັດ ແລະ ເອກະຊົນຍັງບໍ່ທັນໄດ້ດີເທົ່າທີ່ຄວນເໝືອນກັບບາງປະເທດ. ແນວຄວາມຄິດໃນການຫັນເອົາປະຊາຊົນ ເປັນຈຸດໃຈກາງ ໃນການປັບປຸງລະບົບສຸຂະອານະໄມສຳລັບຊຸມຊົນ ທີ່ມີການບໍລິການຍັງບໍ່ທົ່ວເຖິງ ແມ່ນມີຄວາມເໝາະສົມ ແລະ ເປັນໄປໄດ້ຖ້າຫາກວ່າການປູກຈິດສຳນຶກ ຫາກໄດ້ມີການຍົກສູງຂຶ້ນ ການແກ້ໄຂບັນຫາຄວນແມ່ນອຳນາດການປົກຄອງທ້ອງຖິ່ນ. ສິ່ງສຳຄັນທີ່ສຸດ ອຳນາດການປົກຄອງທ້ອງຖິ່ນ ຕ້ອງເຮັດຢ່າງຈິງຈັງ ເພື່ອເຮັດໃຫ້ການປັບປຸງສິ່ງແວດລ້ອມ ມີຄວາມຍືນຍົງ ໃນເວລາຈັດຕັ້ງປະຕິບັດ, ບຸລະນະສ້ອມແປງ ແລະ ການຄຸ້ມຄອງ ຂອງການກະຈາຍລະບົບສຸຂະອະນາໄມ. ເປົ້າໝາຍສູ້ຊົນຂອງສະຫະສັດຕະວັດທີ 21 ຂໍ້ທີ 7 ຮຽກຮ້ອງ[2] :

- ຫັນເອົາການພັດທະນາແບບຍືນຍົງ ເຂົ້າໃນນະໂຍບາຍຂອງປະເທດ ແລະແຜນງານ; ຮັກສາການສູນເສຍຊັບພະຍາກອນສິ່ງແວດລ້ອມ.
- ຫລຸດຜ່ອນອັດຕາສ່ວນ ຂອງປະຊາກອນທີ່ຂາດນ້ຳສະອາດດື່ມໃຫ້ໄດ້ເຄິ່ງໜຶ່ງ.
- ບັນລຸການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ໃນຊຸມຊົນແອອັດໃຫ້ດີຂຶ້ນ ຢ່າງໜ້ອຍໃຫ້ໄດ້ 100 ລ້ານ ເຂດຊຸມຊົນແອອັດ ( ສະລຳ ) ໃນປີ 2020.

ນີ້ແມ່ນຄວາມເຊື່ອໝັ້ນຢ່າງແຂງແຮງ ແລະ ດີ" ການບໍລິການ ແລະ ຜົນຜະລິດສິ່ງ ແວດລ້ອມຊຶ່ງຈະນຳໄປເຖິງການພັດທະນາມະນຸດ ແບບຍືນຍົງ, ດັ່ງນັ້ນປະຊາຊົນຕ້ອງຮັບປະກັນ ການພັດທະນາ

2 ເປົ້າໝາຍສູ້ຊົນຂອງສະຫະສັດຕະວັດທີ 21 ຂອງອົງການສະຫະປະຊາຊາດ (MDG) http://www.un.org/millenniumgoals/

ໃຫ້ຍືນຍົງ, ຮັກສາສິ່ງແວດລ້ອມ, ຄຸ້ມຄອງຊັບພະຍາກອນທຳມະຊາດໃຫ້ດີຂຶ້ນ ເພື່ອສະໜອງ ລາຍຮັບ ແລະ ອາຫານໃຫ້ແກ່ປະຊາຊົນຜູ້ທຸກຈົນ[3]". ໃນບົດຄົ້ນຄ້ວານີ້ເຫັນວ່າ ການກະຈາຍລະບົບ ສຸຂະອະນາໄມ ກໍ່ເປັນການຮັບປະກັນຄວາມສະອາດ ທີ່ໄດ້ມາດຕະຖານ ແຕ່ການລົງທຶນບໍ່ສູງ, ເປັນວິທີເຮັດໃຫ້ສະພາບແວດລ້ອມຍືນຍົງ, ທັງເປັນການປະຢັດນ້ຳ, ພະລັງງານ ແລະ ເປັນການຮັກສາ ຄຸນນະພາບ ຂອງດິນໃຫ້ດີ ເພື່ອເປັນການເພີ້ມສະມັດຕະພາບກະສິກຳຢູ່ໃນຊຸມຊົນ.

ນີ້ເຊື່ອວ່າໂຄງການທົດລອງ ຈະມີຜົນດີໃຫ້ແກ່ການສຶກສາ ຊຶ່ງການຈັດຕັ້ງຂອງລັດ ແລະປະຊາຊົນ ທ້ອງຖິ່ນ ສາມາດຮຽນໃນຕົວຈິງ ດ້ວຍວິທີພັດທະນາຮ່ວມກັນລະຫວ່າງລັດ ແລະ ຊຸມຊົນ, ຖ້າຫາກວ່າ ໂຄງການນີ້ ປະສົບຜົນສຳເລັດຢ່າງໜ້າເພິ່ງພໍໃຈ, ຈະເປັນບົດຮຽນໃຫ້ແກ່ໂຄງການ ອື່ນສາມາດນຳ ໄປປະຕິບັດໃນຕົວເມືອງອື່ນ. ໂຄງການເລີ້ມຕົ້ນຄວນນຳໃຊ້ເຕັກນິກທີ່ງ່າຍດາຍ ແລະ ຮຽກຮ້ອງ ໃຫ້ມີການປະກອບສ່ວນ ຂອງປະຊາຊົນໃນທ້ອງຖິ່ນ ເພື່ອຫລຸດຜ່ອນທຶນຊ່ວຍເຫລືອຈາກຂ້າງນອກ. ໝັ້ນໃຈວ່າໂຄງການທີໜຶ່ງນີ້ ຈະສຳເລັດໃນອານາຄົດອັນໃກ້, ແລະຈະເປັນການກະຕຸ້ນ ໃຫ້ປະຊາຊົນ ຈົດຈຳຄວາມສາມະຄີກັນ ຂອງພວກເຂົາ. ຜົນໄດ້ຮັບຂອງໂຄງການ ແມ່ນມີຄວາມສຳຄັນຫລາຍ ໃນການກະຕຸ້ນປະຊາຊົນເຂົ້າ ມີສ່ວນຮ່ວມໃນການແກ້ໄຂບັນຫາ ໂດຍອາໄສບົດບາດການ ຈັດຕັ້ງ ຂອງລັດ.

ຄາດໝາຍຜົນໄດ້ຮັບຈາກໂຄງການ:

- ປັບປຸງລະບົບສຸຂະອະນາໄມ, ສະພາບແວດລ້ອມດີຂຶ້ນ ແລະເປັນການຫລຸດຜ່ອນ ການຈ່າຍ ຄ່າຢາປິ່ນປົວພະຍາດ ແລະ ເຮັດໃຫ້ຜົນຜະລິດຂອງຄອບຄົວເພີ່ມຂຶ້ນ.
- ເຂດພັກຜ່ອນໃນບ້ານໄດ້ກ້ວາງອອກ, ປັບປຸງກາລະໂອກາດໃນການທຳກິດຈະກຳຢູ່ໃນຊຸມຊົນ.
- ປະຊາຊົນຈະຮັບຮູ້ເຖິງບັນຫາການປັບປຸງສະພາບແວດລ້ອມພາຍໃນບ້ານຂອງພວກເຂົາ ແລະ ຈະອະທິບາຍຄວາມຮັບຮູ້ນີ້ໃຫ້ແກ່ຊຸມຊົນອື່ນ
- ການພັດທະນາຊັບພະຍາກອນມະນຸດ ຈະໄດ້ມີການສົ່ງເສີມຢູ່ພາຍໃນປະຊາຊົນທ້ອງຖິ່ນ, ກຳມະການຂອງບ້ານ ແລະພະນັກງານຂັ້ນເມືອງ.

ການປັບປຸງລະບົບສຸຂະອະນາໄມ ຄວນປະຕິບັດໄລຍະສັ້ນ ແລະ ໄລຍະຍາວ. ສ່ວນການກະຈາຍ ລະບົບສຸຂະອານະໄມ ໄດ້ເຫັນແຈ້ງແລ້ວວ່າ ປະຊາຊົນທ້ອງຖິ່ນຈະປະກອບສ່ວນ ເປັນເງິນ ແລະ ແຮງງານແລະ ສ່ວນທີ່ເຫລືອຈຶ່ງຄວນ ແມ່ນລັດຈະຊ່ວຍເຫລືອໃຫ້. ເພື່ອປະຕິບັດແຜນການ ໃຫ້ມີປະສິດທິພາບ ແລະ ໄດ້ຮັບຜົນດີຊຶ່ງໄດ້ສົມທົບກັບແຫລ່ງທຶນ ຈາກທ້ອງຖິ່ນ ສິ່ງສຳຄັນທີ່ສຸດ ແມ່ນຄວາມຮັບຜິດຊອບ ຂອງຜູ້ນຳໄປປະຕິບັດ ຕ້ອງໃຫ້ຈະແຈ້ງແຕ່ລະຂັ້ນຕອນ ແລະຜູ້ຮັບຜິດຊອບ ແຕ່ລະຂັ້ນຕ້ອງມີຄວາມຮັບຜິດຊອບສູງເຊັ່ນວ່າ: ຄອບຄົວ,ໜ່ວຍຂອງບ້ານ, ການຈັດຕັ້ງຂອງບ້ານ, ເມືອງ ແລະ ກຳແພງນະຄອນ.

3 ເປົ້າໝາຍສູ້ຊົນຂອງສະຫະສັດຕະວັດທີ 21, http://www.developmentgoals.org/Environment.htm#chartforest

### ຄຳແນະນຳ

ການປະກອບສ່ວນ ໃນການກະຈາຍລະບົບສຸຂະອະນາໄມ ແມ່ນແນວຄວາມຄິດອັນໃໝ່ຢູ່ລາວ, ແຕ່ຫວັງວ່າຫລັງຈາກປະສົບຜົນສຳເລັດຂອງ ໂຄງການທົດລອງຢູ່ບ້ານທົ່ງຂັນຄຳເໜືອນີ້ແລ້ວ, ໂຄງການອື່ນ ທີ່ຕ້ອງການແກ້ໄຂບັນຫາທີ່ຄ້າຍຄືກັນ ຈະສາມາດນຳໄປປະຕິບັດ ໃນທຸກຂົງເຂດຕົວເມືອງ. ເຖິງແນວໃດກໍ່ຕາມຄວາມຕ່າງກັນ ທາງດ້ານສະພາບວັດຖຸ, ເງື່ອນໄຂທາງດ້ານເສດຖະກິດ ແລະ ຄວາມຊິນເຄີຍຂອງປະຊາຊົນນັ້ນ ຄວນຈະມີການສຶກສາຄົ້ນຄ້ວາໃໝ່ ແລະ ຄວນຈະປະຕິບັດກ່ອນການຈັດຕັ້ງປະຕິບັດໂຄງການ. ອີກດ້ານໜຶ່ງການປັບປຸງການ ຈັດຕັ້ງຄວນຈະມີການສຶກສາຢ່າງເລິກເຊິ່ງ ເພາະວ່າມີຄວາມຈຳເປັນໃນການກຳນົດ ພາລະບົດບາດຢ່າງລະອຽດ ແລະ ຄວາມຮັບຜິດຊອບຂອງແຕ່ລະການຈັດຕັ້ງ ເພື່ອພັດທະນາບ້ານ. ວິທີການນີ້ສາມາດສາມາດ ສ້າງຄວາມເຂັ້ມແຂງຂອງຜູ້ຮ່ວມງານທັງເປັນການຫລຸດຜ່ອນ ຄວາມຮັບຜິດຊອບ ຈາກສູນກາງ ແລະ ກຳແພງນະຄອນ ໃນການປັບປຸງລະບົບສຸຂະອະນາໄມ ແລະທັງເຮັດໃຫ້ໂຄງການ ມີຄວາມຍືນຍົງຕະຫລອດໄປ.

### ກ່ຽວກັບຜູ້ຂຽນ

ໂລນຄຳ ອາດສະນາວົງ ໄດ້ຮຽນຈົບປະລິນຍາໂທ ດ້ານຄຸ້ມຄອງສະພາບແວດລ້ອມຕົວເມືອງ ແລະຜັງເມືອງ. ລາວໄດ້ມີຄວາມຕິດພັນກັບວຽກຜັງເມືອງ ແລະປະສານງານ ຢູ່ໂຄງການປັບປຸງສິ່ງແວດລ້ອມ ກຳແພງນະຄອນ ຈົນເຖິງປີ 2004. ໃນປະຈຸບັນລາວໄດ້ເຮັດວຽກ ຢູ່ພະແນກພັດທະນາຊັບພະຍາກອນແຫລ່ງນ້ຳ ຂອງຄະນະກຳມະການແມ່ນ້ຳຂອງແຫ່ງຊາດລາວ.

ຮານຈິດ ເປເຣຣາ ແລະ ທຳມະລາດ ກຸຕາເຕັບທັງສອງ ເຮັດວຽກຢູ່ໂຮງຮຽນ ພັດທະນາຊັບພະຍາກອນສິ່ງແວດລ້ອມ ຢູ່ທີ່ສະຖາບັນເຕັກໂນໂລຊີແຫ່ງອາເຊຍ (ເອໄອທີ), ບາງກອກ, ປະເທດໄທ.

### ເອກະສານອ້າງອີງ

ອານໂຊເຣນາ, ອີ ເຈ (1993), ເຄຫາສະຖານຂອງຄວາມທຸກຍາກ: ບົດຮຽນຂອງອາຊີ: ການຮວມກັນຂອງອາຊີ ເພື່ອສິດທິທາງດ້ານເຄຫາສະຖານ, ຊີບູ, ຟີລິບປິນ.

ດູລັສ, ບີ, ( 1998), ວິທີການກະຈາຍແລະ ການຟື້ນຟູການແກ້ໄຂການຄຸ້ມຄອງນ້ຳເປື້ອນຂອງຊຸມຊົນ. ດັບເບີນຢູ ຄີວ ໄອ ກຸມພາ.

ໄອເທີເບກ, ເອ., ແລະ ມາລິນ,ເບ.,( 1990), ສຸຂະອະນາໄມລາຄາຖືກ: ຄວາມສຳຄັນຂອງການມີສຸຂະອະນາໄມທີ່ດີ. ບາງກອກ ປະເຣດ. ເລນສ, ພີ., ຊີແມນ, ຈີ., ແລະ ເລດຕີງ, ຈີ., (2001), ການກະຈາຍສຸຂະອະນາໄມ ແລະ ການນຳໃຊ້ຄືນ: ຜົນໄດ້ຮັບຂອງການກະຈາຍລະບົບ. ໄອ ດັບເບີນຢູ ເອ ພັບບະລິດຊີງ.

ປາທິລານາ, ວີ., ແລະ ແສງ, ວາຍ, ເຄ(1992), ລະບົບສັນຍາຂອງຊຸມຊົນຢູ່ສີລັງກາ : ວິທີການຟື້ນຟູ

ສຳລັບການຈັດ ສິ່ງການບໍລິການ ໃຫ້ແກ່ຕົວເມືອງທຸກຍາກ. ທາບິຕາ ອິນເຕີນາໂຊນານ. ເຫລັ້ມ 16, ນ້ຳເບີ 4. ໜ້າ 3- 14.

ຊູເບີເລີ. ພີ., ( 1996), ການປະກອບສ່ວນ ແລະ ການເຂົ້າຮ່ວມໃນການຄຸ້ມຄອງໂຄງລ່າງຕົວເມືອງ, ວໍຊິງຕັນ, ດີ. ຊີ, 101.

ວຽດ, ເອ. ເອນເນີ., ຣາ. ດີ., ຍູອີ. ໂມເຣນ. ເອ., ມູຣາ ເອມເມີ., (2003). ການກະຈາຍລະບົບບຳບັດນ້ຳເສຍ - ແນວຄວາມຄິດໃໝ່ ແລະ ເຕັກໂນໂລຊີສຳລັບເຖື່ອນໄຂຂອງຫວຽດນາມ. ກອງປະຊຸມສາກົນຄັ້ງທີ 2 ກ່ຽວກັບລະບົບນິເວດສຸຂະອະນາໄມ, ລູເບກ, ເຍຍລະມັນ.

ດັບເບີນຢູອີດີຊີ, (2000), ແຜນຍຸດທະສາດສຳລັບສຸຂະອະນາໄມ ໃນຕົວເມືອງ. ສູນວິສະວະກອນກ່ຽວກັບນ້ຳ ແລະ ການພັດທະນາ.ຈີ ເຣສ ເຄ ຄົ້ນຄ້ວາ ແລະ ຝຶກອົບຮົມ ຈຳກັດ.

ດັບເບີນຢູເອສເອສຊີຊີ, (1999), ບົດລາຍງານຂອງການຝຶກອົບຮົມ ທີ່ຮົນເຕີຟີນເກນກ່ຽວກັບສຸຂະອະນາໄມສິ່ງແວດລ້ອມ ໃນສັດຕະວັດທີ 21. ຄອບຄົວເປັນຈຸດໃຈກາງ ຂອງການຮັກສາສຸຂະອານະໄມສິ່ງແວດລ້ອມ.

# ກະເສດສວນຄົວໃນ ສ.ປ.ປ. ລາວ - ການເຊື່ອມໂຍງກັນລະຫວ່າງ ຄວາມອຸດົມສົມບູນທາງດ້ານຊີວະການກະເສດ ແລະ ຄວາມພຽງພໍ ຂອງອາຫານ

**Pernille M. Dyg and Saleumsy Phithayaphone**

*ອົງການອາຫານ ແລະ ການກະເສດໂລກໄດ້ພັດທະນາຄອບຄົວຕົວແບບ ໂດຍອີງໃສ່ລະບົບການຜະລິດກະສິກຳແບບປະສົມປະສານ. ກະເສດສວນຄົວເຫຼົ່ານີ້ ປະກອບມີການໃຫ້ຄວາມຮູ້ດ້ານໂພຊະນາການ, ຊຶ່ງມັນຈະເປັນການຫຼຸດຜ່ອນການຂາດສານອາຫານໃນເດັກທີ່ມີອາຍຸຕ່ຳກວ່າ 5 ປີ, ແລະ ການຊົມໃຊ້ເຄື່ອງປ່າຂອງດົງ. ກະເສດສວນຄົວ ແມ່ນບ່ອນສຳລັບປູກພືດພັນຊະນິດຕ່າງໆ ແລະ ມີຄວາມສຳຄັນໃນດ້ານການອະນຸລັກແນວພັນ ແລະ ການນຳເອົາແນວພັນພືດຈາກປ່າ ມາປູກໃນບ້ານຄົນ. ຊີວະສາດນາໆພັນ ສາມາດພົບເຫັນໄດ້ໃນສວນດັ່ງກ່າວ ຊຶ່ງເອື້ອອຳນວຍໃຫ້ຫຼາຍຄອບຄົວສາມາດ ເລືອກບໍລິໂພກອາຫານໂພຊະນາການເຫຼົ່ານີ້ໄດ້ຕາມຄວາມຕ້ອງການ, ສະນັ້ນຈຶ່ງຖືໄດ້ວ່ານີ້ເປັນການສະໜອງອາຫານທີ່ພຽງພໍ, ໂພຊະນາການ ແລະ ລາຍໄດ້ທີ່ດີກວ່າ. ອົງປະກອບຢ່າງໜຶ່ງຂອງໂຄງການຄວາມອຸດົມສົມບູນທາງດ້ານຊີວະການເສດແຫ່ງຊາດທີ່ໄດ້ສະເໜີໄປ ຊຶ່ງໄດ້ຮັບການພັດທະນາໂດຍ ອົງການອາຫານ ແລະ ການກະເສດໂລກ, ອົງການສະຫະປະຊາຊາດເພື່ອການພັດທະນາ ແລະ ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ແຫ່ງຊາດ, ຊຶ່ງຈະໄດ້ພັດທະນາກະເສດສວນຄົວສືບຕໍ່ໄປ ເພື່ອສະໜັບສະໜູນວຽກງານການປັບປຸງຄວາມພຽງພໍຂອງອາຫານ ແລະ ໂພຊະນາການໃນລະດັບຄົວເຮືອນ.*

ແບບຢ່າງກະເສດສວນຄົວດັ່ງກ່າວນີ້ ຈະຊ່ວຍໃຫ້ຊາວບ້ານປັບປຸງຜົນຜະລິດຜັກ, ໝາກໄມ້ ແລະ ສັດລ້ຽງຂອງເຂົາເຈົ້າໃຫ້ດີຂຶ້ນ, ແລະ ຍັງສາມາດຍົກລະດັບຊີວິດການເປັນຢູ່ ຂອງຄົນໃນຊົນນະບົດ, ເພີ່ມທະວີຄວາມອຸດົມສົມບູນຂອງອາຫານ ແລະ ສະພາບໂພຊະນາການ ຂອງປະຊາກອນໃຫ້ສູງຂຶ້ນ. ຍ້ອນມີໂອກາດສຳຄັນ ໃນການເຮັດກະເສດສວນຄົວ, ຈຶ່ງມີຄວາມຈຳເປັນທີ່ຈະຕ້ອງໄດ້ຂະຫຍາຍ ແລະ ປັບປຸງ ການເຮັດກະເສດສວນຄົວຕົວແບບ ໃນ ສປປ ລາວ ໃຫ້ດີຂຶ້ນ ເພື່ອປະກອບສ່ວນຮັບປະກັນ ໃຫ້ມີອາຫານພຽງພໍ, ຫຼຸດຜ່ອນຄວາມທຸກຍາກ ແລະ ອະນຸລັກຄວາມອຸດົມສົມບູນຂອງຊີວະການກະເສດຂອງປະເທດ

ສປປ ລາວ ເຮົາຖືໄດ້ວ່າເປັນໜຶ່ງ ໃນ "ຈຸດສູນກາງຂອງຕົ້ນກຳເນີດ" ຂອງໂລກແຫ່ງພືດ ແລະ ສັດທີ່ຄົນນຳມາປູກ ຫຼື ລ້ຽງໃນບ້ານ, ເປັນໜຶ່ງໃນສິບພື້ນທີ່ ທີ່ມີຄວາມອຸດົມສົມບູນ ທີ່ສຸດທາງດ້ານຊີວະສາດຂອງໂລກ (Vavilov 1940). ກະເສດສວນຄົວແມ່ນເປັນສູນລວມຂອງພືດນາໆຊະນິດ ແລະ ມີບົດບາດສຳຄັນໃນການອະນຸລັກຮັກສາ ແລະ ການນຳເອົາແນວພັນພືດຈາກ ປ່າມາເປັນພືດໃນບ້ານ. ຊີວະສາດນາໆພັນທີ່ພົບໃນກະເສດສວນຄົວໄດ້ເອື້ອອຳນວຍໃຫ້ຄອບຄົວຕ່າງໆສາມາດເຂົ້າເຖິງ ບັນດາຜັກ ແລະ ໝາກໄມ້ທີ່ມີໂພຊະນາການສູງ, ຢາ ແລະ ພືດຊະນິດຕ່າງໆ ທີ່ເປັນປະໂຫຍດ.

## ຄວາມອຸດົມສົມບູນທາງດ້ານຊີວະ ການກະເສດ, ຄວາມພຽງພໍຂອງອາຫານ ແລະ ໂພຊະນາການ

ກະເສດສວນຄົວແມ່ນຕົວຢ່າງທີ່ດີ ຂອງການພົວພັນຢ່າງສະໜິດແໜ້ນລະຫວ່າງ ຄວາມອຸດົມສົມບູນທາງດ້ານຊີວະສາດ ແລະ ຄວາມພຽງພໍຂອງອາຫານ, ໃນຂະນະດຽວກັນກໍ່ມີຄວາມສຳຄັນທາງດ້ານສິ່ງແວດລ້ອມອັນໃຫຍ່ຫຼວງ ສຳລັບ in situ ຫຼື ການກະເສດແບບອະນຸລັກແນວພັນພືດທີ່ຫຼາກຫຼາຍ, ພ້ອມດຽວກັນນັ້ນມັນຍັງສະໜອງແຫຼ່ງອາຫານ, ອາຫານສັດ, ຢາປົວພະຍາດ, ພືດສະໝຸນໄພ, ວັດສະດຸກໍ່ສ້າງ ແລະ ລາຍໄດ້ທີ່ສຳຄັນ ສຳລັບບັນດາຄົວເຮືອນໃນເຂດຊົນນະບົດ ຊຶ່ງນອນຢູ່ໃນຫຼາຍປະເທດ ທົ່ວໂລກ. ສະຖາບັນຄົ້ນຄວ້າແນວພັນພືດສາກົນ (IPGRI) ໄດ້ດຳເນີນງານທຳການສຶກສາຄົ້ນຄວ້າຕົວຈິງ ຫຼາຍຄັ້ງກ່ຽວກັບຊັບພະຍາກອນແນວພັນພືດ ໃນກະເສດສວນຄົວຕ່າງໆ ແລະ ຍັງໄດ້ກຳນົດ ການເຊື່ອມໂຍງກັນຢ່າງຈະແຈ້ງ ລະຫວ່າງຄວາມຫຼາກຫຼາຍ ຂອງກະເສດສວນຄົວ ແລະ ຄວາມພຽງພໍຂອງອາຫານໃນຄົວເຮືອນ (Eyzaguirre and Watson 2001).

ເຄື່ອງປູກໃໝ່ໆຫຼາຍຊະນິດ ໄດ້ຮັບການພັດທະນາ ຫຼື ນຳເອົາຈາກປ່າມາປູກໃນກະເສດສວນຄົວໂດຍອີງໃສ່ສາຍພົວພັນອັນໃກ້ຊິດລະຫວ່າງມະນຸດ ແລະ ພືດທີ່ມີມາແຕ່ດົນ. ກະເສດສວນຄົວຍັງທຳໜ້າທີ່ຮັບໃຊ້ເປັນສູນຈຳໜ່າຍ ແລະ ແນະນຳພືດຢ່າງບໍ່ເປັນທາງການເຊັ່ນ: ມີການແລກປ່ຽນແນວພັນ ແລະ ຂໍ້ມູນ ຂອງບັນດາສວນຕ່າງໆ, ຄອບຄົວ ແລະ ຕະຫຼາດທ້ອງຖິ່ນ, ຊຶ່ງຈະເຮັດໃຫ້ແນວພັນໃໝ່ທີ່ອຸດົມສົມບູນນີ້ ສາມາດມີວິວັດທະນາການດີຂຶ້ນ. ນອກຈາກນີ້ແລ້ວ, ກະເສດສວນຄົວຍັງ ເປັນສະຖານທີ່ສຳລັບການທົດລອງແນວພັນຊະນິດໃໝ່ໆທີ່ຫຼາກຫຼາຍ, ດ້ວຍເຫດນັ້ນ ມັນຈຶ່ງມີບົດບາດສຳຄັນຢ່າງຍິ່ງ ໃນການປັບປຸງເຄື່ອງປູກໃຫ້ດີຂຶ້ນ ແລະ ໃນດ້ານການວິວັດທະນາການ. ແນ່ນອນໜ້າທີ່ຕົ້ນຕໍແມ່ນເປັນສູນກາງການຜະລິດ, ເປັນບ່ອນປູກພືດຊຶ່ງເຮົາບໍລິໂພກໃນຊີວິດປະຈຳວັນລວມທັງ ພືດທີ່ຕ້ອງການ ການເອົາໃຈໃສ່ເປັນພິເສດ. ສວນຄົວແນວນີ້ປຽບເໝືອນກັບເຮືອນ ຂອງພືດທີ່ນຳມາປູກ ໂດຍທີ່ພືດເຫຼົ່ານັ້ນບໍ່ໄດ້ນຳມາຈາກການຄົ້ນຄວ້າວິໄຈ ແລະ ຍັງບໍ່ມີທ່າຂະຫຍາຍໃນທາງເສດຖະກິດ, ສະນັ້ນມັນຈຶ່ງມີບົດບາດສຳຄັນໃນ ຍຸດທະສາດການອະນຸລັກຄວາມອຸດົມສົມບູນທາງດ້ານຊີວະ ການກະເສດແຫ່ງຊາດ ເພາະວ່າ ມັນເປັນບ່ອນທີ່ສຳຄັນສຳລັບການນຳໃຊ້, ການແນະນຳ ແລະ ການທົດລອງ ຊຶ່ງມີຫຼາຍຊະນິດທີ່ແຕກຕ່າງກັນ, ກະເສດ ສວນຄົວເປັນບ່ອນຮອງຮັບແນວພັນທີ່ຫຼາກຫຼາຍ. ມີຄວາມຫຼາກຫຼາຍ ທັງທາງດ້ານຊະນິດແນວພັນ ແລະ ຊື່ຂອງພວກມັນ (Engels 2001).

---

*ໝາກໄມ້ ແລະ ຜັກທີ່ປູກຢູ່ໃນກະເສດສວນຄົວນັ້ນ ອຸດົມໄປ*

*ດ້ວຍສານອາຫານທີ່ຈຳເປັນ ແລະ*

*ທັງຊ່ວຍເພີ່ມຄວາມຫຼາກຫຼາຍຂອງທາດອາຫານ, ສະນັ້ນມັນຈຶ່ງ*

*ສາມາດປ້ອງກັນພະຍາດຊະນິດຕ່າງໆ ແລະ*

*ການຂາດສານອາຫານ.*

---

ແນວພັນທີ່ຫຼາກຫຼາຍມີຜົນກະທົບ ທີ່ສໍາຄັນທັງໃນດ້ານການຜະລິດ ແລະ ຄວາມພຽງພໍຂອງອາຫານ. ເປັນທີ່ຍອມຮັບກັນທົ່ວໄປແລ້ວວ່າ ຄວາມຫຼາກຫຼາຍຂອງແນວພັນ ໃນລະບົບການກະເສດຈະຊ່ວຍເຮັດໃຫ້ເຄື່ອງປູກຂອງຝັງ ມີສະເຖຍລະພາບຫຼາຍຂຶ້ນ ໃນດ້ານຂອງປະລິມານຜົນຜະລິດ, ແລະ ມີບົດບາດສໍາຄັນຕໍ່ຄວາມພຽງພໍຂອງອາຫານ. ຍິ່ງໄປກວ່ານັ້ນ ມັນຍັງເຮັດໃຫ້ວິທີການຜະລິດມີຄວາມຍືນຍົງຫຼາຍຂຶ້ນ, ເພາະວ່າ ປະຕິກິລິຍາ ຄວາມອຸດົມສົມບູນລະຫວ່າງພືດດ້ວຍກັນ ຈະຊ່ວຍຫຼຸດຜ່ອນການເພິ່ງພາສານເຄມີ ແລະ ສິ່ງທີ່ກະທົບໃສ່ຈາກພາຍນອກ. ການໝູນວຽນກັນຄືແນວນີ້ມັນໄດ້ສະໜອງ ບ່ອນສໍາລັບໃຫ້ພືດ, ສັດ, ແມງໄມ້, ສິ່ງມີຊີວິດຂະໜາດນ້ອຍ ແລະ ດິນໄດ້ທໍາປະຕິກິລິຍາກັນ. ສະນັ້ນ ມັນຈຶ່ງເປັນການຮັກສາຄວາມສົມດຸນ ທາງດ້ານລະບົບນິເວດການກະເສດ ແລະ ການປ້ອງກັນບໍ່ໃຫ້ດິນເຈື່ອນ (Engels 2001; Trinh et al 2001).

ກະເສດສວນຄົວ ຍັງມີຄວາມສໍາຄັນ ໃນການອະນຸລັກແນວພັນທີ່ຕົກຢູ່ໃນສະພາບຖືກຂົ່ມຂູ່. ຕົວຢ່າງຄືໃນປະເທດຈີນ, ກະເສດສວນຄົວມີບົດບາດສໍາຄັນ ໃນການຍົກຍ້າຍພືດທີ່ປູກຢູ່ຕາມໄຮ່. ໃນຂະນະທີ່ລະບົບການເຮັດໄຮ່ກໍ່ຖືກປ່ຽນແທນດ້ວຍການກະເສດແບບຖາວອນ ຢູ່ໃນປະເທດລາວ ແລະ ປະເທດອື່ນໆໃນອາຊີຕາເວັນອອກສ່ຽງໃຕ້, ປະຊາຊົນໄດ້ສູນເສຍໂອກາດໃນການຊົມໃຊ້ພືດທີ່ສໍາຄັນ. ໃນແຂວງຢຸນນານ, ຊົນເຜົ່າດາກາ ໄດ້ນໍາເອົາພືດທີ່ເຄີຍປູກຢູ່ຕາມໄຮ່ມາປູກໃສ່ສວນ. ກະເສດສວນຄົວຂອງເຜົ່າດາກາ ອຸດົມສົມບູນໄປດ້ວຍແນວພັນພືດພື້ນເມືອງ ທີ່ໃກ້ຈະຖືກດັບສູນ, ຊຶ່ງລວມມີ ຢາພື້ນເມືອງ, ໄມ້, ຜັກ, ໝາກໄມ້ ແລະ ພືດທີ່ເປັນໄມ້ປະດັບ ຊຶ່ງແຕ່ກ່ອນມັນເຄີຍຖືກພົບເຫັນ ຢູ່ຕາມໄຮ່. ການປະຕິບັດຄືແນວນີ້ມັນໄດ້ຊ່ວຍຮັກສາ ແນວພັນຊະນິດອື່ນໆ ບໍ່ໃຫ້ຖືກດັບສູນ, ພ້ອມກັນນັ້ນກໍ່ຍັງເປັນການສ້າງເສດຖະກິດຄອບຄົວ. ໃນຂະນະດຽວກັນຊາວກະສິກອນ ກໍ່ເຫັນໄດ້ວ່າ ຄວາມຕ້ອງການ ໃນການບໍລິໂພກຜັກຈາກປ່າໃນຕະຫຼາດ ນັບມື້ນັບເພີ່ມຂຶ້ນ, ແນ່ນອນວ່າລາຍໄດ້ທີ່ເປັນເງິນສົດທີ່ໄດ້ຈາກການຂາຍພືດເຫຼົ່ານີ້ ຈະຕ້ອງເພີ່ມຂຶ້ນ (Fu et al 2003). ໃນກໍລະນີດຽວກັນນີ້ ກໍ່ສາມາດນໍາມາປະຕິບັດ ໃນປະເທດລາວໄດ້, ແຕ່ວ່າມັນຍັງມີຂໍ້ຈໍາກັດໃນການສຸມໃສ່ ການຍ້າຍເອົາພືດທີ່ປູກຕາມໄຮ່ມາປູກໃນສວນ.

ຄວາມອຸດົມສົມບູນຂອງແນວພັນພືດ ໄດ້ປະກອບສ່ວນສໍາຄັນເຂົ້າ ໃນການປັບປຸງໂພຊະນາການໃຫ້ແກ່ຄອບຄົວທີ່ຢູ່ໃນຕົວເມືອງ ແລະ ຊົນນະບົດ. ໝາກໄມ້ ແລະ ຜັກທີ່ປູກຢູ່ໃນກະເສດສວນຄົວນັ້ນອຸດົມໄປດ້ວຍສານອາຫານທີ່ຈໍາເປັນ ແລະ ທັງຊ່ວຍເພີ່ມຄວາມຫຼາກຫຼາຍຂອງທາດອາຫານ, ສະນັ້ນມັນຈຶ່ງສາມາດປ້ອງກັນພະຍາດຊະນິດຕ່າງໆ ແລະ ການຂາດສານອາຫານ. ພ້ອມດຽວກັນນັ້ນກໍ່ມີການລ້ຽງສັດ ເພື່ອເພີ່ມທາດໂປຣຕີນທີ່ຈໍາເປັນ. ແມ່ຍິງມີບົດບາດສໍາຄັນໃນການຄຸ້ມຄອງ, ຜະລິດ ແລະ ຊົມໃຊ້ຜົນຜະລິດທີ່ໄດ້ຈາກກະເສດສວນຄົວເຮືອນ. ລວມທັງມີການຄັດເລືອກ ແລະ ການເກັບຮັກສາແນວພັນ, ການເພາະປູກ, ການເສຍຫຍ້າ ແລະ ການນໍາໃຊ້ ຫຼືຂາຍ. ບົດບາດຂອງແມ່ຍິງໃນການອະນຸລັກຄວາມອຸດົມສົມບູນຂອງພືດພັນໃນທ້ອງຖິ່ນແມ່ນມີຄວາມສໍາຄັນ ແລະ ຄວາມຮູ້ຂອງເຂົາເຈົ້າ ກໍ່ມີບົດບາດສໍາຄັນ ໃນການປັບປຸງຄຸນນະພາບ ຂອງຊັບພະຍາກອນ (Engels 2001).

## ກະເສດສວນຄົວໃນ ສປປ ລາວ

### ຊະນິດຂອງກະເສດສວນຄົວ ແລະ ການຊົມໃຊ້ພືດ/ເຄື່ອງປູກ

ກະເສດສວນຄົວເບິ່ງຄືຈັ່ງວ່າສາມາດ ພົບເຫັນໄດ້ໃນຫຼາຍພື້ນທີ່ຂອງປະເທດລາວ. ເຖິງແມ່ນວ່າຈະມີຂໍ້ຈໍາກັດທາງດ້ານຄວາມຮູ້ກ່ຽວກັບຜົນກະທົບ ທີ່ມີຕໍ່ຄວາມພຽງພໍຂອງອາຫານ ແລະ ຄວາມ

ອຸດົມສົມບູນ ຂອງຊີວະນາໆພັນ. ເຖິງແນວໃດກໍ່ຕາມ ໃນການສຳຫຼວດ ແລະ ປະສົບການຈາກໂຄງການຕ່າງໆໄດ້ຊີ້ໃຫ້ເຫັນວ່າ ກະເສດສວນຄົວມີຫຼາຍລັກສະນະ ແລະ ຂະໜາດ ທີ່ແຕກຕ່າງກັນ, ເຄື່ອງປູກ ແລະ ເຕັກນິກທີ່ໃຊ້ກໍ່ມີຄວາມຫຼາກຫຼາຍ. ຈາກການສຳຫຼວດເບິ່ງການປູກຝັງແບບພື້ນເມືອງຂອງລາວ ໃນສອງເມືອງໂດຍໂຄງການຄົ້ນຄວ້າການກະເສດ ແລະ ປ່າໄມ້ ລາວ-ສະວີເດັນ (LSUAFRP) ແລະ ສູນສຶກສາຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ເຂດພາກເໜືອ ໄດ້ສະແດງໃຫ້ເຫັນວ່າ ປະຈຸບັນກະເສດສວນຄົວເປັນທີ່ຮູ້ຈັກກັນເປັນຢ່າງດີ ແລະ ແຜ່ຂະຫຍາຍອອກຢ່າງກວ້າງຂວາງ, ເກືອບວ່າທຸກໆບ້ານມີກະເສດ ສວນຄົວບໍ່ແບບໃດກໍ່ແບບໜຶ່ງ. ໃນສອງເມືອງຄື, ເມືອງນາໝໍ້ ແຂວງອຸດົມໄຊ ແລະ ເມືອງໂພນໄຊ ແຂວງຫຼວງພະບາງ, ຢູ່ໃນສອງເມືອງນີ້ມີກະເສດສວນຄົວ ທີ່ແຕກຕ່າງກັນ ແຕ່ກໍ່ມີບາງຢ່າງທີ່ຄ້າຍຄືກັນ. ເຄື່ອງປູກເຫຼົ່ານັ້ນລວມມີໝາກໄມ້(ໝາກຫຸ່ງ, ໝາກກ້ວຍ, ໝາກກ້ຽງ, ໝາກນັດ, ໝາກມ່ວງ ແລະໝາກມີ້) ສ່ວນຜັກປະກອບມີ(ໝາກເຂືອທຳມ້າ, ໝາກເຜັດ, ກະລ່ຳປີ, ໝາກຖົ່ວ) ພ້ອມທັງຂີງ, ເຜືອກ, ໜໍ່ໄມ້ຂົມ, ໝາກຖົ່ວດິນ ແລະ ພືດສະໝຸນໄພຊະນິດຕ່າງໆ. ມີກະເສດສວນຄົວແຫ່ງໜຶ່ງ, ທີ່ຕັ້ງຢູ່ເທິງພູ ເມືອງໂພນໄຊ, ມີພືດປູກຢູ່ໃນນັ້ນຫຼາຍກວ່າ 50 ຊະນິດແຕກຕ່າງກັນ (Sodarak et al 2003).

*ເກືອບວ່າ ໜຶ່ງລ້ານເຄິ່ງຂອງປະຊາກອນ ຖືກຈັດເປັນຄົນຂາດທາດບຳລຸງລ້ຽງໃນລະຫວ່າງປີ 1997 - 1999.*

*ທາງໂຄງການແນເປົ້າໝາຍໃສ່ຄອບຄົວທີ່ມີເດັກອາຍຸຕ່ຳກວ່າ 5 ປີ ແລະ ຜູ້ຍິງໃນໄວຈະເລີນພັນມ.*

ການນຳເອົາເຄື່ອງປ່າຂອງດົງ ມາປູກໃນບ້ານແມ່ນເປັນສິ່ງທຳມະດາ ໃນກະເສດສວນຄົວ. ມີບ້ານໜຶ່ງ ຊື່ບ້ານກວາງ, ເປັນບ້ານທີ່ເນັ້ນໃສ່ການປູກໜໍ່ໄມ້ຂົມ. ແນວພັນໄມ້ແມ່ນເກັບເອົາມາຈາກປ່າບໍລິເວນອ້ອມແອ້ມ ແລະ ປູກໄວ້ໃກ້ໆກັບເຮືອນລະຫວ່າງສວນໝາກນັດ ແລະ ໝາກໄມ້ (Sodarak et al 2003). ກະເສດສວນຄົວສາມາດພົບເຫັນໄດ້ໃນທຸກສະພາບແວດລ້ອມ, ແຕ່ຈອມພູລົງໄປຮອດແຄມນ້ຳ ໃນເຂດທົ່ງພຽງ. ສວນຂະໜາດນ້ອຍສາມາດພົບເຫັນໄດ້ຢູ່ຕາມເທິງຮ້ານ ແລະ ສວນຂະໜາດໃຫຍ່ ສາມາດພົບເຫັນໄດ້ຕາມພື້ນດິນ, ຊຶ່ງຈະມີການປູກປະສົມປະສານກັນ ລະຫວ່າງຜັກ, ເຂົ້າ ຫຼືໝາກສາລີ ແລະ ສ່ວນຕົ້ນໝາກໄມ້ແມ່ນປູກລຽນຕາມແຄມຮົ້ວ ຫຼືປູກຢາຍຕາມພື້ນທີ່ສວນ. ໂຄງການຄົ້ນຄວ້າການກະເສດ ແລະ ປ່າໄມ້ ລາວ-ສະວີເດັນ (LSUAFRP) ໄດ້ຢັ້ງຢືນວ່າ ຊາວກະສິກອນບາງກຸ່ມກໍ່ໄດ້ພັດທະນາກະເສດສວນຄົວໄປສູ່ສວນກະສິກຳຂະໜາດໃຫຍ່ ທີ່ມີປັດໄຈການຜະລິດຫຼາຍຢ່າງ. ໃນນັ້ນລວມມີພືດທີ່ແຕກຕ່າງກັນເຊັ່ນ: ໄມ້ສັກ, ຕົ້ນໝາກໄມ້, ຜັກ, ເຂົ້າ, ສາລີ ແລະ ມັນຕົ້ນ. ນອກຈາກນີ້, ລະບົບເຫຼົ່ານີ້ຍັງປະກອບມີ ແຫຼ່ງທາດໂປຣຕີນນຳອີກ ເຊັ່ນ: ໜອງປາ, ໝູ ແລະ ສັດປີກ. ລະບົບເຫຼົ່ານີ້ຖືໄດ້ວ່າເປັນ 'ລະບົບການກະເສດທີ່ກ້າວໜ້າ' ຫຼື 'ລະບົບການຜະລິດກະສິກຳແບບປະສົມປະສານ ທີ່ອີງໃສ່ຄົວເຮືອນເປັນພື້ນຖານ', ຊຶ່ງໃຫ້ຜົນຜະລິດດີ ແຕ່ມີຂໍ້ຫຍຸ້ງຍາກຫຼາຍກວ່າ, ຕ້ອງການ ການລົງທຶນ ແລະ ຕ້ອງມີທີ່ດິນ (Sodarak et al 2003).

**ໂຄງການລິເລີ່ມຂອງອົງການອາຫານ ແລະ ການກະເສດໂລກ ວ່າດ້ວຍກະເສດສວນຄົວເພື່ອປັບປຸງສະພາບໂພຊະນາການໃຫ້ດີຂຶ້ນ**

ໃນປີ 2002, ອົງການອາຫານ ແລະ ການກະເສດໂລກ ໄດ້ລິເລີ່ມໂຄງການໄລຍະ 18ເດືອນ, ໂດຍຈັດຕັ້ງກະເສດສວນຄົວຂຶ້ນມາ ເພື່ອປັບປຸງສະພາບໂພຊະນາການໃຫ້ດີຂຶ້ນ. ຈຸດປະສົງແມ່ນເພື່ອສ້າງຕົວຢ່າງ ໃນການຫຼຸດຜ່ອນ ສະພາບການຂາດສານອາຫານ ຢ່າງຮຸນແຮງໃນເຂດຊົນນະບົດ ແລະ ປັບປຸງສະພາບໂພຊະນາການຂອງປະຊາກອນ ໃຫ້ດີຂຶ້ນ ດ້ວຍການເພີ່ມທະວີການຜະລິດ ແລະ ການບໍລິໂພກອາຫານທີ່ມີໂພຊະນາການ, ເນັ້ນໜັກໃສ່ອາຫານທີ່ອຸດົມໄປດ້ວຍທາດບຳລຸງລ້ຽງ. ຕົວຢ່າງດັ່ງກ່າວລວມມີສັດລ້ຽງຂະໜາດນ້ອຍ ແລະ ການລ້ຽງສັດນ້ຳ, ຄ້າຍຄືກັບລະບົບການຜະລິດ ກະສິກຳແບບປະສົມປະສານດັ່ງທີ່ໄດ້ກ່າວມາ ຂ້າງເທິງນັ້ນ. ປະເທດລາວເຮົາຖືໄດ້ວ່າເປັນປະເທດໜຶ່ງ ທີ່ມີອັດຕາສ່ວນການຂາດສານອາຫານ ສູງທີ່ສຸດໃນຂົງເຂດ 40.7% ຂອງເດັກນ້ອຍແມ່ນປະສົບກັບການ ຂາດສານອາຫານແບບຊ້ຳເຮື້ອ (ບໍ່ມີການຈະເລີນເຕີບໂຕ), 15.4% ແມ່ນຂາດສານອາຫານຢ່າງຮຸນແຮງ (ຜອມໂຊມ), ແລະ 40% ແມ່ນນ້ຳໜັກຕ່ຳກວ່າມາດຕະຖານ. ໃນບັນດາຜູ້ໃຫຍ່, 19.2% ກໍ່ຂາດທາດບຳລຸງລ້ຽງຢ່າງຊ້ຳເຮື້ອ. ອີງຕາມການສຳຫຼວດສຸຂະພາບແຫ່ງຊາດປີ 2000 ພົບວ່າ, ການຂາດວິຕາມິນອາ, ທາດເຫຼັກ ແລະ ທາດໄອໂອດິນ ໄດ້ສົ່ງຜົນກະທົບຕໍ່ເດັກນ້ອຍປະມານ 9.1% (ກະຊວງສາທາລະນະສຸກ ແລະ ຄະນະກຳມະການແຜນການແຫ່ງລັດ 2001). ເກືອບວ່າ ໜຶ່ງລ້ານເຄິ່ງຂອງປະຊາກອນ ຖືກຈັດເປັນຄົນຂາດທາດບຳລຸງລ້ຽງ. ໃນລະຫວ່າງປີ 1997 - 99 (FAO 2003). ທາງໂຄງການແນເປົ້າໝາຍໃສ່ຄອບຄົວທີ່ມີເດັກອາຍຸຕ່ຳກວ່າ 5 ປີ ແລະ ຜູ້ຍິງໃນໄວຈະເລີນພັນ, ຊຶ່ງຖືວ່າເປັນກຸ່ມຄົນທີ່ໄດ້ຮັບຜົນກະທົບຈາກການຂາດສານອາຫານຫຼາຍທີ່ສຸດ.

ສິ່ງທີ່ເປັນບູລິມະສິດ ໃນການຈັດຕັ້ງປະຕິບັດ ແມ່ນ, 50% ຂອງຄົວເຮືອນໃນກຸ່ມໝູ່ບ້ານເປົ້າໝາຍໄດ້ມີສ່ວນຮ່ວມໃນການເຮັດກະເສດສວນຄົວໃນພື້ນທີ່ຈຳກັດ. ເຖິງແນວໃດກໍ່ຕາມ, ຜົນໄດ້ຮັບ ແລະ ຄຸນນະພາບ ຂອງການຜະລິດ ຂອງພວກເຂົາແມ່ນຕ່ຳ ຍ້ອນຂາດເຕັກນິກ ແລະ ການເບິ່ງແຍງເອົາໃຈໃສ່. ການປູກຜັກແມ່ນມີສະເພາະໃນລະດູແລ້ງເທົ່ານັ້ນ ແລະ ສາມາດສະໜອງໃຫ້ແກ່ການບໍລິໂພກ ພາຍໃນຄົວເຮືອນໄດ້ພຽງແຕ່ 10 - 15%. ສະນັ້ນທາງໂຄງການຈິ່ງໄດ້ເນັ້ນໃສ່ການປັບປຸງສວນໃຫ້ດີຂຶ້ນ ດ້ວຍການນຳໃຊ້ເຕັກນິກຕາໜ່າງຄົວເຮືອນ ເພື່ອປູກຜັກໝູນວຽນຕະຫຼອດປີ. ເຕັກນິກດັ່ງກ່າວນີ້ ຊ່ວຍຢັບຢັ້ງບໍ່ໃຫ້ຝົນທີ່ຕົກມາແຮງນັ້ນມາທຳລາຍເຄື່ອງປູກ ແລະ ປ້ອງກັນບໍ່ໃຫ້ນ້ຳຖ້ວມໝານຜັກ, ແລະ ເຮັດຮົ່ມບັງແສງແດດ. ກະເສດສວນຄົວສາມາດປູກໃສ່ພື້ນດິນ ແລະ ປູກໃສ່ເທິງຮ້ານກໍ່ໄດ້, ເຮັດໃຫ້ຄົວເຮືອນປູກຜັກກິນໃບໄດ້ຕະຫຼອດປີ (FAO and DOA, MAF 2004).

**ການຄົ້ນພົບທີ່ສຳຄັນ ແລະ ການພົວພັນກັນ**

ໂພຊະນາການແມ່ນອົງປະກອບທີ່ສຳຄັນຂອງໂຄງການ. ເພາະວ່າຜົນທີ່ໄດ້ຮັບແມ່ນ ການຜະລິດເພີ່ມຂຶ້ນ ແລະ ບັນດາໝູ່ບ້ານທີ່ເຂົ້າຮ່ວມໂຄງການ ກໍ່ມີຜັກຫຼາຍຊະນິດໄວ້ບໍລິໂພກ, ການຜະລິດຜັກສະເລ່ຍໃນແຕ່ລະວັນ ເພີ່ມຂຶ້ນຮອດ 245 ກຼາມຕໍ່ຄົນ, ທຽບໃສ່ທົ່ວຄົນແມ່ນໃນແຕ່ລະວັນແມ່ນ 64.3 ກຼາມ. ຜັກຫຼາຍຊະນິດທີ່ປູກໃນລະຫວ່າງໂຄງການ ປະກອບດ້ວຍສານອາຫານທີ່ຈຳເປັນຫຼາຍຢ່າງ ພ້ອມດ້ວຍຄຸນປະໂຫຍດທາງດ້ານໂພຊະນາການ ເພື່ອຕໍ່ສູ້ກັບການຂາດສານອາຫານ ເຊັ່ນ: ມີວິຕາມິນອາ, ເບ ແລະ ເຊ, ທາດເຫຼັກ, ທາດໄອໂອດິນ, ເກືອແຮ່, ເສັ້ນໄຍອາຫານ ແລະ ທາດໂປຣຕີນ.

ມີຜັກ ແລະ ໝາກໄມ້ຫຼາຍກວ່າ 25 ຊະນິດແຕກຕ່າງກັນ ທີ່ຖືກພົບເຫັນໃນກະເສດສວນຄົວ ກ່ອນໂຄງ

ການຈະເລີ່ມ, ບາງສ່ວນກໍ່ແມ່ນພັນພື້ນເມືອງ. ໃນລະຫວ່າງໂຄງການ, ໄດ້ມີການສະເໜີແນວພັນພື້ນ ເມືອງໃໝ່ໆ, ແລະ ຊາວກະສິກອນກໍ່ໄດ້ຮັບແນວພັນຜັກ ແລະ ເບ້ຍຕົ້ນໄມ້ກິນໝາກ. ໄດ້ມີການກຳນົດແນວພັນຜັກເຖິງ 23 ຊະນິດ ແລະ ໄດ້ຮັບການສົ່ງເສີມດ້ານຄຸນນະພາບ ທາງດ້ານໂພຊະນາ ການທີ່ສຳຄັນຂອງພວກມັນ, ພ້ອມດ້ວຍແນວພັນໝາກໄມ້ 15 ຊະນິດ ແລະ ອາຫານປ່າ 9 ຊະນິດ, ລວມທັງ ໝາກໄມ້ ແລະ ໝາກໄມ້ເປືອກແຂງພື້ນເມືອງທີ່ບໍ່ເຄີຍຊົມໃຊ້ມາກ່ອນ (FAO and DOA, MAF 2004).

ທາງໂຄງການບໍ່ພຽງແຕ່ປັບປຸງ ກະເສດສວນຄົວແບບດັ້ງເດີມທີ່ມີຢູ່ໃຫ້ດີຂຶ້ນເທົ່ານັ້ນ, ແຕ່ຍັງຊ່ວຍໃຫ້ຊາວກະສິກອນ ປູກຜັກກິນໃບ ແລະ ເຄື່ອງປູກອື່ນ ຫຼາຍຊະນິດທີ່ແຕກຕ່າງກັນ ຢູ່ໃນຕະຫຼອດປີອີກດ້ວຍ ພ້ອມທັງເພີ່ມຜົນຜະລິດ ແລະ ປັບປຸງຄຸນນະພາບໃຫ້ດີຂຶ້ນ. ຫຼັງຈາກທາງໂຄງການໄດ້ຈັດຕັ້ງປະຕິບັດໄດ້ໜຶ່ງປີແລ້ວ, ບໍ່ພຽງແຕ່ມີພື້ນທີ່ສຳລັບປູກຜັກເພີ່ມຂຶ້ນເທົ່ານັ້ນ, ແຕ່ຊະນິດຂອງຜັກຍັງມີຄວາມອຸດົມສົມບູນນຳອີກ. ກ່ອນໂຄງການຈະເລີ່ມ, ມີພຽງ 23% ຂອງຄົວເຮືອນເທົ່ານັ້ນທີ່ປູກຜັກຊະນິດນີ້, ແຕ່ວ່າເມື່ອສຳເລັດໂຄງການແລ້ວ, ອັດຕາສ່ວນເພີ່ມຂຶ້ນຮອດ 75%. ຂອງການຜະລິດກະເສດສວນຄົວທີ່ເພີ່ມຂຶ້ນ ໄດ້ນຳໄປສູ່ການຫຼຸດຜ່ອນອັດຕາສ່ວນການຫາຜັກຈາກປ່າ, ຊຶ່ງຫຼຸດລົງ 17%. ສະນັ້ນ ມັນຈຶ່ງເປັນການຫຼຸດຜ່ອນຄວາມກົດດັນ ຈາກການຊົມໃຊ້ຊັບພະຍາກອນປ່າໄມ້ທີ່ເກີນຂອບເຂດ (FAO and DOA, MAF 2004). ເບິ່ງຄືຈັ່ງວ່າຈະມີຜົນກະທົບທາງບວກ ໃນການນຳໃຊ້ເວລາ ແລະ ແຮງງານ, ຫຼຸດຜ່ອນເວລາ ໂດຍສະເພາະແມ່ນຜູ້ຍິງ ໃນການໄປຊອກຫາອາຫານເຫຼົ່ານັ້ນໃນປ່າ.

---

***ການປະຕິບັດດ້ານໂພຊະນາການ ໄດ້ຮັບການປັບປຸງພາຍໃນໄລຍະທີ່ຂ້ອນຂ້າງສັ້ນ: ຈຳນວນເດັກອາຍຸ 24 - 35 ເດືອນທີ່ມີນ້ຳໜັກຫຼຸດນັ້ນ ໄດ້ຫຼຸດລົງຈາກ 33.3% ກ່ອນການເຂົ້າມາ ຂອງໂຄງການ ແລະ 5.6% ພາຍຫຼັງການເຂົ້າມາຊ່ວຍເຫຼືອຂອງໂຄງການ.***

---

**ອົງປະກອບດ້ານໂພຊະນາການຂອງໂຄງການ**

ນອກຈາກທຳການຜະລິດເຄື່ອງປູກແລ້ວ, ກໍ່ຍັງລວມມີອົງປະກອບອື່ນໆໃນການຍົກລະດັບຄວາມພຽງພໍທາງດ້ານອາຫານ ແລະ ໂພຊະນາການ ແລະ ການສ້າງລາຍຮັບ. ທາງໂຄງການໄດ້ເພີ່ມທະວີຄວາມຕື່ນຕົວ ແລະ ຄວາມຊຳນານຂອງຊາວກະສິກອນ ໃນດ້ານເຕັກນິກການລ້ຽງປາ. ດ້ວຍການຄຸ້ມຄອງໜອງທີ່ດີຂຶ້ນ, ໄດ້ເຮັດໃຫ້ການບໍລິໂພກປາເພີ່ມຂຶ້ນເຊັ່ນກັນ, ໃນຂະນະດຽວກັນກໍ່ປັບປຸງຕະຫຼາດເພື່ອສົ່ງເສີມການຂາຍປາ. ການຜະລິດສັດປີກ (ໄກ່ ແລະ ເປັດ) ກໍ່ຖືກລວມເຂົ້າໃນການຍົກລະດັບທາດໂປຣຕີນສັດ ແລະ ພະລັງງານໃນອາຫານທີ່ຂາດທາດໂປຣຕີນ. ພ້ອມດຽວກັນນີ້ຍັງໄດ້ຊ່ວຍຄອບຄົວຕ່າງໆ ເພີ່ມພູນລາຍໄດ້ໃນໄລຍະສາມເດືອນຂອງ ໄລຍະທ້າຍໂຄງການ, ແຕ່ລະຄອບຄົວ ມີລາຍໄດ້ເຖິງ 150 ໂດລາສະຫະລັດ ຈາກການຂາຍສັດປີກ, ພາຍຫຼັງທີ່ສາມາດຕອບສະໜອງ ຄວາມຕ້ອງການບໍລິໂພກຂອງຄົວເຮືອນ.

ການໃຫ້ຄວາມຮູ້ດ້ານໂພຊະນາການ ແລະ ກິດຈະກຳແຕ່ການກະກຽມອາຫານແມ່ນພົວພັນຢ່າງສະໜິດແໜ້ນ ກັບການຜະລິດອາຫານ. ໄດ້ມີການສະເໜີການສາທິດວິທີ ກະກຽມອາຫານ

ໃຫ້ແກ່ຄົວເຮືອນ ກຸ່ມເປົ້າໝາຍ ເພື່ອເພີ່ມຈຳນວນອາຫານ ທີ່ໃຊ້ໃນແຕ່ລະຄາບຂອງມື້. ໂຄງການນີ້ໄດ້ຄຸ້ມຄອງ ເພື່ອປັບປຸງການປະຕິບັດດ້ານໂພຊະນາການ ໃນໄລຍະທີ່ຂ້ອນຂ້າງສັ້ນ. ໂດຍທົ່ວໄປແລ້ວກ່ອນໂຄງການ, ຄົວເຮືອນບໍລິໂພກຜັກກິນໃບພຽງແຕ່ ໜຶ່ງຫາສາມເທື່ອຕໍ່ອາທິດ. ພາຍຫຼັງ 15 ເດືອນຄວາມຖີ່ຂອງການບໍລິໂພກ ຜັກກິນໃບໄດ້ເພີ່ມຂຶ້ນເປັນຄາບຕໍ່ມື້, ແລະ ໃນທາງດຽວກັນກໍ່ມີການບັນທຶກວ່າ ການ ບໍລິໂພກໝາກໄມ້, ປາ, ໄຂ່ ແລະ ຊີ້ນເພີ່ມຂຶ້ນ. ການປະຕິບັດໃຫ້ອາຫານແກ່ເດັກອ່ອນ ແລະ ເດັກນ້ອຍ ກໍ່ໄດ້ຮັບການຕິດຕາມກວດກາ ເພື່ອກຳນົດບັນຫາທີ່ຮ້າຍແຮງຂອງການຂາດທາດບຳລຸງລ້ຽງ ໃນກຸ່ມເດັກທີ່ມີອາຍຸຕ່ຳກວ່າຫ້າປີ. ພາຍຫຼັງຫົກເດືອນຂອງ ການຕິດຕາມກວດກາເບິ່ງ ການຈະເລີນເຕີບໂຕ, ບວກກັບການໃຫ້ຄວາມຮູ້ດ້ານໂພຊະນາການ, ການວັດແທກຮ່າງກາຍຂອງມະນຸດ ໄດ້ສະແດງ ການຍອມຮັບວ່າເດັກທີ່ມີນ້ຳໜັກ ຕ່ຳກວ່າມາດຕະຖານໄດ້ຫຼຸດລົງ. ການວັດແທກ ຄັ້ງສຸດທ້າຍໃນເດືອນ ກໍລະກົດ ປີ 2004 ໄດ້ບັນທຶກອັດຕາໄວ້ 15.6%, ຫຼຸດລົງມາຈາກ 23% ໃນລະດັບເສັ້ນຖານ (ເດືອນເມສາ ປີ 2003). ສຳລັບເດັກອາຍຸ 24 - 35 ເດືອນທີ່ມີນ້ຳໜັກຫຼຸດນັ້ນ ໄດ້ຫຼຸດລົງຈາກ 33.3% ມາເປັນ 5.6% ພາຍຫຼັງການເຂົ້າມາຊ່ວຍເຫຼືອຂອງໂຄງການ.

## ການຈັດຕັ້ງປະຕິບັດໃນລະດັບຊາດ

ຕົວຢ່າງລິເລີ່ມຂອງກະເສດສວນຄົວນີ້ໄດ້ປະສົມປະສານ ກັນລະຫວ່າງການຜະລິດກະສິກຳ ແລະ ຄວາມຕື່ນຕົວທາງດ້ານໂພຊະນາການ. ຜົນທີ່ໄດ້ຮັບໄດ້ສະແດງໃຫ້ເຫັນວ່າມັນສາມາດຮັບໃຊ້ໃຫ້ແກ່:

- ເພີ່ມທະວີການຜະລິດອາຫານ ດ້ວຍການນຳໃຊ້ພື້ນທີ່ປູກຝັງທີ່ມີຢູ່
- ເພີ່ມຄວາມຫຼາກຫຼາຍໃນການຜະລິດອາຫານ
- ເພີ່ມການສະໜອງອາຫານ ແລະ ໃຫ້ມີພຽງພໍ
- ສາມາດຕອບສະໜອງຄວາມຕ້ອງການທາງດ້ານອາຫານ ແລະ ໂພຊະນາການຂອງສະມາຊິກໃນຄົວເຮືອນ

ທັງໝົດ 204 ຄົວເຮືອນໄດ້ພັດທະນາກະເສດສວນຄົວຂອງພວກເຂົາ ແລະ ນຳໃຊ້ຜົນຜະລິດຂອງເຂົາເຈົ້າ ເພື່ອໃຫ້ຄອບຄົວມີໂພຊະນາການດີ ແລະ ມີລາຍໄດ້ພິເສດ. ໄດ້ມີການສະໜອງຂໍ້ມູນດ້ານເຕັກນິກດ້ວຍການຝຶກອົບຮົມ, ບໍລິການສົ່ງເສີມ ແລະ ການເຜີຍແຜ່ເຕັກໂນໂລຊີ (ການສາທິດຕົວຈິງ). ກະສິກຳຊຸມຊົນໄດ້ຮັບການພັດທະນາຢູ່ໃນແຕ່ລະໝູ່ບ້ານເປົ້າໝາຍ ເພື່ອເປັນ 'ໂພຊະນາການ ການກະເສດແບບຢ່າງ'. ສິ່ງດັ່ງກ່າວຖືໄດ້ວ່າ ເປັນແບບຢ່າງດ້ານໂພຊະນາການສຳລັບການ ຜະລິດອາຫານໃນຈຳນວນມະຫາສານ ແລະ ສາມາດດຳເນີນການໄດ້ໂດຍຄົວເຮືອນທີ່ມີເນື້ອທີ່ດິນກວ້າງ.

ການຮ່ວມມືຂອງຫຼາຍພາກສ່ວນ (ກະສິກຳ, ສາທາລະນະສຸກ ແລະ ສຶກສາ, ສະຫະພັນແມ່ຍິງລາວ) ໄດ້ຮັບການສະໜັບສະໜູນ ໂດຍໂຄງການໃນລະດັບເມືອງ ແລະ ແຂວງ ຊຶ່ງສາມາດເປັນແບບຢ່າງກະເສດສວນຄົວຂະໜາດໃຫຍ່ໄດ້. ໂດຍມີແນວພັນ, ເບ້ຍຕົ້ນໄມ້ກິນໝາກ, ປາ ແລະ ກົບ, ສັດລ້ຽງຂະໜາດນ້ອຍ, ບວກກັບການໃຫ້ຄວາມຮູ້ດ້ານໂພຊະນາການ, ກະເສດສວນຄົວແມ່ນວິທີ ທີ່ມີປະສິດທິພາບ ໃນການສົ່ງເສີມໃຫ້ມີອາຫານ ແລະ ໂພຊະນາການ ທີ່ພຽງພໍໃນລະດັບຄົວເຮືອນ ແລະ ຊຸມຊົນໃນເຂດຊົນນະບົດທີ່ທຸກຈົນ.

ໃນຂະນະດຽວກັນຍັງໄດ້ປະກອບສ່ວນ ເຂົ້າໃນການຍົກລະດັບຄວາມອຸດົມສົມບູນ ທາງດ້ານຊີວະ ການກະເສດ ແລະ ອະນຸລັກຄວາມອຸດົມສົມບູນຂອງຜັກ ແລະ ໝາກໄມ້ໃນທ້ອງຖິ່ນ, ການສົ່ງ ເສີມໃຫ້ມີການຜະລິດທີ່ຫຼາກຫຼາຍນີ້ ຍັງບໍ່ທັນເປັນລະບົບ ແລະ ສາມາດທີ່ສ້າງໃຫ້ມີຄວາມເຂັ້ມແຂງ ຍິ່ງຂຶ້ນໄດ້. ແນວພັນພືດຊັ້ນສູງ ແລະ ຄວາມອຸດົມສົມບູນຂອງແນວພັນພືດທີ່ພົບເຫັນ ໃນກະເສດສວນ ຄົວນັ້ນ ມີຄວາມສຳຄັນຕໍ່ການອະນຸລັກຊັບພະຍາກອນ ແນວພັນພືດທີ່ຫຼາກຫຼາຍຂອງ ອິນຊີຕູ (in situ), ຊຶ່ງຄວນຈະໄດ້ບັນທຶກຢ່າງເປັນລະບົບກວ່ານີ້ ໃນການສຶກສາຄົ້ນຄວ້າໃນອະນາຄົດ ແລະ ຄວາມພະຍາຍາມ ໃນການພັດທະນາກະເສດສວນຄົວ.

## ໂຄງການຄວາມອຸດົມສົມບູນ ທາງດ້ານຊີວະ ການກະເສດແຫ່ງຊາດ ແລະ ກະເສດສວນຄົວ

ໃນສະພາບການພັດທະນາ ຂອງປະເທດໃນປະຈຸບັນ, ການຄຸ້ມຄອງຄວາມອຸດົມສົມບູນທາງດ້ານ ຊີວະ ການກະເສດ ແມ່ນໄດ້ຮັບການປັບປຸງດີຂຶ້ນ ຊຶ່ງໄດ້ສະໜອງຍຸດທະສາດທີ່ສຳຄັນ ເພື່ອບັນລຸຜົນ ສຳເລັດໃນດ້ານຄວາມພຽງພໍຂອງອາຫານ ແລະ ຫຼຸດຜ່ອນຄວາມທຸກຍາກ, ໂດຍສະເພາະແມ່ນ ໃນເຂດຊົນນະບົດ. ໂຄງການຄວາມອຸດົມສົມບູນທາງດ້ານຊີວະ ການກະເສດແຫ່ງຊາດ ໄດ້ຮັບການ ພັດທະນາ ໃນຕົ້ນປີ 2004 ເພື່ອສະໜັບສະໜູນການພັດທະນາຕົ້ນຕໍ ທີ່ເປັນບູລິມະສິດສອງຢ່າງຄື: ປັບປຸງຄວາມພຽງພໍຂອງອາຫານ ແລະ ຊີວິດການເປັນຢູ່ສຳລັບຊຸມຊົນ ໃນເຂດຊົນນະບົດໃຫ້ດີ ຂຶ້ນ, ແລະ ຍົກລະດັບຄວາມສາມາດຂອງລັດຖະບານ ເພື່ອຮັບປະກັນໃຫ້ມີການຊົມໃຊ້ ຊັບພະຍາກອນ ທຳມະຊາດແບບຍືນຍົງ. ເພື່ອບັນລຸພາລະກິດທີ່ ຕົກລົງເຫັນດີກັນໃນທົ່ວໂລກ ຕໍ່ຄວາມພຽງພໍຂອງ ອາຫານ ແລະ ການຫຼຸດຜ່ອນຄວາມທຸກຍາກ ໃນ ສປປ ລາວ ນັ້ນ, ມັນຮຽກຮ້ອງໃຫ້ມີການລົງທຶນ ແບບມີຍຸດທະສາດ. ໂຄງການຄວາມອຸດົມສົມບູນທາງດ້ານຊີວະການກະເສດແຫ່ງຊາດ ທີ່ກວ້າງ ຂວາງ ໄດ້ຮັບການພັດທະນາໂດຍ ອົງການອາຫານ ແລະ ການກະເສດໂລກ (FAO), ອົງການສະຫະ ປະຊາຊາດ ເພື່ອການພັດທະນາ (UNDP) ແລະ NAFRI ໂດຍທຳໜ້າທີ່ເປັນໂຄງຮ່າງວຽກ ແລະ ຍຸດທະສາດໄລຍະຍາວ ເພື່ອຈັດຕັ້ງປະຕິບັດ ວິທີການປະສານງານ ເພື່ອການຊົມໃຊ້ທີ່ດີກວ່າ, ພັດທະນາ ແລະ ອະນຸລັກຄວາມອຸດົມສົມບູນທາງດ້ານຊີວະ ການກະເສດ (FAO 2004).

ໜຶ່ງໃນຫ້າອົງປະກອບທີ່ສຳຄັນຂອງໂຄງການ ແມ່ນ 'ລະບົບການຜະລິດກະສິກຳ ແບບປະສົມປະ ສານ ໂດຍອີງໃສ່ຄົວເຮືອນເປັນພື້ນຖານ', ຊຶ່ງການພັດທະນາກະເສດສວນຄົວສາມາດສະໜອງໃຫ້ໄດ້. ອົງປະກອບນີ້ລວມມີສາມຜົນໄດ້ຮັບທີ່ສຳຄັນຄື:

1. ການປະເມີນຜົນ ຜົນກະທົບຂອງລະບົບການຜະລິດກະສິກຳ ແບບປະສົມປະສານ ໂດຍອີງ ໃສ່ຄົວເຮືອນເປັນພື້ນຖານ(ກະເສດສວນຄົວ) ຕໍ່ກັບຊີວິດການເປັນຢູ່ແບບຍືນຍົງຂອງປະຊາຊົນ. ໂຄງການກະເສດສວນຄົວແບບຢ່າງ ໄດ້ເປັນຫຼັກຖານສະແດງໃຫ້ເຫັນຜົນປະໂຫຍດຂອງກະ ເສດສວນຄົວ ສຳລັບຄວາມພຽງພໍຂອງອາຫານ ແລະ ໂພຊະນາການ ໃນຂະໜາດນ້ອຍ. ທາງໂຄງການຍັງ ຮຽກຮ້ອງຕ້ອງການ ໃຫ້ມີການກຳນົດ ແລະ ສະແດງຫຼັກຖານກ່ຽວກັບອາ ຫານພື້ນເມືອງ ແລະ ລະບົບອາຫານຂອງຊຸມຊົນ ແລະ ການປະກອບສ່ວນຂອງມັນ ຕໍ່ອະນຸໂພຊະນາການ ແລະ ໂພຊະນາການໂດຍທົ່ວໄປ. ຕັ້ງແຕ່ໃດມາແມ່ນມີຂໍ້ຈຳກັດດ້ານຫຼັກ ຖານອ້າງອີງ ໃນດ້ານຄຸນຄ່າທາງໂພຊະນາການຂອງອາຫານພື້ນເມືອງ.

2. ຂະຫຍາຍ ແລະ ປັບປຸງ ລະບົບການຜະລິດກະສິກຳ ແບບປະສົມປະສານ ໂດຍອີງໃສ່ຄົວ

ເຮືອນເປັນພື້ນຖານ ໃນຄົວເຮືອນກຸ່ມເປົ້າໝາຍ ເພື່ອເພີ່ມປະລິມານ ແລະ ຄວາມຫຼາກຫຼາຍ ຂອງ ອາຫານໂພຊະນາການ, ຕົວຢ່າງເຊັ່ນ ໝາກໄມ້, ຜັກ, ສັດນ້ອຍ, ປາ ແລະ ຊັບພະຍາກອນນ້ຳອື່ນໆ. ໃນນີ້ລວມທັງການຝຶກອົບຮົມ ໃຫ້ສະມາຊິກໃນຄອບຄົວ ແລະ ພະນັກງານກະສິກຳ ໃນທຸກລະດັບຂອງ ລະບົບການຜະລິດກະສິກຳ ແບບປະສົມປະສານ ໂດຍອີງໃສ່ຄົວເຮືອນເປັນພື້ນຖານ ແລະ ຂັ້ນຕອນການເກັບກ່ຽວ. ລວມທັງການສະໜອງແນວພັນພືດ, ສັດນ້ອຍ, ປາ, ອຸປະກອນເຮັດສວນ ແລະ ການຊ່ວຍເຫຼືອດ້ານການຕະຫຼາດ.

3. ປັບປຸງຄວາມເຂົ້າໃຈດ້ານໂພຊະນາການໃຫ້ດີຂຶ້ນ: ກິດຈະກຳທີ່ວາງແຜນເອົາໄວ້ມີ ການປະເມີນຜົນຄວາມຕື່ນຕົວຂອງຄົວເຮືອນ ຕໍ່ຄວາມຈຳເປັນທາງດ້ານໂພຊະນາການ, ຝຶກອົບຮົມພະນັກງານ ສົ່ງເສີມໃຫ້ມີຄວາມເຂົ້າໃຈເລື່ອງ ຄວາມຈຳເປັນທາງດ້ານໂພຊະນາການ ແລະ ພັດທະນາອຸປະກອນທີ່ໃຫ້ຄວາມຮູ້ດ້ານໂພຊະນາການ. ການຝຶກອົບຮົມເລື່ອງການຄຸ້ມຄອງໂພຊະນາການ ແລະ ການກະກຽມອາຫານ ໄດ້ຮັບການວາງແຜນໄວ້ສຳລັບຄອບຄົວ, ໃນຂະນະດຽວກັນ ການຍົກລະດັບຄວາມຕື່ນຕົວຕໍ່ ຊ່ອງວ່າງ ແລະ ຄວາມຈຳເປັນດ້ານໂພຊະນາການ ແມ່ນສິ່ງທີ່ຈຳເປັນສຳລັບຜູ້ວາງນະໂຍບາຍ (ໂຄງການຄວາມອຸດົມສົມບູນທາງດ້ານຊີວະການກະເສດແຫ່ງຊາດ ໃນສປປ ລາວ ປີ 2004)

ສະນັ້ນ ການຈັດຕັ້ງປະຕິບັດໂຄງການຄວາມຫຼາກຫຼາຍ ທາງດ້ານຊີວະການກະເສດສາມາດສ້າງຂຶ້ນຕາມ ໂຄງການກະເສດສວນຄົວແບບຢ່າງ, ແລະ ຂະຫຍາຍກິດຈະກຳຕາມລັກສະນະດ້ານພູມສາດ ແລະ ເນື້ອໃນທີ່ສຳຄັນຂອງມັນ.

## ບົດສະຫຼຸບ ແລະ ຂໍ້ແນະນຳ

ລະບົບການກະເສດສວນຄົວ ບໍ່ພຽງແຕ່ຮັບປະກັນທາງດ້ານຄວາມພຽງພໍຂອງອາຫານ ແລະ ປັບປຸງໂພຊະນາການໃຫ້ດີຂຶ້ນເທົ່ານັ້ນ, ແຕ່ຍັງສາມາດສະໜັບສະໜູນທາງດ້ານການອະນຸລັກ, ການນຳເອົາພືດໃນປ່າມາປູກໃນບ້ານ ແລະ ການພັດທະນາເຄື່ອງປູກນຳອີກ. ການພົວພັນຢ່າງສະໜິດແໜ້ນລະຫວ່າງ ຄວາມອຸດົມສົມບູນທາງດ້ານຊີວະສາດ ແລະ ຄວາມພຽງພໍຂອງອາຫານ ຫຼັກຖານທີ່ພົບໃນກະເສດສວນຄົວ, ແລະ ເຖິງແມ່ນວ່າການສຶກສາຄົ້ນຄວ້າ ແລະ ການພັດທະນາກະເສດສວນຄົວ ໃນປະເທດລາວເຮົາຍັງມີຂໍ້ຈຳກັດຢູ່ກໍ່ຕາມ, ວຽກງານຂອງ ໂຄງການຄົ້ນຄວ້າກະສິກຳ ແລະ ປ່າໄມ້ ລາວ-ສະວີເດັນ (LSUAFRP) ແລະ ອົງການອາຫານ ແລະ ການກະເສດໂລກ ໄດ້ໃຫ້ໂອກາດທີ່ສຳຄັນ ສຳລັບການສ້າງຄວາມເຂັ້ມແຂງຍິ່ງໆຂຶ້ນໃຫ້ແກ່ການພົວພັນເຫຼົ່ານີ້. ໂຄງການຄວາມອຸດົມສົມບູນທາງໄດ້ຊີວະການກະເສດແຫ່ງຊາດ ໄດ້ໃຫ້ແຜນວຽກ ເພື່ອສະໜັບສະໜູນ ແລະ ຈັດຕັ້ງປະຕິບັດ ການສຶກສາຄົ້ນຄວ້າ ແລະ ການພັດທະນາກະເສດສວນຄົວ, ແລະ ເພື່ອສ້າງຄວາມເຂັ້ມແຂງ ໃນດ້ານການອະນຸລັກຄວາມອຸດົມສົມບູນທາງດ້ານຊີວະ ການກະເສດ, ການປັບປຸງ ໂພຊະນາການໃຫ້ດີຂຶ້ນ ແລະ ຄວາມພຽງພໍຂອງອາຫານໃນຄົວເຮືອນ, ຊຶ່ງສາມາດສະຫຼຸບໄດ້ດັ່ງນີ້:

- ກະເສດສວນຄົວມີບົດບາດສຳຄັນ ໃນການນຳເອົາເຄື່ອງປ່າຂອງດົງມາປູກໃນບ້ານ ແລະ ການຍ້າຍເອົາພືດທີ່ປູກຢູ່ໄຮ່ມາປູກຢູ່ສວນ. ສະນັ້ນ ຈຶ່ງຄວນຈະມີໂຄງການ ແລະ ການສຶກສາຄົ້ນຄວ້າ ທີ່ມາສະໜັບສະໜູນ ດ້ານຫຼັກຖານ ແລະ ການພັດທະນາ ການນຳເອົາເຄື່ອງປ່າຂອງດົງມາປູກຢູ່ບ້ານ ແລະ ການອະນຸລັກພືດທີ່ປູກຢູ່ໄຮ່.

- ສວນຄົວເຮືອນໄດ້ປະກອບສ່ວນສຳຄັນ ເຂົ້າໃນດ້ານຄວາມອຸດົມສົມບູນ ຂອງອາຫານ ແລະ ຄວາມພຽງພໍທາງດ້ານອາຫານ ແລະ ໂພຊະນາການຂອງຄົວເຮືອນໃນເຂດຊົນນະບົດ. ແບບຢ່າງໂຄງການລິເລີ່ມ ແລະ ວິທີການດຳເນີນງານ, ພ້ອມທັງ ຜົນສຳຂອງກະເສດສວນຄົວ ຄວນຈະໄດ້ຮັບການ ເສີມຂະຫຍາຍ ແລະ ເປັນແມ່ແບບ ຢູ່ທົ່ວທຸກຂົງເຂດຊົນນະບົດ.

- ໂຄງການກະເສດສວນຄົວ, ພ້ອມດ້ວຍໂຄງການກະສິກຳອື່ນໆ ແລະ ນະໂຍບາຍຕ່າງໆ, ຄວນຈະມີການພິຈາລະນາຖືເອົາຄວາມອຸດົມສົມບູນ ທາງດ້ານຊີວະການກະເສດເຂົ້າໃນບັນຊີ ເມື່ອເວລາ ມີການສົ່ງເສີມເຄື່ອງປູກຊະນິດໃໝ່ ຫຼື ສະເໜີໃຫ້ມີການປ່ຽນແປງ ລະບົບການກະເສດທີ່ມີຢູ່. ຖ້າຫາກ ຄວາມສົນໃຈ ເລື່ອງຄວາມອຸດົມສົມບູນ ທາງດ້ານຊີວະ ການກະເສດ ບໍ່ໄດ້ຮັບການພິຈາລະນາ ໃນລະດັບໂຄງການ ແລະ ນະໂຍບາຍແລ້ວ, ຜົນຮ້າຍກໍ່ຈະຕາມມາຢ່າງຫຼີກລ່ຽງບໍ່ໄດ້.

- ອາຫານພື້ນເມືອງມີຄວາມສຳຄັນ ຕໍ່ຄວາມພຽງພໍທາງດ້ານອາຫານ ຂອງຫຼາຍຄົວເຮືອນໃນເຂດຊົນນະບົດ ແລະ ເບິ່ງຄືຈັ່ງວ່າມັນໄດ້ປະກອບສ່ວນເຂົ້າໃນອະນຸໂພຊະນາການ ແລະ ຄຸນນະພາບ ຂອງໂພຊະນາການອື່ນໆ. ເຖິງແນວໃດກໍ່ຕາມ ຈຳເປັນຈະຕ້ອງໄດ້ບັນທຶກໄວ້ເປັນຫຼັກຖານ ແລະ ສະໜັບສະໜູນການສຶກສາຄົ້ນຄວ້າຕື່ມອີກ. ເພີ່ມທະວີຄວາມຮູ້ທີ່ມີຢ່າງຈຳກັດ ກ່ຽວກັບຄຸນນະພາບດ້ານໂພຊະນາການຂອງອາຫານພື້ນເມືອງ ຈະສາມາດເຮັດໃຫ້ມີການສົ່ງເສີມ ແລະ ຜະລິດເປັນສິນຄ້າຫຼາຍຂຶ້ນ.

- ການໃຫ້ຄວາມຮູ້ດ້ານໂພຊະນາການຄວນ ແມ່ນອົງປະກອບຮ່ວມຂອງກິດຈະກຳ ພັດທະນາຊຸມຊົນ, ສະນັ້ນເພື່ອເປັນການສົ່ງເສີມ ໃຫ້ມີຄວາມຕື່ນຕົວເພີ່ມຂຶ້ນ ແລະ ການບໍລິໂພກອາຫານທີ່ຫຼາກຫຼາຍ ທີ່ຕ້ອງການໃຫ້ແກ່ຄວາມຈຳເປັນ ທາງດ້ານໂພຊະນາການຂອງອາຫານ.

- ເຄືອຂ່າຍຊຸມຊົນເປັນສິ່ງທີ່ຈຳເປັນ ຕໍ່ການຕິດຕາມກວດກາເບິ່ງໂພຊະນາການ ແລະ ສົ່ງເສີມຄວາມພຽງພໍຂອງອາຫານ, ໂພຊະນາການ, ສຸຂະພາບ ແລະ ການປັບປຸງເສດຖະກິດຄອບຄົວ. ຖືວ່າແມ່ນສ່ວນໜຶ່ງຂອງການສ້າງກຳລັງ ແລະ ຄວາມອາດສາມາດໃຫ້ແກ່ຊຸມຊົນ, ສະມາຊິກຊຸມຊົນທັງມວນ ທີ່ຢູ່ໃນສະພາບທີ່ອັນຕະລາຍ ຄວນຈະໄດ້ຮັບການຈັດຕັ້ງ ແລະ ຝຶກອົບຮົມ ເພື່ອສ້າງຊີວິດ ການເປັນຢູ່ຂອງຄົນ ໃນຊົນນະບົດໃຫ້ມີຄວາມເຂັ້ມແຂງ ແລະ ປັບປຸງໂພຊະນາການໃຫ້ດີຂຶ້ນກວ່າເກົ່າ.

**ຜູ້ຂຽນ:**
Ms. Pernille M. Dyg ເຮັດວຽກເປັນ ພະນັກງານພັດທະນາກະສິກຳ ແລະ ຄວາມພຽງພໍຂອງອາຫານ ໃຫ້ແກ່ອົງການອາຫານ ແລະ ການກະເສດໂລກໃນ ນະຄອນຫຼວງວຽງຈັນ, ທີ່ຢູ່ອີເມລແມ່ນ. pernille.dyg@faolao.org

ທ່ານ ສະລຶມສີ ພິທະຍະພອນ, ຈາກກະຊວງກະສິກຳ ແລະ ປ່າໄມ້, ເປັນອະດີດອຳນວຍການໂຄງການແຫ່ງຊາດ ກັບໂຄງການລິເລີ່ມ ເພື່ອປັບປຸງສະພາບໂພຊະນາການໃຫ້ດີຂື້ນ ຂອງອົງການອາຫານ ແລະ  ການກະເສດໂລກ.

***The Authors:***

*Ms. Pernille M. Dyg works as Food Security and Agricultural Development Officer for FAO in Vientiane. pernille.dyg@faolao.org*

*Mr. Saleumsy Phithayaphone, of the Ministry of Agriculture and Forestry, is former National Project Director with the FAO Pilot Project for the Promotion of Home Gardens for Improved Nutritional Well-Being.*

## References:

Engels, J. 2001. "Home gardens - a genetic resources perspective." In *Home gardens and in situ conservation of plant genetic resources in farming systems*. Proceedings of the Second International Home Gardens Workshop. 17-19 July, Witzenhausen, Germany. Watson and Eyzaguirre (Eds), IPGRI.

Eyzaguirre, P. & Watson, J. 2001. "Home gardens and agro-biodiversity; an overview across regions." In *Home gardens and in situ conservation of plant genetic resources in farming systems*. Proceedings of the Second International Home Gardens Workshop. 17-19 July, Witzenhausen, Germany.

FAO. 2004. *National Agricultural Biodiversity Programme in Lao PDR*. Vientiane.

FAO. 2003. *Nutrition Country Profile - Laos*. FAO, Rome.

FAO & Department of Agriculture (DOA), MAF, 2004. Report - *Pilot Project on the Promotion of Home Gardens for Improved Nutritional Well-being*. TCP/LAO/2902 (A).

FAO RAP. 1998. *Women in Agriculture, Environment and Rural Production*. FAO Fact Sheet, Lao PDR. FAO Regional Office for Asia and the Pacific. Bangkok, Thailand.

Fu, Y. et al 2003. "Relocating Plants form Swidden Fallows to Gardens in Southwestern China". *Economic Botany* 57 (3) pp. 389-402. The New York Botanical Garden Press, Bronx, NY.

Ministry of Health & State Planning Committee .2001. Report on National Health Survey - *Health Status of the People in Lao PDR*. Vientiane.

Sodarak, H. et al 2003. I*ndigenous agroforestry practices in two districts in the northern part of Lao PDR*. Lao Swedish Upland Agriculture and Forestry Research Programme and Northern Agriculture and Forestry Research Programme. Vientiane.

Trinh, L.N. et al 2001. "Role of home gardens in the conservation of plant genetic resources in Vietnam." In *Home gardens and in situ conservation of plant genetic resources in farming systems*. Proceedings of the Second International Home Gardens Workshop. 17-19 July, Witzenhausen, Germany. Watson & Eyzaguirre (Eds), IPGRI.

Souvanthalisith, S. 2002. *Gender Role and the Use of Land under Land Allocation: Case Study of Land Allocation Project in Luang Prabang, Lao PDR*. AIT, School for Environment, Resources and Development. Thailand.

Vavilov, N.I. 1940. *Origin and Geography of Cultivated Plants* (translated by Doris Love. 1992. Cambridge University Press, Cambridge).

# ການຄ້າມະນຸດ ແລະ ການຫລຸດຜ່ອນ ຄວາມທຸກຈົນ: ສອງດ້ານໃນຫຼຽນອັນດຽວ

ໂດຍ ສະເວຍ ໂມແລນ

*ເອກະສານ ສະບັບນີ້ຄົ້ນຫາການເຊື່ອມໂຍງ ລະຫ່ວາງ ການຄ້າມະນຸດ ແລະ ຍຸດທະສາດແຫ່ງການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ. ການເຊື່ອມໂຍງຕ່າງໆ ລະຫ່ວາງ ການອົບພະຍົບໄປຢູ່ທີ່ອື່ນ, ຄວາມທຸກຈົນ ແລະ ການຄ້າມະນຸດ ໄດ້ຮັບການຄົ້ນຄ້ວາໃນເອກະສານສະບັບນີ້. ເອກະສານສະບັບນີ້ ໃຫ້ເຫດຜົນວ່າໄດ້ມີຂໍ້ມູນ ທີ່ຈຳກັດທີ່ແນະນຳວ່າ ການຫລຸດຜ່ອນຄວາມທຸກຈົນຢ່າງສົມບູນ ຈະມີຜົນສະທ້ອນ ໃຫ້ແກ່ການຄ້າມະນຸດ: ເປັນທີ່ສົງໄສວ່າ ຍຸດທະສາດແຫ່ງ ການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ຈະສາມາດຮັບມືກັບການອົບພະຍົບໄປຢູ່ທີ່ອື່ນ ຫຼືການຄ້າມະນຸດໄດ້ຫຼືບໍ່. ຜູ້ຂຽນເອກະສານສະບັບນີ້ ຍັງພິຈາລະນາເຖິງແນວຄິດທີ່ວ່າ ບາງມຸມມອງ ຂອງ ຍຸດທະສາດແຫ່ງການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດທີ່ອາດ ຈະພາໃຫ້ມີການເພີ່ມຂຶ້ນ ຂອງການຄ້າມະນຸດຈາກທັດສະນະທັງສອງດ້ານ ຂອງ ການຕອບສະໜອງ ແລະ ຄວາມຮຽກຮ້ອງຕ້ອງການ. ບົດເລື່ອງນີ້ໄດ້ຈົບລົງດ້ວຍການໃຫ້ຂໍ້ສັງເກດ ບາງຢ່າງທີ່ກ່ຽວຂ້ອງກັບ ກົດໝາຍ ແລະ ຍຸດທະສາດນະໂຍບາຍ ການອົບພະຍົບໄປຢູ່ທີ່ອື່ນຢ່າງຖືກຕ້ອງຕາມກົດໝາຍ ແລະ ປອດໄພອີກດ້ວຍ.*

## ພາກສະເໜີ

ໃນ ສປປ ລາວ ບັນຫາການຄ້າມະນຸດແມ່ນບັນຫາ ທີ່ໄດ້ຮັບຄວາມເອົາໃຈໃສ່ຫຼາຍຂຶ້ນໃນໄລຍະສອງ-ສາມປີຜ່ານມາ, ໂຄງການຕ້ານການຄ້າມະນຸດ ປະກອບເປັນອົງປະກອບໜຶ່ງ ທີ່ພົວພັນກັບວຽກງານດ້ານການພັດທະນາ, ດ້ວຍອາຍຸໂຄງການຕ້ານການຄ້າມະນຸດ ທີ່ຫຼາຍທີ່ສຸດແມ່ນຍັງຕໍ່າກ່ວາ 5 ປີ, ແຕ່ວ່າໂຄງການຕ່າງໆທີ່ກ່ຽວກັບການຕ້ານບັນຫາ ການຄ້າມະນຸດໄດ້ມີການຂະຫຍາຍຕົວຢ່າງວ່ອງໄວ. ມາຮອດປະຈຸບັນນີ້ ກໍ່ໄດ້ມີໂຄງການ ຕ້ານບັນຫາ ການຄ້າມະນຸດຫຼາຍກ່ວາ 12 ໂຄງການ ໃນທົ່ວປະເທດ. ສປປ ລາວ ມີກົດໝາຍການປາບປາມການຄ້າມະນຸດສະບັບໃໝ່ ແລະ ສປປ ລາວ ກໍ່ໄດ້ເຂົ້າເປັນພາຄີອະນຸສັນຍາ ຕ້ານອາຊະຍາກຳຂ້າມຊາດ, ຊຶ່ງກໍ່ລວມທັງອະນຸສັນຍາວ່າດ້ວຍການຕ້ານການຄ້າມະນຸດ. ນອກຈາກນີ້, ລັດຖະບານ ຍັງໄດ້ພັດທະນາ ຍຸດທະສາດແຫ່ງການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ, ຊຶ່ງເປັນເອກະສານນະໂຍບາຍ ລະອຽດວ່າດ້ວຍທິດທາງຂອງການພັດທະນາຂອງ ສປປ ລາວ ໃນອະນາຄົດ. ຈຸດປະສົງຂອງເອກະສານສະບັບນີ້ແມ່ນເພື່ອຊີ້ໃຫ້ເຫັນຈຸດເຊື່ອມໂຍງທີ່ເປັນໄປໄດ້ ລະຫວ່າງວຽກງານດ້ານການ ຕ້ານການຄ້າມະນຸດ ແລະ ແຜນຍຸດທະສາດແຫ່ງການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກ.

## ການຄ້າມະນຸດແມ່ນຫຍັງ?

ສົນທິສັນຍາ ການຄ້າມະນຸດ ຂອງ ສປຊ ທີ່ໄດ້ລົງນາມເມື່ອບໍ່ນານມານີ້ ວ່າດ້ວຍ ອະນຸສັນຍາການຕ້ານອາຊະຍາກຳລະຫ່ວາງຊາດ ໄດ້ໃຫ້ນິຍາມການຄ້າມະນຸດໄວ້ດັ່ງນີ້:

"ການຮັບ, ການເຄື່ອນຍ້າຍ ຫຼື ຂົນສົ່ງພະນັກງານທັງຈາກການຂົນສົ່ງທາງເຮືອ ຫຼື ທາງບົກ, ໂດຍວິທີການຂົ່ມຂູ່, ໃຊ້ກຳລັງ ຫຼືຮູບແບບອື່ນໆເພື່ອການຂູ່ເຂັນ, ລັກພາໂຕ, ສໍ້ໂກງ, ຫຼອກລວງ, ໃຊ້ອຳນາດ ຫຼື ຕຳແໜ່ງໃນທາງທີ່ຜິດ, ຫຼືໂດຍການໃຫ້ ຫຼືຮັບສິດຜົນປະໂຫຍດຕ່າງໆ ເພື່ອເຮັດໃຫ້ໄດ້ຮັບການຍິນຍອມຂອງບຸກຄົນໃດໜຶ່ງ ເພື່ອສາມາດຄວບຄຸມຜູ້ອື່ນ ເພື່ອຈຸດປະສົງຂອງການສະແຫວງຫາຜົນປະໂຫຍດ (ອີງການ ສປຊ 2000:3).

ສົນທິສັນຍາໃຫ້ຂໍ້ສັງເກດວ່າ:

"ການສະແຫວງຫາຜົນປະໂຫຍດ ຢ່າງໜ້ອຍທີ່ສຸດແມ່ນຈະລວມທັງການສະແຫວງຜົນປະໂຫຍດຈາກການຄ້າປະເວນີຂອງຜູ້ອື່ນ ຫຼື ໃນຮູບແບບ ຂອງການສະແຫວງຫາຜົນປະໂຫຍດ ທາງເພດຮູບການອື່ນໆ, ການໃຊ້ບໍລິການ ແລະ ແຮງງານດ້ວຍການບັງຄັບ, ຂ້າທາດ ຫຼື ການປະຕິບັດລັກສະນະຕ່າງໆ ທີ່ຄ້າຍຄືກັບຂ້າທາດ, ກັກຂັງໜ່ວງໜ່ຽວອິດສະຫຼະພາບ ຫຼື ທຳຮ້າຍຮ່າງກາຍ."

ນິຍາມທີ່ຍາວດັ່ງກ່າວນີ້ ແມ່ນງ່າຍກ່ວາທີ່ຈະເຂົ້າໃຈ ໂດຍການຊີ້ໃຫ້ເຫັນຈາກມຸມມອງ ຂອງຜູ້ທີ່ດຳເນີນການຄ້າມະນຸດ: *ຜູ້ຄ້າມະນຸດ ໄດ້ໃຊ້ວິທີຫຼອກລວງ ຫຼືການບັງຄັບ (ວິທີການ) ເພື່ອຍ້າຍບຸກຄົນໜຶ່ງ (ການກະທຳ) ສູ່ສະພາບການສະແຫວງຜົນປະໂຫຍດ (ຈຸດປະສົງ).* ການຄ້າມະນຸດລວມມີ 3 ປັດໄຈຕົ້ນຕໍ ແລະ ໃຫ້ຜົນປະໂຫຍດ ແກ່ຜູ້ຄ້າມະນຸດໂດຍຜ່ານ ສະພາບການສະແຫວງຫາຜົນປະໂຫຍດ. ໃນທີ່ນີ້ ກວມເຖິງເຫດຜົນຕົ້ນຕໍ ສຳລັບການກໍ່ອາຊະຍາກຳ. ການວິເຄາະຮູບແບບລະອຽດຂອງການຄ້າມະນຸດ ແມ່ນຢູ່ເໜືອຂອບເຂດຂອງເອກະສານສະບັບນີ້. ຢ່າງໃດກໍຕາມ, 3 ປະເດັນ ດັ່ງຕໍ່ໄປນີ້ ຄວນໄດ້ຮັບການເອົາໃຈໃສ່:

ປະເດັນທີໜຶ່ງ, ສາມປັດໄຈຕົ້ນຕໍຂອງການຄ້າມະນຸດ ແມ່ນມາຈາກຫຼາຍຮູບການ. ວິທີການຕ່າງໆ ທີ່ຄົນ ຖືກເຄື່ອນຍ້າຍແມ່ນມີຄວາມຫຼາກຫຼາຍ ແລະມີຫຼາຍຮູບແບບ ແລະ ຫຼາຍລະດັບຂອງຄວາມຮຸນແຮງ ຂອງການກົດຂີ່ຂູດຮີດ ທີ່ແຕກຕ່າງກັນໃນຫຼາຍໆຂົງເຂດ. ດັ່ງນັ້ນການຄ້າມະນຸດຈຶ່ງລວມເຖິງບັນດາກິດຈະກຳຕ່າງໆຂອງມະນຸດເຮົາ.

ປະເດັນທີສອງ, ເພີ່ມຕື່ມເຂົ້າອີກ, "ປະເດັນການຄ້າຜິດກົດໝາຍ" ມັກຈະເປັນປະເດັນທີ່ຖືກດຶງເຂົ້າໃນການສົນທະນາໃນຫຼາຍໆ ວາລະທາງດ້ານການເມືອງ, ທາງດ້ານຈິດໃຈ ແລະອຸດົມການ. ການຄ້າມະນຸດແມ່ນໜຶ່ງ ຂອງຜົນທີ່ອອກມາຈາກການກະທົບຊຶ່ງກັນ ແລະ ກັນຂອງສັງຄົມຕ່າງໆ ທີ່ມີຄວາມແຕກຕ່າງອັນຫຼວງຫຼາຍໃນລະດັບ ການພັດທະນາເສດຖະກິດ-ສັງຄົມ ແລະມັນເປັນສິ່ງທ້າທາຍທີ່ຈະສ້າງພື້ນຖານ ອັນເປັນກາງທາງດ້ານຈິດໃຈ ເພື່ອການສົນທະນາ ແລະ ການເປັນເອກະສັນ.

---

***ຖ້າຫາກລັດຖະບານ ຈິງຈັງໃນຄວາມພະຍາຍາມຂອງຕົນທີ່ຈະຕໍ່ຕ້ານກັບການກົດຂີ່ຂູດຮີດຕ່າງໆແລ້ວ ຈາກນັ້ນແນວຄວາມຄິດຂອງການຕ້ານການຄ້າມະນຸດ ກໍ່ຈະເປັນສິ່ງທີ່ຊ້ຳຊ້ອນ***

---

ໂດຍສະເພາະ ສິ່ງດັ່ງກ່າວແມ່ນກໍລະນີ ເມື່ອກ່າວເຖິງຂົງເຂດທາງເພດ, ແຕ່ກໍຍັງມີແນວຄິດຂັດແຍ່ງກັນກ່ຽວກັບແຮງງານພາຍໃນປະເທດ (Anderson et al. 2003). ຄວາມຈິງທີ່ວ່າລະບຽບການກົດໝາຍສ່ວນຫຼາຍແມ່ນຍັງອ່ອນນ້ອຍ ແລະ ມີເຫດການຂະບວນຍຸຕິທຳທີ່ເກີດຂຶ້ນ ກ່ອນໜ້ານີ້ເປັນຈຳນວນຈຳກັດ (ໃນລະດັບສາກົນແລ້ວ ມີການຕັດສິນຄະດີລົງໂທດເປັນຈຳນວນໜ້ອຍ) ນັ້ນໝາຍເຖິງມີການຂາດຄວາມ ກະຈ່າງແຈ້ງທາງດ້ານແນວຄວາມຄິດຈາກບ່ອນຢືນທາງດ້ານກົດໝາຍອີກດ້ວຍ.

ປະເດັນທີສາມ, ການກຳນົດນິຍາມ ຂອງການຄ້າມະນຸດ ແບບຜິດກົດຫມາຍ ຂອງ ອົງການສະຫະປະຊາຊາດ ໄດ້ໃຫ້ຄວາມກະຈ່າງແຈ້ງ ຍ້ອນແມ່ນການນຳໃຊ້ເຫດການຕົວຈິງທີ່ເກີດຂຶ້ນແລ້ວ. ສິ່ງດັ່ງກ່າວ ມີຜົນກະທົບ ອັນໃຫຍ່ຫຼວງສຳລັບການຕິດຕາມ, ໂດຍສະເພາະຈາກຊຸມຊົນທີ່ສົ່ງຄົນອອກໄປ. ມັນແມ່ນຫຼັງຈາກຜູ້ໃດຜູ້ໜຶ່ງໄດ້ຕົກຢູ່ໃນສະພາບ ການກົດຂີ່ຂູດຮີດ ຊຶ່ງການຄ້າມະນຸດແບບຜິດກົດໝາຍ ສະແດງອອກ. ຂໍ້ກຳນົດນີ້ໃຫ້ເຫັນເຖິງຄວາມກະຈ່າງແຈ້ງວ່າ ມີພຽງແຕ່ເຈດຕະນາເພື່ອຜົນປະໂຫຍດ ບໍ່ແມ່ນການກະທຳໂດຍບໍ່ເຈດຕະນາ ເພື່ອຜົນປະໂຫຍດ ທີ່ຖືກກ່າວຫາວ່າເປັນຄະດີອາຍາ, ມັນແມ່ນຈຸດປະສົງເພື່ອຂູດຮີດ, ບໍ່ແມ່ນການຂູດຮີດໃນຕົວມັນເອງ, ດັ່ງທີ່ຄຳນິຍາມກວມເອົາ. ວິທີແກ້ໄຂທີ່ຈະແຈ້ງຕໍ່ສິ່ງທ້າທາຍນີ້ ແມ່ນຕ້ອງຖືສະພາບການຂູດຮີດ ທີ່ຜູ້ຍົກຍ້າຍຖິ່ນຖານອາດຕົກເຂົ້າໄປ ເປັນຄວາມຜິດທາງອາຍາ. ແຕ່ເຖິງຢ່າງໃດ, ການປະຕິບັດສິ່ງດັ່ງກ່າວ ຈະຕ້ອງການຄວາມຕັ້ງໜ້າອັນສຳຄັນ ທາງດ້ານການເມືອງ ໃນບັນດາປະເທດທີ່ຮັບຜູ້ຍົກຍ້າຍຖິ່ນຖານ. ດັ່ງນັ້ນ, ແນວຄວາມ ຄິດກ່ຽວກັບ ການຄ້າມະນຸດ ຈຶ່ງສະທ້ອນໃຫ້ເຫັນທ່າອ່ຽງຂອງຫຼາຍໆ ລັດຖະບານ (ບັນດາປະເທດຈາກຕະເວັນຕົກ) ບໍ່ແກ້ໄຂການຂູດຮີດ ແລະ ທາລຸນພົນລະເມືອງທີ່ຍົກຍ້າຍ ເຂົ້າມາໃນປະເທດພາຍໃນ ຂອບເຂດສິດອຳນາດຂອງຕົນ, ແຕ່ມັກຈະຖິ້ມຄວາມຮັບຜິດຊອບຕົ້ນຕໍໃຫ້ບັນດາຊຸມຊົນທີ່ສົ່ງອອກດ້ວຍການ ຍຸຕິການເຄື່ອນຍ້າຍ (ເຊັ່ນ ການຄ້າຜິດກົດໝາຍ). ໃນທາງພາສາສາດ, ມັນຈະຕ້ອງເນັ້ນ ໜັກວ່າ ການນຳໃຊ້ຄຳສັບ "ການຄ້າຜິດກົດໝາຍ" ຈະກໍ່ໃຫ້ເກີດການບ່າຍບ່ຽງໄປຫາການເຄື່ອນຍ້າຍ ແລະ ຄວາມບໍ່ກະຈ່າງແຈ້ງປົກບັງບັນຫາຮຸນແຮງກວ່າ ແລະ ການຂູດຮີດຕົວຈິງ. ນອກຈາກນັ້ນ, ເມື່ອຫາກເຈດຕະນາ ແມ່ນເປັນຂອງຍາກທີ່ຈະຢັ້ງຢືນ, ແລະ ພ້ອມດຽວກັນກໍຖືເປັນໄມ້ຫຼາວັດແທກການນິຍາມອັນຕົ້ນຕໍ ທີ່ເຮັດໃຫ້ການຄ້າຜິດກົດໝາຍແຕກຕ່າງອອກຈາກການຍົກຍ້າຍຖິ່ນຖານ, ບັນດາລັດຖະບານຈຶ່ງຊອກຊ່ອງທາງເລືອກແບບງ່າຍດາຍເພື່ອຕັດສິນວ່າ ກໍລະນີໃດເປັນ "ການຄ້າຜິດກົດໝາຍ" ຫຼື "ການຍົກຍ້າຍຖິ່ນຖານຜິດກົດໝາຍ" ຕາມທີ່ຕົນເຫັນວ່າເໝາະສົມ.

ຖ້າຫາກບັນດາລັດຖະບານຕ່າງໆ ຫາກຈິງໃຈແນ່ວແນ່ ໃນການພະຍາຍາມຕ້ານການຂູດຮີດ, ເຖິງແມ່ນຈະຢູ່ໃນບັນດາຜູ້ຍົກຍ້າຍຖິ່ນຖານ ທີ່ບໍ່ຖືກກົດໝາຍກໍຕາມ, ແນວຄວາມຄິດກ່ຽວກັບ ການຄ້າຜິດກົດໝາຍ ໃນດ້ານທິດສະດີແລ້ວກໍຈະເປັນສິ່ງທີ່ຊ້ຳຊາກ. ແທນທີ່ຈະເປັນແນວນັ້ນ, ພວກເຮົາກໍຈະມີວາລະກອງປະຊຸມສາກົນ ເພື່ອຕ້ານການຂູດຮີດແຮງງານຢູ່ໃນທົ່ວໂລກ, ທີ່ມີຄຳນິຍາມກວ້າງຂວາງເພື່ອກວມເອົາກິດຈະກຳທີ່ບໍ່ຈະແຈ້ງເຊັ່ນ ການຄ້າປະເວນີ, ວຽກງານພາຍໃນ ແລະ ການຄ້າມະນຸດເພື່ອເອົາໄປເປັນລູກລ້ຽງ ແລະ ແຕ່ງງານ.

ການເຊື່ອມໂຍງກັນຂອງ (1) ລັກສະນະຂອງການຄ້າມະນຸດສ່ວນຫຼາຍແມ່ນບໍ່ສາມາດຮູ້ໄດ້ລ່ວງໜ້າ, (2) ການຄ້າມະນຸດພົວພັນເຖິງ ເລື່ອງທີ່ຊັບຊ້ອນຂອງພຶດຕິກຳມະນຸດ ແລະ (3) ລັກສະນະການເມືອງ, ແນວຄິດ ແລະ ສິນລະທຳທີ່ມີໃນຕົວ, ເມື່ອອະທິບາຍລົງເລິກ ເຖິງເຫດຜົນແມ່ນບໍ່ມີຄວາມເຫັນກົງກັນຮ້ອຍເປີເຊັນ ສ່ວນໜຶ່ງແມ່ນຄວາມໝາຍທີ່ແທ້ຈິງຂອງການຄ້າມະນຸດ ແລະ ເປັນຫັຍງຈຶ່ງ

ຂາດຄວາມຮູ້ກ່ຽວກັບຈຳນວນທີ່ແທ້ຈິງຂອງມັນ. ນອກຈາກ ສິ່ງທ້າທາຍສາມຢ່າງນີ້ແລ້ວ. ການຄົ້ນຄ້ວາ ກ່ຽວກັບຂະແໜງການຄ້າມະນຸດ ໃນປະເທດລາວແມ່ນຫາກໍ່ເກີດໃໝ່ ແລະ ມີຂໍ້ຈຳກັດ. ບໍ່ມີຄວາມພະຍາຍາມພຽງພໍ ເພື່ອເຊື່ອມໂຍງການຄ້າມະນຸດກັບຍຸດທະສາດ ນະໂຍບາຍທີ່ມີລັກສະນະ ທີ່ກ້ວາງ ຂວາງ. ສະນັ້ນ ການເຊື່ອມໂຍງກັນລະຫວ່າງການຄ້າມະນຸດກັບ ຍຸດທະສາດການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ແມ່ນບໍ່ມີຢູ່ໃນຂໍ້ກຳນົດຮາກຖານທາງປັນຍາ, ດັ່ງນັ້ນເອກະສານສະບັບນີ້ ເປັນພຽງການຄາດເດົາສະພາບການໃນອະນາຄົດ.

## ການອົບພະຍົບໄປຢູ່ທີ່ອື່ນ ແລະ ການຫລຸດຜ່ອນຄວາມທຸກຍາກ

ເປັນທີ່ເຂົ້າໃຈຢ່າງກ້ວາງຂວາງວ່າ ການຄ້າມະນຸດ ແມ່ນມີການພົວພັນຢ່າງສະໜິດແໜ້ນກັບບັນຫາຄວາມທຸກຍາກ, ເພາະວ່າປະຊາຊົນມີຄວາມທຸກຍາກລຳບາກ, ເຂົາເຈົ້າຈຶ່ງມີທ່າອ່ຽງໃນການທີ່ຈະຢາກຍົກຍ້າຍໄປຫາວຽກເຮັດຢູ່ບ່ອນອື່ນ. ຍ້ອນຄວາມທຸກຍາກ ຈຶ່ງເຮັດໃຫ້ຄົນເຮົາເຊື່ອຄົນອື່ນງ່າຍ ແລະ ຂາດ ຄວາມຕື່ນຕົວ, ເຮັດໃຫ້ເຂົາເຈົ້າອ່ອນໄຫວໄປຕາມຄຳເວົ້າຫວານໆ ແບບຊັກຊວນຂອງຜູ້ຄ້າມະນຸດ. ຍ້ອນວ່າຄົນທຸກຍາກ, ເຂົາເຈົ້າມີສະຖານະພາບທາງດ້ານສັງຄົມ ທີ່ຕໍ່າຕ້ອຍ ຊຶ່ງເຮັດໃຫ້ເຂົາເຈົ້າເຫຼົ່ານັ້ນບອບບາງທີ່ຈະກະທຳຜິດ. ຍ້ອນຄວາມທຸກຍາກ, ຊາວໜຸ່ມຈຳນວນຫຼວງຫຼາຍ ຈຶ່ງມຸ້ງຫວັງຢາກທີ່ຈະປັບປຸງສະ ພາບການດຳລົງຊີວິດຂອງເຂົາເຈົ້າໃຫ້ດີຂຶ້ນ. ດັ່ງນັ້ນຈຶ່ງມີການສ້າງຕະຫຼາດການແຂ່ງຂັນທີ່ເປີດກ້ວາງໂອ ກາດໃຫ້ມີການກະທຳຜິດ ຍ້ອນຂາດການຄວບຄຸມທາງດ້ານລະບຽບກົດໝາຍ ແລະ ການບັງຄັບໃຊ້ກົດໝາຍຍັງບໍ່ໄດ້ຮັບການຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຕໍ່ບັນຫານີ້ ບາງທີກໍ່ມີຄວາມເປັນຈິງຢູ່ຫຼາຍດ້ານ. ໂດຍທົ່ວໄປແລ້ວ ມັນກໍ່ເປັນຄວາມຈິງທີ່ວ່າ ຄົນທີ່ດ້ອຍໂອກາດກ່ວາຈະຍົກຍ້າຍໄປບ່ອນອື່ນ ທີ່ເຂົາເຈົ້າຈະພົບກັບໂອກາດທີ່ດີກ່ວາ. ສະນັ້ນ ການເຄື່ອນໄຫວອົບພະຍົບແຮງງານຈາກ ສປປ ລາວ ໄປສູ່ປະເທດໄທ ຈຶ່ງໄດ້ມີການບັນທຶກໄວ້ຢ່າງຈະແຈ້ງ, ແລະການ ອົບພະຍົບສ່ວນຫຼາຍແມ່ນມີການເຄື່ອນໄຫວ ອອກຈາກເຂດທີ່ທຸກຍາກໄປຫາເຂດ ທີ່ຮັ່ງມີກ່ວາ (Marshall, 2001; Adam and Page, 2003). ຢ່າງໃດກໍ່ຕາມ, ການສັງເກດໂດຍທົ່ວໄປນີ້ ບໍ່ໄດ້ອະທິບາຍຢ່າງລະອຽດວ່າ ແມ່ນໃຜທີ່ຍົກຍ້າຍ ແລະ ເພາະສາຍເຫດໃດ, ແລະ ສຳຄັນທີ່ສຸດແມ່ນໃຜໃນຈຳນວນນີ້ ທີ່ຈົບລົງດ້ວຍການຖືກຄ້າມະນຸດ ແລະ ດ້ວຍເຫດໃດ. ດັ່ງນັ້ນ, ຈຶ່ງມີສອງແງ່ມຸມກ່ຽວກັບຄວາມທຸກຍາກ ແລະ ການຄ້າມະນຸດ ທີ່ຄວນຈະຖືກແຍກອອກຈາກກັນ ເພື່ອຈຸດປະສົງໃນການວິເຄາະວິໄຈ: ຄວາມແຕກຕ່າງລະຫວ່າງ ຄວາມທຸກຈົນທີ່ແທ້ຈິງ ແລະ ຄວາມທຸກຈົນໃນລະດັບໃດໜຶ່ງ ແລະ ຄວາມແຕກຕ່າງ ລະຫວ່າງ ສິ່ງທີ່ກໍ່ໃຫ້ເກີດ ການອົບພະຍົບໄປຢູ່ທີ່ອື່ນ ແລະ ສິ່ງທີ່ກໍ່ໃຫ້ເກີດມີການຄ້າມະນຸດ. ດັ່ງທີ່ພວກເຮົາຈະເຫັນໄດ້ຈາກຂ້າງລຸ່ມນີ້, ມັນເປັນສິ່ງທີ່ເຂົ້າໃຈຜິດທີ່ຈະເອົາ ບັນຫາໃດໜຶ່ງທີ່ແຕກຕ່າງ ກັນເຂົ້າປະສົມກັບອີກບັນຫາໜຶ່ງ.

## ການອົບພະຍົບໄປຢູ່ທີ່ອື່ນ: ຄວາມທຸກຍາກທີ່ແທ້ຈິງ ແລະ ຄວາມທຸກຍາກໃນລະດັບໃດໜຶ່ງ:

ດັ່ງທີ່ໄດ້ກ່າວໄວ້ກ່ອນໜ້ານີ້, ມີການສັນນິຖານກັນໂດຍທົ່ວໄປ ວ່າຄວາມທຸກຍາກເປັນສາຍເຫດຕົ້ນຕໍຂອງການຄ້າມະນຸດ. ຢ່າງໃດກໍ່ຕາມ, ມັນມີຂໍ້ມູນທີ່ຈຳກັດທີ່ຈະສະໜັບສະໜູນ ຕໍ່ການກ່າວອ້າງທີ່ວ່າຄົນທຸກແມ່ນມີທ່າອ່ຽງທີ່ຈະອົບພະຍົບໄປຢູ່ທີ່ອື່ນ. ໃນທາງກົງກັນຂ້າມ, ການຄົ້ນຄ້ວາພັດຊີ້ໃຫ້ເຫັນວ່າ ມັນມີ ຄວາມສຳພັນກັນລະຫ່ວາງ ການອົບພະຍົບໄປຢູ່ທີ່ອື່ນ ແລະ ຊາວບ້ານທີ່ມີລາຍໄດ້ປານກາງ (MLSW/ILO 2003; MLSW/UNICEF 2004; Adams and Page 2003). ຍິ່ງໄປກ່ວານັ້ນ,

ການຄົ້ນຄ້ວາຍັງຊີ້ໃຫ້ເຫັນວ່າ ຄົນທີ່ທຸກຍາກທີ່ສຸດມີທ່າອ່ຽງ ທີ່ຈະບໍ່ອົບພະຍົບໄປຢູ່ທີ່ອື່ນ (Adams and Page 2003; MLSW/UNIAP 2001; MLSW/ILO 2003;MLSW/UNICEF 2004). ອີງຕາມສະຖິຕິຕົວເລກທີ່ມີ, ຜູ້ປະສົບເຄາະຮ້າຍ ທີ່ຖືກສົ່ງກັບປະເທດ, ປະມານເຄິ່ງໜຶ່ງ ແມ່ນກຸ່ມຄົນທີ່ມາຈາກແຂວງ ທີ່ຮັ່ງມີກ່ວາໃນຫຼາຍໆແຂວງອື່ນໆໃນປະເທດ, ແຂວງສະຫັວນນະເຂດ (IOM 2004). ບົດຄົ້ນຄ້ວາສ່ວນຫຼາຍບໍ່ມີຂໍ້ມູນ ລະອຽດໃນລະດັບຂັ້ນບ້ານ ເພື່ອທີ່ຈະຊີ້ໃຫ້ເຫັນເຖິງຄວາມຫຼາກຫຼາຍ ແຕ່ ວ່າການຄົ້ນຄວ້າດ້ານຄຸນນະພາບຈຳນວນໜຶ່ງໄດ້ຊີ້ໃຫ້ເຫັນວ່າ ເຖິງແມ່ນວ່າຢູ່ໃນບ້ານທີ່ທຸກຍາກທີ່ສຸດ ປະຊາຊົນກໍ່ບໍ່ມີທ່າອ່ຽງທີ່ຈະຍົກຍ້າຍຖິ່ນຖານໄປຢູ່ທີ່ອື່ນ (MLSW/UNIAP 2001).

ມາຮອດປະຈຸບັນນີ້ ເອກະສານສະບັບດຽວ ທີ່ມີການພົວພັນ ລະຫ່ວາງ ຄວາມທຸກຈົນທີ່ແທ້ຈິງ ແລະ ການອົບພະຍົບໄປຢູ່ທີ່ອື່ນ ແມ່ນພົວພັນກັບການຕັ້ງຖິ່ນຖານໃໝ່ (MLSW/UNICEF 2004), ຊຶ່ງຍັງພົວພັນເຖິງຄວາມສ່ຽງຕໍ່ການຄ້າມະນຸດ. ມີຂໍ້ສັງເກດທີ່ອາດເປັນໄປໄດ້ວ່າ ສາຍພົວພັນ ລະຫ່ວາງ ຄວາມທຸກຍາກ ແລະ ການອົບພະຍົບໄປຢູ່ທີ່ອື່ນ ມີການພົວພັນກັບຄວາມແຕກໂຕນກັນ ແລະ ຄວາມບໍ່ເທົ່າທຽມ ກັນ ໃນການພັດທະນາ ສັງຄົມ-ເສດຖະກິດ, ຫຼື ເວົ້າອີກຢ່າງໜຶ່ງແມ່ນລະດັບຄວາມທຸກຍາກ. ເຫດຜົນທີ່ຢູ່ເບື້ອງຫຼັງຂໍ້ສັງເກດການນີ້ ແມ່ນວ່າ ມັນບໍ່ແມ່ນຍ້ອນຄວາມທຸກຍາກຫຼາຍ ທີ່ພາໃຫ້ມີການອົບພະຍົບ ໄປຢູ່ທີ່ອື່ນ, ແຕ່ຫາກແມ່ນຍ້ອນ ທາງເລືອກໄປສູ່ຊີວິດທີ່ດີກ່ວາຢູ່ແຫ່ງອື່ນທີ່ກະຕຸ້ນໃຫ້ມີການອົບພະຍົບ. ດັ່ງນັ້ນ, ມັນຈຶ່ງເກີດເປັນຄຳຖາມທີ່ວ່າບັນຫານີ້, ມັນອາດບໍ່ພົວພັນ ກັບການຫຼຸດຜ່ອນຄວາມທຸກຍາກຫາກ ແຕ່ແມ່ນການຫຼຸດຜ່ອນ ຄວາມແຕກໂຕນ ກັນໃນສັງຄົມ.

ດັ່ງນັ້ນ, ຖ້າຫາກ ຄວາມທຸກຍາກພຽງໃນລະດັບໃດໜຶ່ງ ເປັນເຫດຜົນໜຶ່ງ ທີ່ພາໃຫ້ມີການອົບພະຍົບໄປຕັ້ງຖິ່ນຖານຢູ່ທີ່ອື່ນ, ສະນັ້ນ ການຕອບຮັບຕໍ່ນະໂຍບາຍທີ່ເໝາະສົມ ແມ່ນການເສີມສ້າງຄວາມພະຍາຍາມ ທີ່ຈະຫຼຸດຜ່ອນຄວາມແຕກໂຕນກັນໃນສັງຄົມ. ຫຼາຍໆໂຄງການ ການຄ້າມະນຸດ, ໄດ້ຊີ້ໃຫ້ເຫັນເປົ້າໝາຍ ຂອງການເຂົ້າແຊກແຊງຂອງໂຄງການເຫຼົ່ານີ້ ບໍ່ຫຼາຍກໍ່ໜ້ອຍຢ່າງຈະແຈ້ງ ໂດຍຜ່ານກິດຈະກຳຕ່າງໆ ເຊັ່ນ ໂຄງການສິນເຊື່ອຂະໜາດນ້ອຍ, ການອົບຮົມວິຊາຊີບ ແລະ ອື່ນໆ. ນີ້ໄດ້ກໍ່ໃຫ້ເກີດມີສອງຄຳຖາມ ຄື: ການສັນນິຖານທີ່ວ່າ ຄວາມທຸກຈົນໃນລະດັບໃດໜຶ່ງ ເປັນສາຍເຫດທີ່ພາໃຫ້ມີການອົບພະຍົບໄປຢູ່ທີ່ອື່ນແມ່ນຖືກຕ້ອງຫຼືບໍ່? ແລະ ຄຳຖາມທີ່ສອງແມ່ນວ່າ ນະໂຍບາຍ "ການຫຼຸດຜ່ອນ" ລະດັບຄວາມແຕກໂຕນກັນ ເປັນທາງເລືອກນະໂຍບາຍທີ່ເປັນໄປໄດ້ ສຳລັບປະເທດລາວຫຼືບໍ່?

ຫຼາຍການຄົ້ນຄ້ວາຊີ້ໃຫ້ເຫັນເຖິງການເຊື່ອມໂຍງຫຼາຍຢ່າງ ລະຫ່ວາງ ຄວາມທຸກຍາກໃນລະດັບໃດໜຶ່ງ ແລະ ຄວາມປາດຖະໜາທີ່ຈະອົບພະຍົບໄປຢູ່ທີ່ອື່ນ. ເມື່ອບໍ່ດົນມານີ້, ການຄົ້ນຄ້ວາກ່ຽວກັບບັນຫາການຄ້າມະນຸດ ໄດ້ໃຫ້ຂໍ້ສັງເກດວ່າ:

> "ຄວາມແຕກໂຕນກັນ ນຳລະດັບຄວາມບໍ່ສະເໝີພາບທາງດ້ານຄວາມທັນສະໄໝ ແລະ ດ້ານການພັດທະນາ ທັງພາຍໃນພາກພື້ນ ແລະ ພາຍໃນປະເທດ, ຊຶ່ງກໍ່ໃຫ້ມີການ ກະຕຸ້ນ ໃຫ້ປະຊາຊົນທີ່ດ້ອຍໂອກາດກ້າວເຂົ້າສູ່ຄວາມສ່ຽງ" (MLSW/UNICEF 2004).

ຫຼາຍໆການສຶກສາ ໄດ້ບັນທຶກໄວ້ວ່າ ເຫດຜົນທີ່ເຮັດໃຫ້ປະຊາຊົນ ອົບພະຍົບໄປຢູ່ທີ່ອື່ນແມ່ນຍ້ອນການຂາດລາຍໄດ້ ແລະ ບັນຫາຄວາມທຸກຍາກ. ຢ່າງໃດກໍ່ຕາມ, ບົດລາຍງານເຫຼົ່ານີ້ ຍັງຊີ້ໃຫ້ເຫັນອີກວ່າຄວາມທຸກຍາກແມ່ນເປັນພຽງໜຶ່ງ ໃນຫຼາຍໆເຫດຜົນທີ່ວ່າ ເປັນຫຍັງປະຊາຊົນຈຶ່ງອົບພະຍົບ

*ເຖິງແມ່ນວ່າ ຄວາມທຸກຍາກໃນລະດັບໃດໜຶ່ງ ໄດ້ເປັນສິ່ງທີ່ອະທິບາຍເຖິງ ບາງເຫດຜົນຂອງການອົບພະຍົບໄປຢູ່ທີ່ອື່ນ, ແຕ່ມັນກໍ່ເປັນ ພຽງໜຶ່ງໃນ ຫຼາຍໆເຫດຜົນ ທີ່ວ່າເປັນຫຍັງປະຊາຊົນຈຶ່ງອົບພະຍົບໄປຢູ່ທີ່ອື່ນ.*

ໄປຢູ່ທີ່ອື່ນ (UNICEF 2004, UNIIAP 2001, UNIIAP 2005). ຄວາມຢາກຮູ້ຢາກເຫັນ, ຄວາມນິຍົມຂອງການ ຊົມໃຊ້ ແລະ ຄວາມກົດດັນຈາກສິ່ງອື່ນໆ (ບັນດາຕົວແທນ ຫຼື ຜູ້ອົບພະຍົບໄປຢູ່ທີ່ອື່ນທີ່ມີປະສົບການ) ແມ່ນອີກເຫດຜົນທີ່ຖືກອ້າງອີງກັນຢູ່ເລື້ອຍໆ. ຕາມການລາຍງານຂອງອົງການ UNICEF ໃຫ້ຂໍ້ສັງເກດວ່າ:

> "ຈາກການສຶກສາພົບວ່າ ການຄ້າມະນຸດເບິ່ງຄືວ່າ ຈະເກີດຂຶ້ນໂດຍບໍ່ກ່ຽວພັນເຖິງຄວາມຮັ່ງມີທາງດ້ານເສດຖະກິດ, ໂດຍສະເພາະໃນເຂດທົ່ງພຽງ. ຄວາມທຸກຍາກໄດ້ຖືກກ່າວອ້າງວ່າເປັນສາຍເຫດ, ແຕ່ຄວາມປາດຖະໜາເພື່ອສິນຄ້າທີ່ເປັນວັດຖຸ, ດິນແດນແຫ່ງ ໃໝ່, ຄວາມສະດວກສະບາຍທີ່ທັນສະໄໝ ແລະ ການມີເຮືອນຢູ່ແບບຖາວອນ ແມ່ນເປັນແຮງກະຕຸ້ນອີກຢ່າງທີ່ເທົ່າທຽມກັບສາຍເຫດຈາກຄວາມທຸກຍາກ." (MLSW/UNICEF 2004).

ເບິ່ງຄືວ່າ ມີຂໍ້ຂັດແຍ້ງ ລະຫວ່າງຄວາມທຸກຍາກ, ຄວາມນິຍົມຂອງການຊົມໃຊ້, ການວ່າງງານ ແລະ ຄວາມປາດຖະໜາຂອງການເປັນເຈົ້າຂອງວັດຖຸ. ການສຶກສາຄົ້ນຄ້ວາກ່ຽວກັບການຄ້າມະນຸດໃນປະຈຸບັນ ມີສ່ວນໜ້ອຍທີ່ຈະຊີ້ແຈງຄວາມໝາຍ ທີ່ຊັດເຈນຂອງຄວາມທຸກຍາກ ແລະ ມັນຍັງບໍ່ມີຄວາມຊັດເຈນທີ່ວ່າ ບັນຫາຄວາມທຸກຍາກສາມາດ ມີການພົວພັນກັບການອົບພະຍົບໄປຢູ່ທີ່ອື່ນໄດ້ແນວໃດ. ດັ່ງນັ້ນ, ເຖິງແມ່ນວ່າ ຄວາມທຸກຍາກໃນລະດັບໃດໜຶ່ງ ໄດ້ເປັນສິ່ງທີ່ອະທິບາຍເຖິງບາງເຫດຜົນຂອງການອົບພະຍົບໄປຢູ່ທີ່ອື່ນ, ແຕ່ມັນກໍ່ເປັນພຽງໜຶ່ງໃນຫຼາຍໆເຫດຜົນ ທີ່ວ່າເປັນຫຍັງປະຊາຊົນຈຶ່ງອົບພະຍົບໄປຢູ່ທີ່ອື່ນ.

ຢ່າງໃດກໍ່ຕາມ, ຄວາມທຸກຈົນໃນລະດັບໃດໜຶ່ງ ກໍ່ອາດເປັນປັດໄຈສຳຄັນ ທີ່ຊຸກຍູ້ການອົບພະຍົບໄປຢູ່ທີ່ອື່ນ, ສົມມຸດວ່ານີ້ແມ່ນເປັນປັດໄຈຕົ້ນຕໍ, ສະນັ້ນ, ແຜນຍຸດທະສາດເພື່ອການເຕີບໂຕ ແລະ ລຶບລ້າງ ຄວາມທຸກຍາກແຫ່ງຊາດ ຈະຊ່ວຍລຶບລ້າງຄວາມທຸກຍາກໄດ້ຫຼືບໍ່? ຄຳຖາມນີ້ອາດຈະຕ້ອງການ ການພິຈາລະນາ ຈາກແຜນການພັດທະນາ ເສດຖະກິດ-ສັງຄົມ ໂດຍສົມທຽບກັບບັນດາປະເທດເພື່ອນບ້ານຂອງ ສປປ ລາວ, ໂດຍສະເພາະປະເທດໄທ. ຖ້າຫາກເອົາທ່າອ່ຽງໃນປະຈຸບັນເປັນທິດນຳ, ມັນຈະບໍ່ເໝາະສົມກັບຄວາມເປັນຈິງ ທີ່ຈະຄາດຫວັງໃຫ້ປະເທດລາວຕາມທັນ ແລະ ຫຼຸດຜ່ອນຄວາມແຕກໂຕນ ກັນກັບປະເທດໄທພາຍໃນປີ 2020. ໃນທາງກົງກັນຂ້າມ, ມັນກໍ່ສົມເຫດສົມຜົນທີ່ວ່າຄວາມແຕກໂຕນກັນຈະເພີ່ມຂຶ້ນໃນຄວາມເປັນຈິງ, ເຖິງແມ່ນວ່າຈະມີຄວາມພະຍາຍາມ ພັດທະນາຕາມແຜນການທີ່ໄດ້ ວາງໄວ້. ຈາກຈຸດນີ້, ການເຄື່ອນໄຫວຂ້າມຊາຍແດນອາດສືບຕໍ່, ບາງທີອາດກາຍເປັນທຳນຽມທີ່ເຄີຍປະຕິບັດ ກັນມາໃນຫຼາຍໆຊຸມຊົນ. ໃນມຸມມອງນີ້, ມັນອາດເປັນໄປໄດ້ທີ່ຈະກ່າວວ່າ ການພັດທະນາເສດຖະກິດ-ສັງຄົມ ຂອງປະເທດໄທ ຈະມີຜົນສະທ້ອນຕໍ່ການອົບພະຍົບຂອງປະຊາຊົນລາວໃນອະນາຄົດຫຼາຍກ່ວາແຜນຍຸດທະສາດເພື່ອການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກ. ໂດຍລວມແລ້ວ, ເປັນທີ່ສົງໄສວ່າການຫຼຸດຜ່ອນຄວາມທຸກຍາກ ໂດຍສິ້ນເຊີງຈະມີຜົນສະທ້ອນຕໍ່ການຄ້າມະນຸດຫຼືບໍ.

## ຄວາມທຸກຈົນ, ການອົບພະຍົບໄປຢູ່ທີ່ອື່ນ ແລະ ການຄ້າມະນຸດ

ການຄ້າມະນຸດ ເປັນພຽງໜຶ່ງໃນຫຼາຍໆຜົນຮັບ ທີ່ອາດເປັນໄປໄດ້ຈາກການອົບພະຍົບໄປຢູ່ທີ່ອື່ນ, ແຕ່ໃນ ບັນດາຜູ້ອົບພະຍົບໄປຢູ່ທີ່ອື່ນ ຜູ້ໃດທີ່ໄດ້ປະສົບກັບການຖືກສະແຫວງຫາ ຜົນປະໂຫຍດ ຈາກການຄ້າມະນຸດດ້ວຍວິທີໃດ ແລະ ຍ້ອນຫັຍງ? ເຖິງແມ່ນວ່າມີຫຼາຍການສຶກສາຄົ້ນຄ້ວາ ທີ່ຊີ້ໃຫ້ເຫັນເຖິງບັນຫານີ້, ແຕ່ກໍ່ຍັງບໍ່ມີການສຶກສາລະອຽດເທື່ອ. ແຕ່ສິ່ງທີ່ຈະແຈ້ງແມ່ນວ່າ ບັນດາເຫດຜົນສຳລັບການອົບພະຍົບໄປ ຢູ່ທີ່ອື່ນບໍ່ສາມາດໃຊ້ເປັນເຫດຜົນ ຊີ້ໃຫ້ເຫັນວ່າ ເປັນຫຍັງປະຊາຊົນຈຶ່ງຈົບລົງໂດຍການປະສົບກັບສະພາບການ ການຄ້າມະນຸດ. ຄວາມຕ້ອງການທີ່ຈະຍົກຍ້າຍບໍ່ຄວນຖືກເຮັດໃຫ້ສັບສົນກັບບັນດາປັດໄຈສ່ຽງ ທີ່ອາດຈະເຮັດໃຫ້ບຸກຄົນໃດໜຶ່ງປະເຊີນກັບການຄ້າມະນຸດ. ແນ່ນອນມັນເປັນໄປໄດ້ທີ່ວ່າສາຍເຫດ ຂອງການຄ້າມະນຸດ (ຕົວຢ່າງ: ການຂາດຄວາມຮູ້) ສາມາດເປັນປັດໄຈສ່ຽງ ທີ່ພາໄປສູ່ການຄ້າມະນຸດ, ແຕ່ເພື່ອທີ່ຈະອະທິບາຍວ່າ ຍ້ອນແນວໃດ ການອົບພະຍົບໄປຢູ່ທີ່ອື່ນ ຈຶ່ງພົວພັນກັບການຄ້າມະນຸດ ນັ້ນຍັງຄົງເປັນສິ່ງທີ່ທ້າທາຍ.

---

*ການຄ້າມະນຸດ ເປັນໜຶ່ງໃນຫຼາຍໆຜົນຮັບທີ່ອາດເປັນໄປໄດ້ ຂອງການອົບພະຍົບໄປຢູ່ທີ່ອື່ນ, ຄວາມຕ້ອງການທີ່ຈະຍົກຍ້າຍ ບໍ່ຄວນຖືກເຮັດໃຫ້ສັບສົນ ກັບບັນດາປັດໄຈສ່ຽງ ທີ່ອາດຈະເຮັດ ໃຫ້ບຸກຄົນໃດໜຶ່ງປະເຊີນກັບການຄ້າມະນຸດ*

---

ເມື່ອທົບທວນການຄົ້ນຄ້ວາທີ່ມີໃນປະຈຸບັນ, ມັນມີສອງ-ສາມຫົວຂໍ້ທີ່ນຳມາພິຈາລະນາ ໃໝ່ອີກຊຶ່ງສາມາດ ຍົກໃຫ້ເຫັນຈຸດເດັ່ນໄດ້. ສິ່ງທຳອິດທີ່ຈະຕ້ອງສັງເກດແມ່ນວ່າ ຜູ້ອົບພະຍົບໄປຢູ່ທີ່ອື່ນຈຳນວນຫຼາຍ ບໍ່ໄດ້ ຕົກເປັນເຫື່ຍອການຄ້າມະນຸດ (ຖືກສະແຫວງຫາຜົນປະໂຫຍດ). ການສຶກສາຂອງອົງການແຮງງານສາກົນ (ໄອໂລ-ILO) ໄດ້ບັນທຶກໄວ້ວ່າ:

> "ຜົນຕອບຮັບໄດ້ຊີ້ໃຫ້ເຫັນວ່າ ປະຊາຊົນຜູ້ທີ່ອົບພະຍົບໄປຢູ່ທີ່ອື່ນ 67,5% ບໍ່ປະສົບບັນຫາ (ໃນປະເທດໄທ) ແລະ ກໍ່ພໍໃຈກັບສະພາບການເຮັດວຽກຂອງເຂົາເຈົ້າຢູ່ທີ່ນັ້ນ (ILO 2003).

ການສຶກສາຂອງ ILO ພົບວ່າມີພຽງ 3,4% ເທົ່ານັ້ນທີ່ມີບັນຫາ ແລະ ລຳບາກ: ຈຳນວນສ່ວນໃຫຍ່ຂອງຜູ້ອົບພະຍົບໄປຢູ່ທີ່ອື່ນ ປະກົດວ່າ ບໍ່ໄດ້ຕົກເປັນເຫຍື້ອຂອງການຄ້າມະນຸດ. ເຖິງແມ່ນວ່າການສຶກສາ ນີ້ຈະບໍ່ຊັດເຈນ, ແຕ່ກໍ່ເບິ່ງຄືວ່າມີການເຊື່ອມໂຍງສອງຢ່າງ ລະຫວ່າງ ການອົບພະຍົບໄປຢູ່ທີ່ອື່ນ ແລະ ການຄ້າມະນຸດ: ໜຶ່ງແມ່ນພົວພັນກັບບັນດາເຄືອຂ່າຍ ສັງຄົມທີ່ມີຢູ່ພາຍໃນປະເທດ ແລະ ອັນໜຶ່ງອີກ ແມ່ນບັນດາເຄືອຂ່າຍດັ່ງກ່າວໄດ້ພັດທະນາ ຕົວຂຶ້ນຄືແນວໃດໃນຊຸມຊົນໜຶ່ງ ທີ່ການອົບພະຍົບໄປຢູ່ທີ່ອື່ນເປັນເລື່ອງທຳມະດາ. ບາງທີອາດມີການຊ້ອນກັນລະຫ່ວາງ ສອງສິ່ງດັ່ງກ່າວ. ເມື່ອພິຈະລະນາເຖິງບົດລາຍງານກ່ອນໜ້ານີ້ເມື່ອປີ 2001 ໃຫ້ຂໍ້ສັງເກດດັ່ງລຸ່ມນີ້:

> "ຈາກມຸມມອງຂອງການຄ້າມະນຸດ, ຄວາມແຕກຕ່າງທາງດ້ານສັງຄົມ ມີຄວາມສຳຄັນຫຼາຍກວ່າຄວາມແຕກຕ່າງທາງດ້ານວັດຖຸ. ຮູບແບບຂອງການກະທຳກິດຂີ້ຂູດຮີດທີ່ຮ້າຍແຮງທີ່ສຸດ

ແມ່ນໄດ້ຖືກພົບໃນ ໝູ່ຊາວບ້ານຜູ້ທີ່ຂາດເຄືອຂ່າຍ ທາງດ້ານສັງຄົມຢູ່ປະເທດໄທ. ແຕ່ຍັງຕ້ອງສັງເກດອີກວ່າການຂາດເຄືອຂ່າຍທາງສັງຄົມ ບໍ່ໄດ້ເປັນການ ຫ້າມປາມປະຊາຊົນໄປທີ່ນັ້ນ." (MLSW/UNIAP 2001).

ການແນະນຳໃນທີ່ນີ້ແມ່ນວ່າ ບັນດາເຄືອຂ່າຍທາງສັງຄົມທີ່ບໍ່ເປັນທາງການ, ຊຶ່ງລວມທັງບັນດາສະມາຊິກພາຍໃນຄອບຄົວທີ່ຂ້າມຊາຍແດນ, ຈັດຫາກິນໄກທີ່ປອດໄພໃຫ້ແກ່ຜູ້ອົບພະຍົບໄປຢູ່ທີ່ອື່ນ ແລະ ສະນັ້ນແມ່ນໃຫ້ການປົກປ້ອງ ຈາກສະພາບການຖືກກົດຂີ່ຂົ່ມເຫັງ. ຂໍ້ສັງເກດອື່ນອີກແມ່ນບັນດາຊຸມຊົນ ທີ່ມີລະດັບການອົບພະຍົບໄປຢູ່ທີ່ອື່ນສູງ ແມ່ນພັດມີລະດັບການຄ້າມະນຸດທີ່ຕ່ຳ. ບົດລາຍງານດຽວກັນ ຍັງໃຫ້ຂໍ້ສັງເກດທ່າອ່ຽງ ດັ່ງກ່າວໃນແຂວງໄຊຍະບູລີອີກວ່າ:

"ການເຄື່ອນໄຫວຕ່າງໆແມ່ນແຜ່ຫຼາຍໃນໝູ່ບ້ານຕ່າງໆໃນເມືອງຄົງເຊໂດນ ແລະ ເມືອງປາກລາຍ ຈົນອາດສາມາດເວົ້າໄດ້ວ່າ ການເຮັດວຽກຢູ່ປະເທດໄທ ແມ່ນເປັນພາກສ່ວນໜຶ່ງທີ່ສຳຄັນຕໍ່ ຮູບແບບການດຳລົງຊີວິດໃນໝູ່ບ້ານເຫຼົ່ານີ້" (MLSW/UNIAP 2001).

ການສ້າງການເຊື່ອມໂຍງລະຫວ່າງຊາຍແດນ ທີ່ໄດ້ສ້າງຕັ້ງຂຶ້ນໃນປະຈຸບັນ ແມ່ນໄດ້ເນັ້ນໜັກການຢູ່ໃນບົດຄົ້ນຄວ້າອື່ນໆ.

"ອີງຕາມ ພະແນກ ສະຫວັດດີການ ສັງຄົມ ເມືອງປາກລາຍ, ປະຊະຊົນເມືອງ ປາກລາຍ 934 ຄົນ (ລວມທັງແມ່ຍິງ 428 ຄົນ) ໄດ້ເຮັດວຽກຢູ່ປະເທດໄທ ກ່ອນການເລືອກຕັ້ງເມື່ອບໍ່ນານມານີ້. ໃນຈຳນວນປະຊາຊົນເຫຼົ່ານັ້ນ, 779 ຄົນ ໄດ້ກັບຄືນບ້ານເພື່ອໄປເລືອກຕັ້ງ ແລະ "ໂດຍສ່ວນຫຼາຍ" ເຂົາເຈົ້າໄດ້ກັບຄືນກັບປະເທດໄທ ພາຍຫຼັງການເລືອກຕັ້ງ. ຜູ້ທີ່ກັບຄືນເພື່ອການເລືອກຕັ້ງ ຈະບໍ່ໄດ້ຖືກປັບໃໝ 1.500 ບາດ, ຊຶ່ງເປັນການສົ່ງເສີມໃຫ້ມີການກັບມາປ່ອນບັດເລືອກຕັ້ງ. ໃນຄວາມເປັນຈິງ, ຫຼາຍກ່ວາ 80% ຮູ້ວ່າມີການເລືອກຕັ້ງພວມດຳເນີນຢູ່ ແລະ ມີການຍົກເລີກການປັບໄໝ ແລະ ສາມາດກັບຄືນໄປໄດ້ ຈຶ່ງເຮັດໃຫ້ມີປະກົດການຕ່າງໆ." (Ginzburg 2001)

ລະດັບການກັບຄືນມາ ແລະ ການອົບພະຍົບໄປຕັ້ງຖິ່ນຖານຢູ່ທີ່ອື່ນຄືນໃໝ່ ທີ່ຢູ່ໃນລະດັບສູງ ໄດ້ສະແດງໃຫ້ເຫັນວ່າ ລະດັບການສະແຫວງຫາຜົນປະໂຫຍດໃນກຸ່ມຜູ້ອົບພະຍົບດັ່ງກ່າວແມ່ນມີຕ່ຳ, ຜູ້ອົບພະຍົບທີ່ຖືກ ສະແຫວງຫາຜົນປະໂຫຍດ ຄົງອາດຈະບໍ່ກັບຄືນໄປອີກ. ຄວາມຮູ້ກ່ຽວກັບຄວາມອັນຕະລາຍທີ່ບົ່ມຊ້ອນໄດ້ຖືກ ເຜີຍແຜ່ພາຍໃນຊຸມຊົນໝູ່ບ້ານ ແລະ ເຄືອຂ່າຍສັງຄົມ ທີ່ບໍ່ເປັນທາງການ, ໃຫ້ການຊ່ວຍເຫຼືອໂດຍການເຊື່ອມໂຍງຄອບຄົວທີ່ຢູ່ຕາມຊາຍແດນ, ໂດຍໃຫ້ການຊ່ວຍເຫຼືອແກ່ກຸ່ມ ຜູ້ອົບພະຍົບ ເມື່ອເຂົາເຈົ້າປະເຊີນ ກັບບັນຫາທ້າທາຍຕ່າງໆ (UNIAP 2005). ເວົ້າອີກຢ່າງໜຶ່ງ, ຊຸມຊົນຕ່າງໆທີ່ມີຄວາມຮູ້ເລື່ອງເສັ້ນທາງ ການອົບພະຍົບໄປຢູ່ທີ່ອື່ນ ແລະ ວຽກງານ

---

*ລະດັບການອົບພະຍົບໄປຢູ່ບ່ອນອື່ນທີ່ສູງບໍ່ສາມາດສັນນິຖານໄດ້ວ່າເປັນສິ່ງທີ່ບົ່ງບອກເຖິງລະດັບການຄ້າມະນຸດທີ່ສູງ, ແຕ່ອາດເປັນສິ່ງທີ່ບົ່ງບອກເຖິງຊ່ອງທາງການອົບພະຍົບໄປຢູ່ທີ່ອື່ນທີ່ປອດໄພຫຼາຍກ່ວາ.*

---

ອາດຖືກບັງຄັບດ້ວຍຕົນເອງໃນດ້ານການອົບພະຍົບໄປທີ່ອື່ນ, ແຕ່ບໍ່ຈຳເປັນທີ່ຈະໝາຍເຖິງການຄ້າມະນຸດ. ສະນັ້ນ ລະດັບການອົບພະຍົບໄປຢູ່ບ່ອນອື່ນ ທີ່ສູງບໍ່ສາມາດສົມມຸດຖານໄດ້ວ່າ ເປັນສິ່ງທີ່ບົ່ງບອກເຖິງລະດັບການຄ້າມະນຸດທີ່ສູງ, ແຕ່ອາດເປັນສິ່ງທີ່ບົ່ງບອກເຖິງຊ່ອງທາງການອົບພະຍົບໄປຢູ່ທີ່ອື່ນທີ່ປອດໄພຫຼາຍກ່ວາ.

## ການຫລຸດຜ່ອນຄວາມທຸກຍາກ, ການພິຈາລະນາທາງດ້ານການເມືອງ

ການເຊື່ອມໂຍງ ລະຫ່ວາງ ເຄືອຂ່າຍສັງຄົມທີ່ອົບພະຍົບໄປຕັ້ງຖິ່ນຖານ ຢູ່ທີ່ອື່ນ ແລະ ການຄ້າມະນຸດ ໄດ້ແນະນຳໃຫ້ເຫັນວ່າສ່ວນທີ່ກ່າວມາຂ້າງເທິງ ຍັງມີຂໍ້ມູນທີ່ຈຳກັດ ແລະ ຍັງຄົງເປັນຂໍ້ສົມມຸດຖານໄວ້ ຫຼາຍກ່ວາ ເປັນການສະຫຼຸບໃນໄລຍະນີ້. ຍິ່ງໄປກ່ວານັ້ນ, ບາງການສຶກສາຍັງຊີ້ໃຫ້ເຫັນເຖິງການມີສ່ວນ ຮ່ວມຂອງຍາດຕິພີ່ນ້ອງ ໃນການຄ້າມະນຸດ, ດັ່ງນັ້ນ ບາງຄຳຕັກເຕືອນ ຈຳຕ້ອງໄດ້ລວມເຂົ້າໄປໃນບັນຫານີ້. ຢ່າງໃດກໍ່ຕາມ, ໃນການພົວພັນກັບແຜນຍຸດທະສາດ ແຫ່ງການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກ ແຫ່ງຊາດ, ບັນດາເຄືອຂ່າຍທາງສັງຄົມເຫຼົ່ານີ້ ໄດ້ແນະນຳວ່າ ການຄ້າມະນຸດອາດຖືວ່າເປັນບັນຫາທາງດ້ານສັງຄົມ ຫຼາຍກ່ວາບັນຫາເສດຖະກິດ. ຖ້າຫາກການສັງເກດທີ່ໄດ້ກ່າວມາຂ້າງເທິງນັ້ນຖືກຕ້ອງ, ສາຍພົວພັນທາງສັງຄົມຂອງຜູ້ອົບພະຍົບ ໄປຢູ່ທີ່ອື່ນແມ່ນສິ່ງທີ່ຈະຊ່ວຍປ້ອງກັນບັນຫາການຄ້າມະນຸດ, ແຕ່ບໍ່ແມ່ນ ສະຖານະພາບດ້ານເສດຖະກິດຂອງເຂົາເຈົ້າ.

ສ່ວນຫຼາຍການເຂົ້າແຊກແຊງການຄ້າມະນຸດ ໃນປະເທດລາວແມ່ນແນໃສ່ "ຝ່າຍຜູ້ສະໜອງ". ນີ້ບໍ່ແມ່ນສິ່ງແປກ ເນື່ອງຈາກ ສປປ ລາວ, ເປັນປະເທດທີ່ຖືກຖືວ່າເປັນປະເທດ ຜູ້ສົ່ງການຄ້າມະນຸດ ແລະສາມາດເຮັດໄດ້ພຽງເລັກໜ້ອຍກ່ຽວກັບ ຄວາມຕອ້ງການ ຊຶ່ງສ່ວນຫຼາຍແມ່ນຍັງ ຄົງມີຢູ່ຕາມເຂດຊາຍແດນ.

ດັ່ງທີ່ໄດ້ກ່າວໄປແລ້ວ, ການຄ້າມະນຸດໄດ້ຮັບການປຶກສາຫາລື ໃນລະບຽບວາລະ ກອງປະຊຸມທາງດ້ານການເມືອງ, ສິນລະທຳ ແລະ ແນວຄວາມຄິດຕ່າງໆ. ຄວາມຂັດແຍ້ງຕ່າງໆ ລະຫ່ວາງການອົບພະຍົບ ໄປຢູ່ທີ່ອື່ນ, ປະຊາຊົນທີ່ລັກລອບ ແລະ ທຳການ ຄ້າມະນຸດ. ພວກເຮົາຈະເຮັດວິທີໃດເພື່ອໃຫ້ວຽກງານດ້ານການຫຼຸດຜ່ອນຄວາມ ທຸກຍາກ ເໝາະສົມກັບຮູບແບບ? ແລະ ພວກເຮົາຈະເຮັດແນວໃດ ເມື່ອການຄ້າມະນຸດເກີດຂຶ້ນໃນລະດູການຂອງການອົບພະຍົບໄປເຮັດວຽກ ຫຼື ຍົກຍ້າຍຖິ່ນຖານ?.

ກ່ອນອື່ນ, ເມື່ອພິຈາລະນາເຖິງຈຸດປະສົງຂອງໂຄງການ ການຄ້າມະນຸດ, ຈາກມຸມມອງຂອງຊຸມຊົນ ທີ່ສົ່ງອອກ ການຄ້າມະນຸດ ມີຈຸດປະສົງທີ່ເປັນໄປ ໄດ້ທີ່ສຳຄັນສອງຢ່າງ: ການຫຼຸດການເຄື່ອນໄຫວຫຼືການເຮັດ ໃຫ້ມີການເຄື່ອນໄຫວທີ່ປອດໄພກ່ວາ. ການຕ້ານການຄ້າມະນຸດ ດ້ວຍການຫຼຸດຜ່ອນຄວາມທຸກຍາກ ສ່ວນຫຼາຍແມ່ນຕິດພັນກັບບັນຫາທີ່ໄດ້ກ່າວມາກ່ອນໜ້ານີ້. ການໃຫ້ທາງເລືອກ ແລະ ສ້າງລາຍຮັບຢູ່ ກັບບ້ານ, ຫຼຸດຜ່ອນແຮງກະຕຸ້ນທີ່ຈະອົບພະຍົບ ແລະ ສະກັດກັ້ນບັນຫາການຄ້າມະນຸດທີ່ອາດເກີດ ຂຶ້ນໄດ້. ຢ່າງໃດກໍ່ຕາມ, ເມື່ອການຕໍ່ສູ້ກັບບັນຫາການຄ້າມະນຸດ ໂດຍ ການຫຼຸດຜ່ອນຄວາມທຸກຍາກ ໃນຮູບແບບ ຂອງການອົບພະຍົບໄປຢູ່ທີ່ອື່ນທີ່ມີຫຼາຍ, ມັນໄດ້ກາຍເປັນສິ່ງທີ່ເປັນໄປໄດ້ທີ່ຈະເຮັດໃຫ້ ຈຸດປະສົງຂອງນະໂຍບາຍນັ້ນບໍ່ຈະແຈ້ງ. ບົດລາຍງານສະບັບໜຶ່ງໃນປີ 2001 ໄດ້ກ່າວເຖິງໄພອັນຕະລາຍນີ້ວ່າ:

> "ອຳນາດການປົກຄອງໃນບັນດາປະເທດທີ່ສົ່ງອອກການຄ້າມະນຸດ ອາດຖືກຊັກຈູງໃຫ້ມີການເຊື່ອມໂຍງ ການອົບພະຍົບໄປຢູ່ທີ່ອື່ນ ຢ່າງຜິດກົດໝາຍ ກັບການຄ້າມະນຸດ ແລະ ການສົນທະນາຂອງເຈົ້າໜ້າທີ່ລາວ ກ່ຽວກັບການອົບພະຍົບໄປທີ່ອື່ນບາງຄັ້ງ ກໍ່ຊີ້ໃຫ້ເຫັນ ບາງຕົວຢ່າງໃນລັກສະນະນີ້. ເຖິງວ່າອຳນາດການປົກຄອງບາງທີອາດບໍ່ພໍໃຈກັບແນວໂນ້ມການອົບພະຍົບໄປສູ່ປະເທດໄທໃນປະຈຸບັນ, ສະພາບເສດຖະກິດຢູ່ໃນປະເທດລາວ ບໍ່ໄດ້ໃຫ້ບັນດາເຈົ້າໜ້າທີ່ລາວມີຄວາມເປັນອິດສະລະພາບຫຼາຍ ທີ່ຈະສະກັດກັ້ນແນວໂນ້ມດັ່ງກ່າວນີ້. ໃນຂະນະດຽວກັນ, ບັນດາອົງການຈັດຕັ້ງສາກົນ ແມ່ນເຕັມໃຈທີ່ຈະລົງທຶນໃນການຕໍ່ຕ້ານການຄ້າມະນຸດ, ຕົວຢ່າງຕ້ານການກົດຂີ່ຂູດຮີດຜູ້ອົບພະຍົບ. ມັນຈະບໍ່ມີການຊ້ອນກັນ ລະຫ່ວາງ ສອງຈຸດປະສົງນີ້, ແຕ່ວ່າຫາກມີຈຸດໃດໜຶ່ງ ທີ່ຈະເຂົ້າມາພ້ອມກັນ. ໂດຍການເຮັດໃຫ້ສາຍພົວພັນລະຫ່ວາງ ການຄ້າມະນຸດ ແລະ ການອົບພະຍົບໄປຢູ່ທີ່ອື່ນ ບໍ່ເປັນສິ່ງທີ່ລະອຽດຈະແຈ້ງ, ອຳນາດການປົກຄອງອາດສາມາດ ສົ່ງເສີມວຽກບູລິມະສິດວ່າດ້ວຍການອົບພະຍົບໄປຢູ່ທີ່ອື່ນພາຍໃຕ້ການອຸປະຖຳຂອງອົງການຕ່າງໆ ທີ່ຕ້ານການຄ້າມະນຸດ." (Ginzburg 2001).

ລະບຽບວາລະປະຊຸມອັນໃດ ແລະ ຂອງໃຜພວມຖືກຮັບໃຊ້? ຖ້າມີການຕໍ່ສູ້ຕ້ານການຄ້າມະນຸດດ້ວຍການຫຼຸດຜ່ອນຄວາມທຸກຈົນ ແມ່ນຈະມີອັນຕະລາຍ ຊຶ່ງມັນຈະປ່ຽນແປງຈຸດປະສົງໄປໜ້ອຍໜຶ່ງ ອັນເນື່ອງມາຈາກສິ່ງທີ່ເກີດຂຶ້ນ ມາກ່ອນແລ້ວນັ້ນ, ຕົວຢ່າງເຊັ່ນ ເປົ້າໝາຍໃນຂັ້ນທຳອິດແມ່ນການຕໍ່ສູ້ກັບການຄ້າມະນຸດຕໍ່ມາມັນໄດ້ກາຍມາເປັນການຕໍ່ສູ້ເພື່ອຫຼຸດຜ່ອນຄວາມທຸກຈົນ. ດ້ວຍເຫດນີ້ເອງ, ການຕໍ່ສູ້ກັບການຄ້າມະນຸດ ດ້ວຍການຫຼຸດຜ່ອນຄວາມທຸກຈົນ ຈະເປັນການບິດເບືອນຄວາມສົນໃຈຕໍ່ສິ່ງທ້າທາຍທີ່ສຳຄັນຂອງການຄ້າມະນຸດເຊັ່ນ: ຍຸດທະສາດທີ່ອີງໃສ່ການພັດທະນາຊຸມຊົນເພື່ອຕໍ່ລອງກັບຜູ້ຄ້າມະນຸດ.

## ການຄ້າມະນຸດ ແລະ ການພັດທະນາ

ມັນບໍ່ສາມາດສັນນິຖານໄດ້ວ່າໂຄງການການພັດທະນາຕ່າງໆຈະມີແຕ່ຜົນບວກ. ທັງໆທີ່ມີຄວາມຕັ້ງອົກຕັ້ງໃຈທີ່ສຸດ, ຫຼາຍໆໂຄງການພັດທະນາກໍ່ບໍ່ສາມາດ ປະສົບຜົນສຳເລັດຕາມທີ່ຄາດຫວັງໄວ້. ໃນທີ່ນີ້ກໍ່ບໍ່ໄດ້ໝາຍວ່າ ນີ້ແມ່ນສິ່ງທີ່ພວມເກີດຂຶ້ນໃນປະເທດລາວ ເມື່ອເວົ້າເຖິງການແກ້ໄຂບັນຫາການຄ້າມະນຸດ, ແຕ່ຄວາມເປັນໄປໄດ້ແມ່ນຢູ່ທີ່ນີ້ ຢ່າງແນ່ນອນ. ແຜນຍຸດທະສາດແຫ່ງການເຕີບໂຕ ແລະ ລຶບລ້າງ ຄວາມທຸກຍາກແຫ່ງຊາດຈະມີຜົນລົບແນວໃດ ຕໍ່ການອົບພະຍົບໄປຢູ່ບ່ອນອື່ນ ແລະ ການຄ້າມະນຸດ ເມື່ອ ເບິ່ງຈາກທັດສະນະຂອງການຕອບສະໜອງ ແລະ ຄວາມຮຽກຮ້ອງຕ້ອງການ.

ເມື່ອພິຈາລະນາເຖິງການຕອບສະໜອງ, ເຖິງວ່າ ການເຄື່ອນໄຫວດ້ານເສດຖະກິດ ເຊັ່ນວ່າໂຄງການສິນເຊື່ອຂະໜາດນ້ອຍ ແລະ ການຝຶກອົບຮົມວິຊາຊີບຈະສາມາດຫຼຸດຜ່ອນ ຄວາມທຸກຍາກໄດ້ຢ່າງແນ່ນອນ, ສິ່ງເຫຼົ່ານີ້ ຍັງນຳຊຸມຊົນຕ່າງໆ ເຂົ້າສູ່ເສດຖະກິດ ທີ່ອີງໃສ່ການເງິນເປັນພື້ນຖານອີກດ້ວຍ. ດ້ວຍເສດຖະກິດ ທີ່ອີງໃສ່ການຕະຫຼາດທີ່ມີການບໍລິໂພກ ແລະ ການປ່ຽນແປງໃນຮູບແບບການໃຊ້ຈ່າຍ. ດ້ວຍເຫດນີ້ເອງ, ສາຍພົວພັນ ລະຫ່ວາງການອົບພະຍົບ ໄປຢູ່ທີ່ອື່ນ ແລະ ການຄ້າມະນຸດເຊັ່ນການ ເຄື່ອນໄຫວຕ່າງໆອາດຍົກໃຫ້ເຫັນ ຄວາມຄາດຫວັງທີ່ບໍ່ເປັນຈິງ ກ່ຽວກັບການພັດທະນາຊຸມຊົນຕ່າງໆ. ໃນຕົວຈິງແລ້ວ, ບົດລາຍງານໃນປີ 2001 ໄດ້ຊີ້ໃຫ້ເຫັນວ່າ ການພັດທະນາມີສ່ວນພົວພັນ ກັບການຄ້າ ມະນຸດ ຫຼາຍກວ່າບັນຫາຄວາມທຸກຍາກ, ເວົ້າແນວນັ້ນກໍ່ໝາຍວ່າ ການປັບປຸງວຽກງານ ດ້ານສາທາລະນະສຸກ ໄດ້ນຳໄປສູ່ການຂະຫຍາຍຕົວຂອງພົນລະເມືອງ ຊຶ່ງໃນທາງດຽວ

ກັນກໍ່ເພີ່ມຈຳນວນແຮງງານ ໃຫ້ຫຼາຍເກີນຂອບເຂດ, ບົດລາຍງານນີ້ຍັງຊີ້ໃຫ້ເຫັນວ່າ ການສຶກສາໄດ້ສະໜອງໃຫ້ມີການເຂົ້າ ເຖິງ ຄວາມຮູ້ ແລະ ແນວຄິດໃໝ່ໆ, ແຕ່ກໍ່ບໍ່ໄດ້ໝາຍເຖິງການນຳໃຊ້ຄວາມຮູ້ເຫຼົ່ານີ້. ດ້ວຍເຫດນີ້ ຈຶ່ງກໍ່ໃຫ້ເກີດ ຄວາມຮູ້ສຶກເບື່ອໜ່າຍ ໃນໝູ່ຊາວໜຸ່ມ. ບົດລາຍງານນີ້ໄດ້ສະຫຼຸບວ່າ:

> "ດ້ວຍເຫດນີ້ ຄວາມພະຍາຍາມດ້ານການພັດທະນາ, (IMF, WB, ADB, UNDP etc) ໄດ້ໃຫ້ສະພາບແວດລ້ອມ ທີ່ສາມາດສະກັດກັ້ນການຄ້າມະນຸດ, ໂດຍສະເພາະເມື່ອສົມທົບກັບສາຍພົວພັນ ທາງສັງຄົມ ແລະ ຄອບຄົວ ຢູ່ຕາມຊາຍແດນ" (MLSW/UNIAP 2001).

ດ້ວຍເຫດນີ້, ຄວາມທັນສະໄໝ ສາມາດມີຄວາມເປັນໄປໄດ້ ທີ່ຈະສ້າງການຕອບສະໜອງໃຫ້ແກ່ຜູ້ອົບພະຍົບ. ສິ່ງນີ້ໄດ້ປະກົດແລ້ວວ່າ ກຳລັງຈະເກີດຂຶ້ນໃນພາກສ່ວນຕ່າງໆ ທາງພາກເໜືອ ຂອງປະເທດລາວ, ບ່ອນຊຶ່ງບັນຫາການຕັ້ງຖິ່ນຖານໃໝ່ ແລະ ການຄ້າມະນຸດ (MLSW/ UNICEF 2004) ກຳລັງແມ່ນບັນຫາທີ່ໜ້າເປັນຫ່ວງ. ຄວນເປັນທີ່ສັງເກດອີກວ່າ ນີ້ແມ່ນບັນຫາຂອງຄວາມທຸກຍາກທີ່ເກີດ ຂຶ້ນໂດຍການເຂົ້າແຊກແຊງຂອງມະນຸດ ແລະ ບໍ່ໄດ້ປະກອບດ້ວຍເງື່ອນໄຂທີ່ເປັນໄປຍ້ອນບັນຫາ ຄວາມທຸກຍາກທີ່ມີມາແຕ່ດົນນານ. ການຕັ້ງຖິ່ນຖານໃໝ່ ແມ່ນນະໂຍບາຍດ້ານການພັດທະນາ ແລະ ເປັນຍຸດທະສາດແຫ່ງການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດຂອງລັດຖະບານລາວ. ນອກ ຈາກນີ້, ໂຄງການເສັ້ນທາງຕ່າງໆ ກໍ່ເບິ່ງຄ້າຍຄືກັບວ່າ ຈະກະຕຸ້ນໃຫ້ມີການອົບພະຍົບໄປຢູ່ທີ່ອື່ນ ແລະ ການຄ້າມະນຸດ. ໃນປະເທດໄທ, ໂຄງການສ້າງຄວາມທັນສະໄໝທີ່ຄ້າຍຄືກັນ ໄດ້ເຮັດໃຫ້ປະຊາຊົນ ທີ່ອາໄສ ຢູ່ພື້ນທີ່ສູງເປັນໜຶ່ງໃນ ປະຊາຊົນທີ່ ບອບບາງຕໍ່ການຄ້າມະນຸດທີ່ສູງກ່ວາໝູ່ໝົດ (Feingold 1997).

ສິ່ງທ້າທາຍທີ່ມີລັກສະນະພິເສດອື່ນໆ ທີ່ພົວພັນເຖິງໂຄງການສິນເຊື່ອຂະໜາດນ້ອຍທີ່ລວມທັງເງິນກູ້ຂະໜາດນ້ອຍ ທີ່ຈະກະຕຸ້ນການເຄື່ອນໄຫວທາງດ້ານເສດຖະກິດ ໃນກຸ່ມປະຊາຊົນຜູ້ທຸກຍາກ. ມັນອາດ ເປັນການສ່ຽງ ທີ່ສະເໜີເງິນກູ້ໃຫ້ປະຊາຊົນທີ່ອົບພະຍົບໄປຢູ່ທີ່ອື່ນ. ຖ້າຫາກຜູ້ຮັບ ມີບັນຫາໃນການຊຳລະໜີ້, ວິທີການແກ້ໄຂສະເພາະໜ້າແມ່ນການຫາ "ເງິນດ່ວນ" ຕາມຊາຍແດນ. ປະຈຸບັນ ຍັງບໍ່ທັນມີຫຼັກຖານວ່າທ່າອ່ຽງນີ້ເປັນໜຶ່ງ ໃນໂຄງການສິນເຊື່ອຂະໜາດນ້ອຍໃນປະເທດລາວ, ແຕ່ພາບເຫດການນີ້ເປັນສິ່ງທີ່ສາມາດ ຈິນຕະນາການໄດ້ຢ່າງແນ່ນອນ.

---

*ຄວາມທັນສະໄໝ ສາມາດມີຄວາມເປັນໄປໄດ້*

*ທີ່ຈະສ້າງການຕອບສະໜອງໃຫ້ແກ່ຜູ້ອົບພະຍົບ*

---

ເມື່ອພິຈາລະນາເຖິງຄວາມຕ້ອງການ, ຍຸດທະສາດການແຫ່ງການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກ ແຫ່ງຊາດ ເນັ້ນກ່ຽວກັບການເຮັດ ໃຫ້ອຸດສະຫະກຳທີ່ທັນສະໄໝ ແລະ ສ້າງຄວາມທັນສະໄໝ, ລວມທັງການພັດທະນາເສດຖະກິດພິເສດ, ພະລັງງານ ແລະ ໄຟຟ້າຊົນນະບົດ, ການພັດທະນາອຸດສະຫະກຳ ກະສິກຳ-ປ່າໄມ້, ອຸດສະຫະກຳການທ່ອງທ່ຽວ, ການຂຸດຄົ້ນບໍ່ແຮ່ ແລະ ອື່ນໆ. ມັນເປັນໄປບໍ່ໄດ້ທີ່ຈະຄາດຄະເນ ວ່ານະໂຍບາຍຈະໄດ້ຮັບຜົນດີເທົ່າໃດໃນເວລາທີ່ນຳໄປປະຕິບັດ,

ແຕ່ມັນຄວນສັງເກດວ່າຂະແໜງການເຫຼົ່ານີ້ ມີຄວາມອາດສາມາດໃນການສ້າງ ຄວາມຕ້ອງການໃຫ້ແກ່ການຄ້າມະນຸດພາຍ ໃນປະເທດລາວເອງ. ມີສັນຍານ ບອກວ່າສິ່ງເຫຼົ່ານີ້ພວມເກີດຂຶ້ນກັບອຸດສະຫະກຳເຄື່ອງນຸ່ງ ແລະ ບັນເທີງ (MLSW/UNICEF 2004). ມັນຍັງເປັນໄປໄດ້ອີກວ່າປະກົດການ "ການຄ້າມະນຸດໃນທາງກັບກັນ" (ຜູ້ສະແຫວງຫາຜົນປະໂຫຍດ ຈະເປັນຜູ້ເຄື່ອນຍ້າຍໄປມາ, ແຕ່ບໍ່ແມ່ນຜູ້ທີ່ເປັນເຫຍື່ອຂອງການຄ້າມະນຸດ), ດັ່ງຕົວຢ່າງໃນປະເທດກຳປູເຈຍ ອຸດສະຫະກຳການທ່ອງທ່ຽວທາງເພດ, ອາດກາຍເປັນບັນຫາໃນປະເທດລາວ. ນອກຈາກນີ້, ໂຄງການໂຄງລ່າງພື້ນຖານຕ່າງໆ ເຊັ່ນການສ້າງຖະໜົນ ແລະ ພະລັງງານໄຟຟ້ານ້ຳຕົກກໍ່ໃຫ້ເກີດການບັງຄັບແຮງງານເພດຍິງຫຼາຍເພີ່ມຂຶ້ນພາຍໃນພື້ນທີ່ຈຳກັດ. ມັນເປັນໄປໄດ້ວ່າຍັງສາມາດ ກະຕຸ້ນຄວາມຕ້ອງການສິນຄ້າ ແລະ ການບໍລິການຕ່າງໆຊຶ່ງອາດລວມທັງແຮງງານ ທີ່ມີການລັກລອບ. ເພື່ອໃຫ້ເປັນທຳ, ຍຸດທະສາດແຫ່ງການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ຮັບຮອງນະໂຍບາຍ ທີ່ທ້າທາຍ ດ້ານຄວາມແຕກຕ່າງທີ່ພວມຂະຫຍາຍຕົວພາຍໃນປະເທດລາວ ແລະ ຊຶ່ງຈະຍັງຄົງພົບເຫັນການຄ້າມະນຸດພາຍໃນປະເທດທີ່ຈະຂະຫຍາຍຕົວຂຶ້ນ.

ສະຫຼຸບ, ເຖິງວ່າການອົບພະຍົບໄປຢູ່ທີ່ອື່ນ ແລະ ການຄ້າມະນຸດຈະມີການພົວພັນກັບຄວາມທຸກຍາກ ມັນຍັງພົວພັນກັນຢ່າງສັບສົນ ແລະ ສະໜິດແໜ້ນລະຫວ່າງ "ການພັດທະນາ" ແລະ "ການສ້າງຄວາມທັນສະໄໝ", ດ້ວຍເຫດນີ້ເອງ, ໂຄງການຕ່າງໆທີ່ມີຈຸດປະສົງຂອງການພັດທະນາໃນຕົວຈິງກໍ່ສາມາດ ເພີ່ມຄວາມສ່ຽງໃນການຄ້າມະນຸດໃຫ້ຫຼາຍຂຶ້ນ. ວິທີແກ້ໄຂບັນຫາການຄ້າມະນຸດຈະຕ້ອງລົງເລິກ ໄປກວ່ານັ້ນໂດຍເຊື່ອວ່າການຫຼຸດຜ່ອນການຕອບສະໜອງ ໄປພ້ອມໆກັບການຫຼຸດຜ່ອນຄວາມທຸກຈົນ ແລະ ຊອກຫາຊ່ອງທາງທີ່ຈະຮັບຮອງໃຫ້ມີການບັງຄັບໃຊ້ກົດໝາຍ ແລະ ຫຼຸດຜ່ອນຄວາມຕອ້ງການ ຊຶ່ງມີຄວາມສຳຄັນເທົ່າທຽມກັນ(ການບັງຄັບໃຊ້ກົດໝາຍ, ລູກຄ້າ, ໂຮງງານຕ່າງໆ, ນາຍຈ້າງ ແລະ ອື່ນໆ).

## ສະຫຼຸບຄວາມ

ໂດຍລວມແລ້ວ, ເຖິງແມ່ນວ່າຈະມີການເຊື່ອມໂຍງຢ່າງແທ້ຈິງ ລະຫ່ວາງ ການຫລຸດຜ່ອນຄວາມທຸກຍາກ ແລະ ການຄ້າມະນຸດ, ການເຊື່ອມໂຍງນີ້ ແມ່ນກໍ່ຍັງບໍ່ມີຄວາມຊັດເຈນ, ດັ່ງນັ້ນມັນຈຶ່ງເປັນທີ່ໜ້າສົງໄສວ່າ ໂຄງການຫຼຸດຜ່ອນຄວາມທຸກຈົນຈະມີຜົນສະທ້ອນຕໍ່ການແກ້ໄຂບັນຫາການຄ້າມະນຸດ. ກົງກັນຂ້າມ, ມັນມີຄວາມເປັນໄປໄດ້ທີ່ວ່າ ໂຄງການແບບນີ້ບາງຄັ້ງກໍ່ພຽງແຕ່ຍ້າຍສະຖານທີ່ຂອງການຄ້າມະນຸດເທົ່ານັ້ນ ແລະ ບາງຄັ້ງກໍ່ເປັນການເພີ່ມບັນຫາໃຫ້ຫຼາຍຂຶ້ນ.

ເຖິງແນວໃດກໍ່ຕາມ, ມັນມີການເຊື່ອມໂຍງກັນ ລະຫ່ວາງ ຄວາມທຸກຈົນ ແລະ ການຄ້າມະນຸດຊຶ່ງແນະນຳວິທີ ທີ່ຈະຫຼຸດຜ່ອນບັນຫາ: ການສະໜັບສະໜູນນະໂຍບາຍ ເພື່ອອົບພະຍົບໄປຢູ່ທີ່ອື່ນຢ່າງຖືກຕອ້ງຕາມກົດໝາຍ ແລະ ປອດໄພ. ສັງເກດເຫັນໄດ້ວ່າຄົນລາວສ່ວນຫຼາຍ ທີ່ອົບພະຍົບໄປຢູ່ທີ່ອື່ນນັ້ນບໍ່ໄດ້ຖືກສະແຫວງຫາ ຜົນປະໂຫຍດ. ການສຶກສາທີ່ດຳເນີນໂດຍ ອົງການແຮງງານສາກົນ (ILO) ຢູ່ທາງພາກໃຕ້ຂອງປະເທດລາວໄດ້ພົບວ່າ ຜູ້ອົບພະຍົບໄປຢູ່ທີ່ອື່ນ ປະມານເຄິ່ງໜຶ່ງຂອງປະຊາກອນ ສົ່ງເງິນກັບສູ່ຄອບຄົວ (ILO 2003). ການສັງເກດດັ່ງກ່າວນີ້ ໄດ້ຮັບການສະໜັບສະໜູນໂດຍການຄົ້ນຄ້ວາອື່ນ ຊຶ່ງແນະນຳວ່າ ເຖິງແມ່ນຜູ້ອົບພະຍົບຈຳນວນສ່ວນໜ້ອຍ ທີ່ສຳຄັນມີຄວາມສ່ຽງຕໍ່ການຄ້າມະນຸດ, ແຕ່ມັນມີຫຼາຍຄົນທີ່ ເລືອກການອົບພະຍົບໄປຢູ່ທີ່ອື່ນຄືກັບຍຸດທະສາດການຫຼຸດຜ່ອນຄວາມທຸກຈົນ (Ginzburg 2001; UNIAP 2005). ຍັງບໍ່ທັນມີໃຜຮູ້ຈຳນວນທີ່ແທ້ຈິງ

ຂອງແຫຼ່ງທຶນທີ່ ກັບສູ່ຊຸມຊົນຂອງຄົນລາວ, ແຕ່ການຄົ້ນຄ້ວາແນະນຳວ່າເງິນໄດ້ປ່ຽນເປັນກຳລັງຂອງຜູ້ບໍລິໂພກທີ່ຂ້ອນຂ້າງຫຼາຍ. ສັງເກດເຫັນໄດ້ວ່າທົ່ວໂລກ ປະເມີນຄ່າຂອງເງິນຂອງຜູ້ອົບພະຍົບຫຼາຍກວ່າຈຳນວນເງິນທັງໝົດຂອງຄວາມຊ່ວຍເຫຼືອທາງດ້ານການພັດທະນາຂອງສາກົນ (Adams and Page 2003) ບາງທີລາຍຮັບຂອງຜູ້ໃຊ້ແຮງງານ ທີ່ເປັນຊາວອົບພະຍົບ ແລະ ເງິນທີ່ໄດ້ສົ່ງກັບປະເທດ ແມ່ນໜຶ່ງໃນການເຂົ້າແຊກແຊງເພື່ອຫຼຸດຜ່ອນຄວາມທຸກຈົນ ທີ່ມີປະສິດທິພາບໃນປະເທດລາວ. ມຸມມອງທີ່ສຳຄັນຊຶ່ງຕອ້ງການຄົ້ນຫາຕື່ມອີກ ແມ່ນອັດຕາສ່ວນຂອງເງິນທີ່ໄດ້ມາຈາກການຂາຍແຮງງານທີ່ເປັນທຳ ຫຼື ແບບກົດຂີ່. ເຖິງແມ່ນວ່າເງິນສ່ວນຫຼາຍ ເບິ່ງຄືຈິ່ງວ່າ ໄດ້ມາຈາກການຂາຍແຮງງານທີ່ເປັນທຳ, ແຕ່ນີ້ກໍ່ເປັນພຽງການຄາດຄະເນ ຊຶ່ງຈຳເປັນຈະຕ້ອງໄດ້ມີການເບິ່ງຄືນຈົນກວ່າຈະໄດ້ມີການຄົ້ນຄ້ວາຕື່ມອີກໃນຂັ້ນຕໍ່ໄປ.

---

*ບາງທີລາຍຮັບຂອງຜູ້ໃຊ້ແຮງງານ ທີ່ເປັນຊາວອົບພະຍົບ ແລະ ເງິນທີ່ໄດ້ສົ່ງກັບປະເທດເປັນນຶ່ງ ໃນການເຂົ້າແຊກແຊງການຫລຸດຜ່ອນຄວາມທຸກຈົນ ທີ່ມີປະສິດທິຜົນ ໃນປະເທດລາວ.*

---

ການເຊື່ອມໂຍງກັນ ລະຫ່ວາງ ຄວາມບອບບາງ ແລະ ການຄ້າມະນຸດ ແມ່ນໄດ້ຖືກພົບເຫັນໃນສະຖານະພາບທາງກົດໝາຍຂອງການອົບພະຍົບ, ດັ່ງບົດລາຍງານຂອງອົງການແຮງງານສາກົນ (ILO) ໄດ້ສັງເກດເຫັນ ວ່າ:

> "ໃນທາງທິດສະດີແລ້ວການຄ້າແຮງງານ ບໍ່ມີທາງເກີດຂຶ້ນໄດ້ ຖ້າຫາກຜູ້ ຊອກຫາວຽກງານມີອິດສະລະພາບ ໃນການຍົກຍ້າຍຖິ່ນຖານ ແລະ ເສລີພາບ ຂອງການເຂົ້າໄປເຖິງການ ຈ້າງງານ"

ດັ່ງນັ້ນ, ຖ້າຫາກຜູ້ອົບພະຍົບໄດ້ຮັບການປົກປ້ອງ ທາງກົດໝາຍທີ່ດີກ່ວາເກົ່າ ແລະ ມີທາງເຂົ້າໄປເຖິງການຈ້າງງານທີ່ຖືກກົດໝາຍ, ເຂົາເຈົ້າ ກໍ່ຈະໄດ້ຮັບການປົກປ້ອງທີ່ດີໃນ ການຕ້ານກັບການລ່ວງລະເມີດ ແລະ ການສະແຫວງຫາຜົນປະໂຫຍດ. ໂດຍສະເພາະຕໍ່ປະເທດໄທ ແລະ ລາວເພາະວ່າປະເທດໄທ ມີການເອື່ອຍອີງໃສ່ກັບແຮງງານ ສີມືຕໍ່າຢູ່ໃນຫຼາຍຂະແໜງການ, ແລະ ປະເທດລາວກໍ່ສາມາດຕອບສະໜອງຄວາມຕອ້ງການ ນີ້ດ້ວຍແຮງງານໄວໜຸ່ມທີ່ມີຢ່າງຫຼວງຫຼາຍ ແລະ ນັບມື້ນັບຂະຫຍາຍຕົວ. ລັດຖະບານປະເທດລາວເອງກໍ່ໄດ້ຄຳນຶງ ເຖິງບັນຫາດັ່ງກ່າວນີ້ໃນບາງຂອບເຂດໂດຍການເຊັນບົດບັນທຶກ ຄວາມເຂົ້າໃຈກັບປະເທດໄທເພື່ອສ້າງຊ່ອງທາງທີ່ເປັນທາງການ ແລະ ຖືກກົດໝາຍ ໃຫ້ແກ່ການອົບພະຍົບແຮງງານ (Marshall 2001).

ມີຫຼາຍສິ່ງຫຼາຍຢ່າງທີ່ຈະຕ້ອງໄດ້ສະຫງວນໄວ້ໃນທີ່ນີ້. ປະການທີ່ໜຶ່ງແມ່ນ ມັນຍັງເປັນທີ່ສົງໄສຢູ່ວ່າການເຂົ້າປະເທດທີ່ປອດໄພ ແລະ ຖືກກົດໝາຍນີ້ ສາມາດເປັນປະໂຫຍດຕໍ່ເດັກໄດ້ຄືແນວໃດ, ເພາະວ່າມີຫຼາຍກໍລະນີທີ່ ພວກເຂົາບໍ່ມີໂອກາດໄດ້ເຂົ້າເຖິງການຈ້າງງານທີ່ຖືກກົດໝາຍ; ປະການທີສອງ, ແມ່ນ ການເຂົ້າປະເທດທີ່ຖືກຕ້ອງຕາມກົດໝາຍບໍ່ໄດ້ຊ່ວຍໃຫ້ຊາວອົບພະຍົບ ທີ່ເຮັດວຽກຢູ່ໃນໂຮງງານອຸດສະຫະກຳ ທີ່ເຄິ່ງຖືກກົດໝາຍ ແລະ ຜິດກົດໝາຍ, ເຊັ່ນ ໂສເພນີ, ວຽກຮັບໃຊ້ເປັນແມ່ບ້ານ ແລະ ວຽກການປະມົງ ຊຶ່ງກົດໝາຍແຮງງານບໍ່ສາມາດຄຸ້ມຄອງຜູ້ຄົນເຫຼົ່ານັ້ນໄດ້ດີເທົ່າທີ່ຄວນ.

ແນວໃດກໍ່ຕາມ, ການເຂົ້າເຖິງກົດໝາຍ ແລະ ການອົບພະຍົບແຮງງານແບບຖືກຕ້ອງ ແມ່ນເປັນການໃຫ້ ທາງເລືອກແກ່ຊຸມຊົນ ແລະ ດັ່ງນັ້ນ ຈຶ່ງອາດສາມາດທີ່ຈະຫຼຸດຜ່ອນ ບັນຫາການຄ້າມະນຸດໄດ້. ຍິ່ງໄປ ກ່ວານັ້ນ, ການອົບພະຍົບແຮງງານຢ່າງຖືກຕ້ອງຕາມກົດໝາຍ ຍັງມີຜົນຕໍ່ການປ່ຽນແປງບັນຫາຕ່າງໆ ໂດຍລວມໄດ້ຢ່າງຫຼວງຫຼາຍເຊັ່ນວ່າ ບັນຫາການຍົກຍ້າຍຖິ່ນຖານ, ຄວາມທຸກຍາກ ແລະ ການຄ້າມະນຸດ, ເນື່ອງຈາກວ່າ ມັນໄດ້ປ່ຽນທັດສະນະການເບິ່ງການຍົກຍ້າຍຖິ່ນຖານ ຈາກເປັນສິ່ງທີ່ "ບໍ່ດີ" ແລະ ກຳນົດນິຍາມຄືນໃໝ່ວ່າເປັນ "ການສະແຫວງຫາຜົນປະໂຫຍດ" ຊຶ່ງເປັນບັນຫາ ທີ່ຄວນໄດ້ຮັບການແກ້ໄຂ. ນອກຈາກນັ້ນ ມັນຍັງເປັນທີ່ຮັບຮູ້ວ່າ ການອົບພະຍົບ ຍົກຍ້າຍຖິ່ນຖານນັ້ນໄດ້ເປັນການປະກອບສ່ວນ ຊ່ວຍໃນການຫຼຸດຜ່ອນຄວາມທຸກຍາກໄດ້.

ທາງເລືອກດ້ານນະໂຍບາຍສຳລັບລັດຖະບານ ແລະ ສຳລັບອົງການຈັດຕັ້ງຕ່າງໆ ທີ່ສະໜອງການສະໜັບສະໜູນ ທາງດ້ານການເງິນ ແລະ ເຕັກນິກຕ່າງໆ ແມ່ນຈະຕ້ອງໄດ້ພິຈາລະນາຄືນໃໝ່ວ່າການຫຼຸດຜ່ອນຄວາມທຸກຍາກນັ້ນ ແມ່ນຍຸດທະສາດທີ່ເປັນໄປໄດ້ໃນການສະກັດກັ້ນ ການຄ້າມະນຸດພຽງຢ່າງດຽວ ຫຼືບໍ່, ແລະ ແທນທີ່ດ້ວຍການສຸມໃສ່ການແກ້ໄຂບັນຫາການ ອົບພະຍົບແຮງງານແບບຖືກຕ້ອງຕາມກົດໝາຍ ແລະ ປອດໄພ. ການເຊື່ອມໂຍງກັນລະຫ່ວາງ ຄວາມທຸກຍາກ ແລະ ການຄ້າມະນຸດ ບໍ່ໄດ້ລວມຢູ່ໃນການກຳຈັດປັດເປົ່າແຮງຈູງໃຈໃນການຍົກຍ້າຍຕ່າງໆ, ແຕ່ຫາກເປັນການສົ່ງເສີມ ໃນສິ່ງ ທີ່ຖືກກົດໝາຍ ແລະ ມີຄວາມປອດໄພ.

Sverre Molland (sverre.molland@gmail.com ໄດ້ປະຕິບັດວຽກງານຢູ່ໃນປະເທດລາວ ເປັນຜູ້ຊີ້ນຳໂຄງການຂອງໂຄງການຕົວແທນລະຫ່ວາງປະເທດ ຂອງ ສປຊ ວ່າດ້ວຍການຄ້າມະນຸດ ໃນອະນຸຂົງເຂດແມ່ນ້ຳຂອງຕອນເທິງເປັນເວລາ 3 ປີແລ້ວ. ໃນຂະນະນີ້ ທ່ານກຳລັງຄົ້ນຄ້ວາບັນຫາການຄ້າມະນຸດ ໃນການສຶກສາລະດັບປຣິນຍາເອກຂະແໜງມະນຸດວິທະຍາຂອງລາວ.

## ກ່ຽວກັບນັກຂຽນ

Sverre Molland (sverre.molland@gmail.com ໄດ້ປະຕິບັດວຽກງານຢູ່ໃນປະເທດລາວ ຄືຜູ້ຊີ້ນຳໂຄງການຂອງໂຄງການຕົວແທນລະຫ່ວາງປະເທດ ຂອງ ສປຊ ວ່າດ້ວຍການຄ້າມະນຸດ ໃນອະນຸຂົງເຂດແມ່ນ້ຳຂອງຕອນເທິງເປັນເວລາ 3 ປີແລ້ວ. ໃນຂະນະນີ້ທ່ານກຳລັງຄົ້ນຄ້ວາບັນຫາການຄ້າມະນຸດ ໂດຍຜ່ານລະດັບປຣິນຍາເອກຂະແໜງມະນຸດວິທະຍາຂອງລາວ.

## ໜັງສືອ້າງອີງຕ່າງໆ


Anderson, B. & O'Connel Davidson, J. 2003. *Is trafficking in Human Beings Demand Driven?* Multi-Country Pilot Study. International Organisation for Migration.

ADB. 2001. *Participatory Poverty Assessment: Lao Peoples' Democratic Republic*. Manila.

Feingold, D.A. 1997. *The Hell of Good Intentions: Some Preliminary Thoughts on Opium in the Political Ecology of the Trade in Girls and Women.* Ophidian Research Institute. Philadelphia.

Ginzburg, O. 2001. *Laos Trip Report*.

GOL. 2004. *National Growth and Poverty Eradication Strategy* (NGPES). Vientiane.

ILO. 2001. *Stopping Forced Labour, Global Report under the follow-up to the ILO Declaration on Fundamental Principles and Rights at Work*. International labour Conference, 89th Session. Available at http://www.ilo.org.

IOM. 2004. *From Lao PDR to Thailand and Home Again: The repatriation of trafficking victims and other exploited women and girl workers - a study of 124 cases.*

Marshall, P. 2001. *Migration and Trafficking: Some Thoughts from the South-East Asian Region*. UN Inter-Agency Project on Human Trafficking in the Greater Mekong sub-Region. Bangkok.

Ministry of Labour and Social Welfare (MLSW) and ILO. 2003. *Labour Migration Survey in Khammuane, Savanakhet and Champasak*. Vientiane.

MLSW & UN Inter-agency Project on Human Trafficking in the GMS (UNIAP). 2001. *Trafficking in Women and Children in the Lao PDR - Initial Observations*. Vientiane.

MLSW & UNICEF. 2004. *Broken Promises, Shattered Dreams: A profile of child trafficking in the Lao PDR*. Vientiane.

Adams, R.H Jr. & Page, J. 2003. *International Migration, Remittances and Poverty in Developing Countries*. World Bank. Washington.

UNDP. 2001. *National Human Development Report Lao PDR: Advancing Rural Development*. Vientiane.

UNIAP. 2005. TRACE: *From Community to Exploitation: Human Trafficking from Laos to Thailand*. (Forthcoming).

United Nations. 2000. *Protocol to Prevent, Suppress and Punish Trafficking in Persons, Especially Women and Children - Supplementing the United Nations Convention against Transnational Organised Crime*.

# ຄວາມສຳນຶກກ່ຽວກັບການສໍ້ລາດບັງຫລວງ ໃນໂຄງການຊ່ວຍເຫລືອລ້າຈາກຕ່າງປະເທດ

ໂດຍ: ເຄຣີ ຟູເອີ

*ຫລາຍປີຜ່ານມາ ນັກຄົ້ນຄວ້າ ແລະ ນັກວິຊາການກ່ຽວກັບການຊ່ວຍເຫລືອ ເພື່ອການພັດທະນາສາກົນ (ການຊ່ວຍເຫລືອ ODA) ໄດ້ອຸທິດພະລັງສະຕິປັນຍາ ຢ່າງຫລວງຫລາຍ ເພື່ອທຳຄວາມເຂົ້າໃຈບັນຫາກ່ຽວກັບ ການສໍ້ລາດບັງຫລວງໃນແງ່ ຂອງການຊ່ວຍເຫລືອ ເພື່ອການພັດທະນາລະຫວ່າງປະເທດ. ໂດຍສະເພາະແລ້ວ ຄວາມພະຍາຍາມທັງປວງໄດ້ສຸມໃສ່ ລະດັບມະຫາພາກແລະຈຸລະພາກ ໂດຍສຶກສາຢ່າງກວ້າງຂວາງກ່ຽວກັບສິ່ງທີ່ເອີ້ນວ່າ "ການສໍ້ລາດບັງຫລວງຂະໜານໃຫຍ່" ຫລື ພຶດຕິກຳຂອງວິສາຫະກິດ ແລະ ສ່ວນບຸກຄົນ. ແຕ່ເອກະສານສະບັບນີ້ເນັ້ນ ສະເພາະໃສ່ການສໍ້ລາດບັງຫລວງ ໃນລະດັບໂຄງການ. ດ້ວຍວິທີການ ແຈກຢາຍແບບສອບຖາມ ທີ່ອີງໃສ່ຄວາມສຳນຶກໃຫ້ແກ່ບັນດາຜູ້ບໍລິຫານໂຄງການຄົນຕ່າງປະເທດໃນ ສປປ ລາວ ລະຫວ່າງລະດູຮ້ອນປີ 2003, ການສຶກສາດັ່ງກ່າວນີ້ວິເຄາະວ່າ ພະນັກງານເຮັດວຽກກ່ຽວກັບໂຄງການຊ່ວຍເຫລືອ ODA ເຂົ້າໃຈຜົນກະທົບຈາກການສໍ້ລາດບັງຫລວງມີຕໍ່ໂຄງການ ຄືແນວໃດ.*

## ສະຫລຸບຫຍໍ້: ສປປ ລາວ ແລະ ການຊ່ວຍເຫລືອ ODA

ສປປ ລາວໄດ້ຮັບການຊ່ວຍເຫລືອ ODA ຈາກທະນາຄານໂລກຕັ້ງແຕ່ປີ 1961, ອົງການກອງທຶນສາກົນ ຕັ້ງແຕ່ປີ 1977, ປະເທດຍີ່ປຸ່ນຕັ້ງແຕ່ປີ 1958 ແລະ ອົງການເພື່ອການພັດທະນາສະຫະປະຊາຊາດຕັ້ງແຕ່ ປີ 1957 (World Bank 2003, IMF 2003, ລັດຖະບານຍີ່ປຸ່ນ (GoJ) 1999, UNDP 2003). ຍີ່ປຸ່ນເປັນປະເທດໃຫ້ທຶນຊ່ວຍເຫລືອ ແບບທະວິພາຄີລາຍໃຫຍ່ທີ່ສຸດ, ລະຫວ່າງ 1997- 2001 ການຊ່ວຍເຫລືອ ODA ຈາກຍີ່ປຸ່ນແກ່ ສປປ ລາວ (US$430.5 ລ້ານ) ແມ່ນສູງກວ່າ ການປະກອບສ່ວນການຊ່ວຍເຫລືອ ODA ຂອງຜູ້ໃຫ້ທຶນ 20 ອັນດັບຖັດໄປບວກກັນໝົດ (CPC 2002). ການຊ່ວຍເຫລືອ ODA ແບບພະຫຸພາຄີລາຍໃຫຍ່ທີ່ສຸດແມ່ນມາຈາກສະຖາບັນການເງິນສາກົນ, ການເບີກຖອນເງິນລະຫວ່າງປີ 1997-2001 ມີຈຳນວນທັງໝົດ US$593 ລ້ານ (ibid). ໂດຍລວມແລ້ວ, ໃນໄລຍະເວລາ 5 ປີ ສິ້ນສຸດ ໃນປີ 2001 ສປປ ລາວ ໄດ້ຮັບການຊ່ວຍເຫລືອ ODA US$1,4  ຕື້, ປະມານ 18% ຂອງ GDP ລວມ (WDI 2004).

<u>ແຜນວາດ 1: ODA ເປັນເປີເຊັນຂອງ GDP (ບັນດາປະເທດອາຊຽນ ບໍ່ລວມ ປະເທດພະມ້າ ແລະ ບລູນາຍ</u>



## ຈຸດປະສົງຂອງການຄົ້ນຄວ້າ

ໃນທ້າຍຊຸມປີ 1990, ໄດ້ເລີ່ມມີມາດຕະການຕ່າງໆກ່ຽວກັບ ຂະບວນການຕ້ານການ ສໍ້ຫລາດບັງຫລວງ ຂະໜານໃຫຍ່ ໃນບັນດາປະເທດສະມາຊິກ ຂອງອົງການຮ່ວມມື ແລະ ພັດທະນາເສດຖະກິດ (OECD), ໜ່ວຍງານ ຂອງສະຫະປະຊາຊາດ, ສະຖາບັນການເງິນສາກົນ ແລະ ອົງການໃຫ້ທຶນຊ່ວຍເຫລືອ ແບບທະວີພາຄີ/ພະຫຸພາ ຄີ (ADB 1999, OECD 1997, UNgarc 1997, GoJ 1999, ARMM 1998). ຄວາມພະຍາຍາມເຫລົ່ານີ້ສ່ວນໃຫຍ່ ແມ່ນແນໃສ່ລະດັບບໍລິຫານ ແລະ ສະຖາບັນຂັ້ນສູງ ໂດຍສ້າງກົມ ຫລື ໜ່ວຍງານ ຕ້ານການສໍ້ລາດບັງຫລວງ ແລະ ການສຳຫລວດຄວາມຊື່ສັດແຫ່ງຊາດຂຶ້ນມາ (GoJ 2002). ແຕ່ຈົນເຖິງຂະນະນີ້ ວິທີການຕ້ານການສໍ້ລາດບັງຫລວງໃນລະດັບໂຄງການ ແມ່ນບໍ່ມີທັງໃນດ້ານວຽກພາກສະໜາມ ແລະ ການຄົ້ນຄວ້າດ້ານວິຊາການ (Akiyama et al 2003, Langseth 2001). ໂດຍທີ່ການສໍ້ລາດບັງຫລວງສົ່ງຜົນກະທົບ ຕໍ່ໂຄງການຊ່ວຍເຫລືອລ້າຈາກຕ່າງປະເທດຫລາຍໆໂຄງການ, ຄວາມພະຍາຍາມສູງ ສຸດຂອງການຄົ້ນຄວ້າດັ່ງກ່າວນີ້ແມ່ນ ເພື່ອສະໜອງເຄື່ອງມືໃນການຕັດສິນ ບັນຫາທີ່ຮອບຮູ້ຂຶ້ນ ໃຫ້ແກ່ພະນັກງານແຜນການ ໃນໄລຍະຕົ້ນຂອງການວາງໂຄງການ ກັບການຫລຸດຜ່ອນການສໍ້ລາດບັງຫລວງ.

## ວິທີການແລະຂອບເຂດຂອງການຄົ້ນຄວ້າ

ໄດ້ມີການສຳຫລວດຜູ້ບໍລິຫານໂຄງການ ODA ທີ່ເປັນຄົນຕ່າງປະເທດ ທີ່ຢູ່ໃນນະຄອນຫລວງວຽງຈັນ ແລະ ແຂວງຫລວງພະບາງໃນໄລຍະເວລາ 5 ອາທິດໃນລະດູຮ້ອນປີ 2003. ນອກຈາກການສຳຫລວດແລ້ວ, ຍັງໄດ້ສຳພາດນັກວິຊາການດ້ານການຊ່ວຍເຫລືອ ODA ແລະ ນັກຄົ້ນຄວ້າທີ່ເຮັດວຽກໃນ ສປປ ລາວ ກໍ່ຄື ຜູ້ຊ່ຽວຊານດ້ານການບໍລິຫານວົງຈອນໂຄງການ 1 ຄົນ ໃນນະຄອນຫລວງໂຕກຽວ.

## ຄຳນິຍາມກ່ຽວກັບການສໍ້ລາດບັງຫລວງໃນແງ່ຂອງການຊ່ວຍເຫລືອ ODA

ຄຳນິຍາມກ່ຽວກັບການສໍ້ລາດບັງຫລວງ ທີ່ນຳໃຊ້ຢ່າງກວ້າງຂວາງທີ່ສຸດ ໃນແງ່ຂອງການຊ່ວຍເຫລືອ ODA ກຳເນີດຈາກທະນາຄານໂລກ: "ການສວຍໃຊ້ອົງການລັດ ເພື່ອໄດ້ມາເຊິ່ງຜົນປະໂຫຍດສ່ວນຕົນ" (World Bank 2004). ແຕ່ການຄົ້ນຄວ້ານີ້ສະໜັບສະໜູນ ຄຳນິຍາມທີ່ລວມເອົາທັງພາກລັດ ແລະ ເອກະຊົນ ເຊັ່ນ ຄຳນິຍາມຂອງ UNODC: "ການສວຍໃຊ້ອຳນາດ ເພື່ອໄດ້ມາເຊິ່ງຜົນປະໂຫຍດສ່ວນຕົນ" (UNODC 2004). ຄຳນິຍາມທັງສອງຄຳຖືກ ນຳມາໃຊ້ເປັນຄຳ ອ້າງອີງ ແລະ ຄຳຊີ້ແຈງໃນໄລຍະການຄົ້ນຄວ້າຄັ້ງນີ້.

## ສະຫລຸບໂດຍຫຍໍ້ກ່ຽວກັບຄວາມພະຍາຍາມ ໃນການຕ້ານການສໍ້ລາດບັງຫລວງໃນປັດຈຸບັນ

ຕ້ອງສະແດງຄວາມຂອບອົກຂອບໃຈ ເປັນຢ່າງຍິ່ງຕໍ່ບັນດາການສຳຫລວດ ຄວາມສຳນຶກທີ່ກ່ຽວພັນກັບການສໍ້ລາດບັງຫລວງທີ່ເປັນການສຳຫລວດບຸກເບີກເຊັ່ນ ດັດຊະນີຄວາມສຳນຶກກ່ຽວກັບການສໍ້ລາດບັງຫລວງ ຂອງ Transparency International ແລະ ໂຄງການຕ້ານການສໍ້ລາດບັງຫລວງລະດັບໂລກ ຂອງ UNODC (TICPI 2003, Langseth 2001) ແລະ ກິດຈະກຳລະດັບພາກສະໜາມເຊັ່ນດຽວກັນ ເຊັ່ນ ບັນດາການສຳຫລວດຄວາມ ຊື່ສັດແຫ່ງຊາດສັງລວມ ເອົາຊຸດຂໍ້ມູນທີ່ອີງໃສ່ຄວາມສຳນຶກ ຊຶ່ງສະໜອງຂໍ້ມູນ ດ້ານຈຳນວນ ແລະ ຄຸນນະພາບຢ່າງອຸດົມ ສົມບູນແກ່ບັນດານັກຄົ້ນຄວ້າ (Langseth 2001).

ໃນຂະນະທີ່ມາດຕະການລິເລີ່ມ ທີ່ກ່າວມາ ຂ້າງເທິງນັ້ນຄອງຄອຍການຫລຸດຜ່ອນ ການສໍ້ລາດບັງຫລວງໃນໄລຍະຍາວ ແຕ່ກໍ່ຂາດຄວາມສົນໃຈຕໍ່ຄວາມອ່ອນໄຫວ ຂອງບັນດາໂຄງການ ດ້ານການພັດທະນາເອງ. ແຜນວາດ ລຸ່ມນີ້ສະແດງໃຫ້ເຫັນສະຖານະການຂອງ ຜູ້ໃຫ້ທຶນຊ່ວຍເຫລືອຢ່າງມີປະສິດທິຜົນ:

<u>ແຜນວາດ 2: ກິດຈະກຳຂອງໂຄງການພົວພັນ ເຊິ່ງກັນແລະກັນ ກັບແວດລ້ອມຂອງທ້ອງຖິ່ນ (ແຜນວາດນີ້ ສ້າງໂດຍຜູ້ຂຽນ)</u>




ຢູ່ເໜືອການຄວບຄຸມ ຂອງໂຄງການ ຢ່າງສິ້ນເຊີງຕົວຢ່າງ: ວັດທະນາ ທຳ, ແວດລ້ອມດ້ານກາຍະພາກ, ຄວາມຂັດແຍ່ງ, ນະໂຍບາຍລັດຖະ ບານ/ການປ່ຽນແປງນະໂຍບາຍ, ການປະຕິບັດກົດໝາຍ, ອື່ນໆ. ໂຄງການທີ່ປະສົບຜົນສຳເລັດ ສາມາດ ບັນລຸເປົ້າໝາຍ ໂຄງການ ໂດຍລວມພາຍໃຕ້ຂໍ້ຈຳກັດ ຂອງແວດລ້ອມຂອງທ້ອງຖິ່ນ.

ຕົວຢ່າງ: ກິດຈະກຳທີ່ອີງໃສ່ພາກສະໜາມ, ໂດຍພື້ນຖານແລ້ວ ການພົວພັນເຊິ່ງກັນ ແລະ ກັນກັບຜູ້ມີສ່ວນຮ່ວມ ໃນທ້ອງຖິ່ນຄືພະນັກງານທ້ອງຖິ່ນ ແລະ ຕ່າງປະເທດ ຂອງໂຄງການທີ່ຢູ່ພາກສະໜາມ.
ກ່ຽວກັບປະເດັນ ການສໍ້ລາດບັງຫລວງ ລະດັບໂຄງການ, ນີ້ແມ່ນຂົງເຂດທີ່ບັນຫາສ່ວນໃຫຍ່ມັກເກີດຂຶ້ນ.
ບັນຫາທົ່ວໆໄປ ລວມທັງ ການຈັດຊື້, ການຮົ່ວໄຫລ ແລະ ລະບອບຈຸ້ມເຈື້ອເຊື້ອສາຍ.

ຕົວຢ່າງ: ນະໂຍບາຍພາຍໃນ ຂອງ ໂຄງການ, ເອກະສານແນະນຳ, ການຕັດສິນບັນຫາ ຂອງຜູ້ບໍລິຫານ. ໂດຍ ສະເພາະສິ່ງທີ່ຄວບຄຸມໄດ້ ອ່ອນໄຫວໜ້ອຍ ຕໍ່ການແຊກແຊງຈາກພາຍນອກ. ຂໍ້ຈຳກັດທີ່ເປັນໄປໄດ້:

- ການປ່ຽນແປງນະໂຍບາຍ ຂອງລັດຖະບານຂອງປະເທດຜູ້ຮັບ ການຊ່ວຍເຫລືອ
- ການປ່ຽນແປງພຶດຕິກຳພາຍ ໃນອົງການຈັດຕັ້ງ
- ຫົວໜ້າໂຄງການ ມີຜົນງານບໍ່ດີ, ການວາງແຜນໂຄງການບໍ່ເໝາະສົມ, ການຍັກຍອກ

ລູກສອນທີ່ມີເສັ້ນຕິດ ແມ່ນການໄຫລອອກ ຂອງບັນດາ ກິດຈະກຳຂອງໂຄງການສູ່ ແວດລ້ອມ ຂອງຜູ້ຮັບການຊ່ວຍເຫລືອ. ລູກສອນສັ້ນທີ່ມີເສັ້ນຕິດ ແມ່ນເຄື່ອງໝາຍສຳລັບຈຸດປະສົງ ສະເພາະໜ້າຂອງໂຄງການ. ລູກສອນຍາວທີ່ມີເສັ້ນຕິດ ແມ່ນເຄື່ອງໝາຍສຳລັບຜົນກະທົບໄລຍະຍາວທີ່ ໜ້າຈະເປັນໄປໄດ້ຈາກກິດ ຈະກຳຂອງໂຄງການ.
ລູກສອນທີ່ມີເສັ້ນຂາດ (ຍາວແລະສັ້ນ) ແມ່ນຂໍ້ມູນຂ່າວສານທີ່ໄຫລເຂົ້າທັງໃນດ້ານ 1) ຄຳຕຳ ນິຕິຊົມ/ການຕິດຕາມກວດສອບ/ການປະເມີນຜົນ (logframe/PCM style) ແລະ 2) ການໄຫລອອກຂອງແວດລ້ອມ ຂອງຜູ້ຮັບການຊ່ວຍເຫລືອ (ຕົວຢ່າງ ອິດທິພົນການສໍ້ລາດບັງຫລວງ) ສູ່ວຽກງານຂອງໂຄງການ ແລະ ຜົນກະທົບຕິດຕາມມາ.

ດັ່ງທີ່ໄດ້ສະແດງໃຫ້ເຫັນໃນແຜນວາດ ໃນຂະນະທີ່ກິດຈະກຳຂອງ ໂຄງການໄຫລອອກສູ່ແວດລ້ອມຂ້າງນອກ ລະຫວ່າງກາງ ແລະ ແວດລ້ອມຂ້າງນອກສຸດ ແຕ່ປັດໄຈຂ້າງນອກເຫລົ່ານັ້ນ ໄຫລກັບຄືນຫາໂຄງການຢ່າງ ສະໝ່ຳສະເໝີ. ປັດໄຈເຫລົ່ານີ້ມີຜົນກະທົບ ທັງດ້ານບວກແລະລົບຕໍ່ໂຄງການ ແລະ ພຶດຕິກຳອົງການຈັດຕັ້ງ ພາຍໃນຂອງໂຄງການເຫລົ່ານັ້ນ. ປັດໄຈທີ່ເອກະສານສະບັບນີ້ເນັ້ນໃສ່ແມ່ນ ການສໍ້ລາດບັງຫລວງ: ອີງຕາມ ຜົນການສຳຫລວດ, ຜູ້ບໍລິຫານໂຄງການ ເກືອບທຸກຄົນຊີ້ແຈງວ່າ ການສໍ້ລາດບັງຫລວງ ແມ່ນບັນຫາສຳຄັນສຳລັບໂຄງການຂອງເຂົາເຈົ້າ ແລະ ເຂົາເຈົ້າບໍ່ມີເຄື່ອງມືພຽງພໍທີ່ຈະດຳເນີນການກັບຜົນກະທົບຈາກການສໍ້ລາດບັງຫລວງ. ດ້ວຍເຫດນີ້, ເຖິງວ່າຈະມີຄວາມພະຍາຍາມ ໃນການຕ້ານການສໍ້ລາດບັງຫລວງຢ່າງຕໍ່ເນື່ອງກໍ່ຕາມ ແຕ່ໂຄງການສ່ວນໃຫຍ່ຍັງຄົງຕົກຢູ່ໃນຄວາມສ່ຽງ.

### ການອອກແບບແລະການກະຈາຍແບບສອບຖາມ

ໂດຍປາສະຈາກຂໍ້ມູນກ່ຽວກັບ ການສໍ້ລາດບັງຫລວງ ໃນລະດັບໂຄງການທີ່ພິມເຜີຍແຜ່ ຈິ່ງມີການຕັດສິນໃຈຕັ້ງແຕ່ເບື້ອງຕົ້ນວ່າຈະມີການເກັບຂໍ້ມູນດິບ ໂດຍໃຊ້ແບບສອບຖາມ ທີ່ອີງໃສ່ຄວາມ ສຳນຶກ. ຜູ້ບໍລິຫານໂຄງການໃນ ນະຄອນຫລວງວຽງຈັນ ແລະ ແຂວງຫລວງພະບາງຈຳນວນ 45 ຄົນ ໄດ້ຮັບການຄັດເລືອກໃຫ້ເປັນຕົວແທນ ການສຳຫລວດຄັ້ງນີ້ ຊຶ່ງໃນຈຳນວນນັ້ນ 25 ຄົນໃຫ້ຄຳຕອບ ແລະ ສົ່ງແບບສອບຖາມຄືນ ແລະ ອັດຕາການຕອບແມ່ນ 55%.

### ຜົນການສຳຫລວດ: ການວິເຄາະແບບອະທິບາຍ

ພາກນີ້ສະເໜີຜົນໄດ້ຮັບ ຈາກການສຳຫລວດ ໃນຮູບແບບອະທິບາຍແລະເສັ້ນສະແດງ ພ້ອມກັບການໃຫ້ທັດສະນະທີ່ກ່ຽວຂ້ອງ. ສຳລັບການນຳສະເໜີດ້ວຍເສັ້ນສະແດງ, ມີການສ້າງຮູບສະແດງຮິດສະໂຕ-ກລາມຂຶ້ນມາ ເພື່ອໃຫ້ເຫັນການກະຈາຍ ຄວາມຖີ່ຂອງ ຄຳຕອບທີ່ໄດ້ມາ. ໃນຮູບສະແດງຮິດສະໂຕ-ກລາມ, ຄວາມສູງແມ່ນ ຄວາມຖີ່ ແລະ ໃນກໍລະນີນີ້ກໍ່ແມ່ນຈຳນວນ ໂຄງການ.

### ທັກສະພາສາລາວຂອງຊ່ຽວຊານຕ່າງປະເທດ

ຄວາມສາມາດດ້ານພາສາລາວຂອງຊ່ຽວຊານແຕກຕ່າງກັນຢ່າງຫລວງຫລາຍ. ຕາມມາດຕາ 1 ຫາ 10 ຊຶ່ງ 10 ແມ່ນຄະແນນສູງສຸດ (ຄວາມຄ່ອງແຄ້ວ) ຄ່າສະເລ່ຍແມ່ນ 4.5.

### ການແປພາສາ

ເກືອບ 2/3 ຂອງເອກະສານໂຄງການທັງໝົດຈັດພິມເປັນພາສາລາວ. ສຳລັບບາງໂຄງການມີນະໂຍບາຍຄື ທຸກເອກະສານຕ້ອງຈັດພິມເປັນສອງພາສາ ຕັ້ງແຕ່ຂັ້ນຕອນການວາງແຜນ ແລະ ການຈັດຕັ້ງປະຕິບັດຈົນຮອດ ປິດໂຄງການ. ຜູ້ບໍລິຫານໂຄງການເຫລົ່ານີ້ບໍ່ໄດ້ເນັ້ນວ່າ ນະໂຍບາຍດັ່ງກ່າວນີ້ປະສົບຜົນສຳເລັດ.

### ການວາງແຜນແລະວິທີການແບບມີສ່ວນຮ່ວມ

84% ຂອງຈຳນວນໂຄງການທັງໝົດໄດ້ຮັບການວາງແຜນອີງຕາມວິທີການແບບມີສ່ວນຮ່ວມ ໂດຍທີ່ 88% ໄດ້ຮັບການວາງແຜນໃນ ສປປ ລາວ.

## ຂໍ້ແນະນຳທີ່ກຳນົດໃຫ້ກ່ຽວກັບການສໍ້ລາດບັງຫລວງ

40% ຂອງບັນດາໂຄງການທັງໝົດອະທິບາຍວ່າ ເອກະສານໂຄງການລວມມີຂໍ້ແນະນຳ ທີ່ກຳນົດໃຫ້ເພື່ອດຳເນີນການກັບກໍລະນີການສໍ້ລາດບັງຫລວງ. ເຖິງຢ່າງໃດກໍ່ດີ, ຕະຫລອດການສຳພາດຜູ້ບໍລິຫານໂຄງການ ເກືອບທຸກຄົນໃຫ້ທັດສະນະວ່າ ການຕັດສິນໃຈດ້ານການບໍລິຫານ ກ່ຽວກັບການສໍ້ລາດບັງຫລວງແມ່ນຂຶ້ນກັບ ສິດໃນການຕັດສິນໃຈຂອງເຂົາເຈົ້າຢ່າງເຕັມສ່ວນ. ດ້ວຍເຫດນີ້ ຕົວເລກນີ້ຈຶ່ງບໍ່ໜ້າເຊື່ອຖື.

## ມາດຕະຖານການບັນຊີ

ທຸກໂຄງການ ຍົກເວັ້ນໂຄງການດຽວກ່າວວ່າ ເຂົ້າເຈົ້າປະຕິບັດຕາມມາດຕະຖານ ການບັນຊີສາກົນ.

## ການກວດສອບບັນຊີ

88% ຂອງຜູ້ຕອບຄຳຖາມຈ້າງບໍລິສັດອິດສະຫລະມາກວດສອບບັນຊີໂຄງການ. ບໍລິສັດເຫລົ່ານັ້ນລວມທັງບໍລິສັດຂ້າມຊາດເຊັ່ນ ບໍລິສັດ... ແລະ ບໍລິສັດ... ນອກເໜືອຈາກ ບໍລິສັດພາຍໃນປະເທດຄື ບໍລິສັດ... ໃນການສຳພາດ ບັນດາຜູ້ບໍລິຫານ ໂຄງການກໍ່ບໍ່ເປັນເອກະພາບ ກ່ຽວກັບຄວາມເຄັ່ງຄັດຂອງການກວດບັນຊີ ໂດຍທີ່ ບາງຄົນກ່າວວ່າ ເປັນທີ່ຮູ້ກັນວ່າ ພະນັກງານ ໂຄງການຮ່ວມຫົວກັບນັກກວດບັນຊີ.

## ຈຳນວນຊ່ຽວຊານຕາມສັນຊາດ

ໂດຍສະເລ່ຍ ມີຊ່ຽວຊານຕ່າງປະເທດ 3 ຄົນຕໍ່ໂຄງການ ແລະ ຄ່າບ່າຍບ່ຽງມາດຕະຖານແມ່ນ 2.81. 75% ຂອງຈຳນວນໂຄງການທັງໝົດ ຈ້າງຊ່ຽວຊານຕ່າງປະເທດພຽງ 1-2 ຄົນເທົ່ານັ້ນ. ສຳລັບຊ່ຽວຊານທ້ອງຖິ່ນ, ຈຳນວນສະເລ່ຍແມ່ນ 5 ແລະ ຄ່າບ່າຍບ່ຽງມາດຕະຖານແມ່ນ 3.97. ຈຳນວນລວມ ສະເລ່ຍຂອງ ຊ່ຽວຊານຕໍ່ໂຄງການແມ່ນ 9.3 ໂດຍທີ່ອັດຕາສ່ວນສະເລ່ຍລະຫວ່າງຊ່ຽວຊານທ້ອງຖິ່ນ ແລະ ຊ່ຽວຊານທັງ ໝົດແມ່ນ 40%.

## ເງິນເດືອນ

ແຜນວາດ 4 ສະແດງໃຫ້ເຫັນຄວາມແຕກຕ່າງລະຫວ່າງເງິນເດືອນ ຂອງຊ່ຽວຊານທ້ອງຖິ່ນ ແລະ ຊ່ຽວ ຊານຕ່າງປະເທດ. ອີງຕາມຂໍ້ມູນການສຳຫລວດ, 31% ຂອງຊ່ຽວຊານຕ່າງປະເທດມີເງິນເດືອນສູງກວ່າ ຊ່ຽວຊານທ້ອງຖິ່ນ 7-8 ເທົ່າ. ນອກຈາກນັ້ນ, ເກືອບ 75% ຂອງຊ່ຽວຊານຕ່າງປະເທດມີເງິນເດືອນຫລາຍ ກວ່າຊ່ຽວຊານທ້ອງຖິ່ນຫລາຍກວ່າ 5 ເທົ່າ. ຊ່ຽວຊານຕ່າງປະເທດມີເງິນເດືອນ US$41.340 ຕໍ່ປີ ໃນຂະນະທີ່ຊ່ຽວຊານລາວໄດ້ US$8.096 ຕໍ່ປີ. ເງິນເດືອນສະເລ່ຍ ຂອງລັດຖະກອນໃນ ສປປ ລາວ ປະມານ US $300 ຕໍ່ປີ ຊຶ່ງບາງຄັ້ງໄດ້ຮັບເປັນເຂົ້າ ຫລື ອາຫານ. ຍິ່ງໄປກວ່ານັ້ນ, ເປັນທີ່ຮູ້ກັນວ່າ ໃນບາງຂະແໜງການຂອງລັດຖະການລາວ (ເຊັ່ນ ແພດ, ຕຳຫລວດ ແລະ ຄູສອນ) ປະຕິບັດໜ້າທີ່ ໂດຍບໍ່ໄດ້ຮັບເງິນເດືອນເປັນເວລາຫລາຍເດືອນຕິດຕໍ່ກັນ.

แผນວາດ 3: ການກະຈາຍຄວາມຖີ່ຂອງຈຳນວນຊ່ຽວຊານຕ່າງປະເທດ ແລະ ຊ່ຽວຊານທ້ອງຖິ່ນ




ແຜນວາດ 4: ອັດຕາສ່ວນເງິນເດືອນ ລະຫວ່າງຊ່ຽວຊານ ຕ່າງປະເທດ ແລະ ຊ່ຽວຊານທ້ອງຖິ່ນ



## ປະສົບການດ້ານວຽກງານ ແລະ ອາຍຸ

ໃນຂະນະທີ່ຊ່ຽວຊານລາວ ແລະ ຊ່ຽວຊານຕ່າງປະເທດໂດຍສະເລ່ຍມີປະສົບການ ກ່ຽວກັບວຽກງານ ODA ເທົ່າໆກັນ (7 ແລະ 9 ປີ ຕາມລຳດັບ) ແຕ່ຕົວກະຈາຍຂ້ອນຂ້າງແຕກຕ່າງ. ໃນກໍລະນີ ຂອງຊ່ຽວຊານ ຕ່າງປະເທດ, ຈຳນວນຊ່ຽວຊານຫລຸດລົງຕາມລຳດັບ ຈາກຜູ້ມີປະສົບການໜ້ອຍ ກ່ຽວກັບ ODA ໂດຍທີ່ 40% ຂອງຊ່ຽວຊານຕ່າງປະເທດ ມີປະສົບການລະຫວ່າງ 1-5 ປີ. ກົງກັນຂ້າມ, ຊ່ຽວຊານທ້ອງຖິ່ນສ່ວນໃຫຍ່ (56%) ມີປະສົບການຢູ່ລະຫວ່າງ 6-10 ປີ.




**<u>ແຜນວາດ 5: ການກະຈາຍຄວາມຖີ່ປະສົບການ ຂອງຊ່ຽວຊານຕ່າງປະເທດແລະຊ່ຽວຊານທ້ອງຖິ່ນ (ປີ)</u>**

ເລື່ອງປະສົບການ ແລະ ອາຍຸມີສ່ວນພົວພັນກັນ ຢ່າງສະໜິດແໜ້ນ. ຊ່ຽວຊານຕ່າງປະເທດ 66% ມີອາຍຸຫລາຍກວ່າ 40 ປີ ໃນຂະນະທີ່ 69% ຂອງຊ່ຽວຊານລາວ ອາຍຸຕ່ຳກວ່າ 40 ປີ. ນີ້ບໍ່ເປັນເລື່ອງໜ້າແປກໃຈ ໃນກໍລະນີຂອງຊ່ຽວຊານຕ່າງປະເທດ ເພາະວ່າຫລາຍຄົນຖືກ ຊັບຊ້ອນມາຈາກບ່ອນທີ່ມີປະສົບການ ວຽກອັນຍາວນານ ໃນຂົງເຂດ ວິຊາການຂອງເຂົາເຈົ້າ. ແຕ່ສຳລັບຊ່ຽວຊານທ້ອງຖິ່ນ ອາດຈະສະຫລຸບໄດ້ສອງຢ່າງ ຄື: 1) ຄວາມສາມາດ ຂອງຊັບພະຍາກອນມະນຸດ ຫາກໍ່ສາມາດຕອບສະໜອງ ໄດ້ມາດຕະຖານ

**<u>ແຜນວາດ 6: ການກະຈາຍຄວາມຖີ່ກ່ຽວກັບອາຍຸຂອງຊ່ຽວຊານຕ່າງປະເທດ ແລະ ຊ່ຽວຊານທ້ອງຖິ່ນ</u>**



ຂັ້ນຊ່ຽວຊານ ຕາມການພິຈາລະນາຂອງບັນດາ ໂຄງການຕ່າງປະເທດຫວ່າງມໍ່ໆມານີ້ ແລະ 2) ຊ່ຽວຊານທ້ອງຖິ່ນໄດ້ເງິນ ເດືອນສູງກວ່າພະນັກງານ ລັດປະມານ 25 ເທົ່າ ຊຶ່ງຊີ້ໃຫ້ເຫັນອັດຕາການຈ້າງງານສູງ. ຄວາມຈິງເມື່ອ ເບິ່ງຕາມທ່າອ່ຽງ ເຮົາສາມາດຄາດກະໄດ້ໂລດວ່າ ຈຳນວນຊ່ຽວຊານທ້ອງຖິ່ນທີ່ມີປະສົບການໜ້ອຍຈະເພີ່ມ ຂຶ້ນໄປຕາມຄວາມສາມາດ ຂອງຊັບພະຍາກອນມະນຸດທີ່ກຳລັງເພີ່ມຂຶ້ນ. ໃນເວລາດຽວກັນ, ເຮົາອາດຄາດກະໄດ້ວ່າ ຈຳນວນຊ່ຽວຊານຕ່າງປະເທດ ໂດຍລວມແລ້ວຈະຫລຸດລົງ ເນື່ອງຈາກວ່າ ມີຊ່ຽວຊານທ້ອງຖິ່ນຫລາຍ ຂຶ້ນເຂົ້າເຮັດວຽກໃນຂະແໜງການດັ່ງກ່າວນີ້.

## ໄລຍະເວລາຂອງສັນຍາຂອງຊ່ຽວຊານຕ່າງປະເທດ

ຊ່ຽວຊານຕ່າງປະເທດກວ່າເຄິ່ງໜຶ່ງ (56%) ມີສັນຍາເຮັດວຽກປະມານ 2 ປີ ຊຶ່ງຄ່າ ສະເລ່ຍແມ່ນ 21 ເດືອນ. ບັນດາຊ່ຽວຊານທີ່ມີສັນຍາຕ່ຳກວ່າໜຶ່ງປີ ມັກຈະຖືກຈັດຢູ່ປະເພດທີ່ປຶກສາໄລຍະສັ້ນ (ໂດຍມີການຕໍ່ ສັນຍາ). ສິ່ງທີ່ໜ້າສົນໃຈກໍ່ຄື ຊ່ຽວຊານຕ່າງປະເທດຂອງໂຄງການໜຶ່ງ ລ້ວນແຕ່ແມ່ນອາສາສະໝັກມີສັນຍາ ເຮັດວຽກໃນຕຳແໜ່ງ 6 ປີ.

ແຜນວາດ 7: ການກະຈາຍຄວາມຖີ່ ໄລຍະເວລາຂອງສັນຍາຂອງຊ່ຽວຊານຕ່າງປະເທດ




## ການສຶກສາ

ໄລຍະເວລາສະເລ່ຍຂອງການສຶກສາ ໃນລະບົບສຳລັບຜູ້ປະສານງານພາກລັດ, ຊ່ຽວຊານທ້ອງຖິ່ນ ແລະ ຊ່ຽວຊານຕ່າງປະເທດແມ່ນ 14, 15 ແລະ 18 ປີຕາມລຳດັບ. ຊ່ຽວຊານທ້ອງຖິ່ນ 32% ມີລະດັບການສຶກສາ ຢ່າງໜ້ອຍປະລິນຍາໂທ ທຽບໃສ່ຊ່ຽວຊານຕ່າງປະເທດແມ່ນປະມານ 85%.

**<u>ແຜນວາດ 8: ການກະຈາຍຄວາມຖີ່ກ່ຽວກັບລະດັບການສຶກສາຂອງພະນັກງານໂຄງການ</u>**




## ງົບປະມານ

ງົບປະມານປະຈຳປີຂອງບັນດາໂຄງການ ທີ່ເປັນຕົວແທນແຕກຕ່າງກັນ ຢ່າງຫລວງຫລາຍ ແຕ່ US$25.000 ຫາ US$11.3 ລ້ານ. ຖ້າບໍ່ນັບເງິນນອກງົບປະມານ, ຄ່າບ່າຍບ່ງງມາດຕະຖານປະມານ US$10.000 ແລະ ຄ່າສະເລ່ຍແມ່ນ US$722.000. ນອກຈາກນັ້ນ, ເຮົາຍັງເຫັນໄດ້ວ່າ ຄ່າກາງຂອງງົບປະມານປະຈຳ ປີແມ່ນ US$400.000 ຊຶ່ງຕ່ຳກວ່າຄ່າສະເລ່ຍຫລາຍ ຍ້ອນວ່າ 25% ຂອງຈຳນວນໂຄງການທັງໝົດມີ ງົບປະມານຫລາຍກວ່າ US$1 ລ້ານ.

**<u>ແຜນວາດ 9: ການກະຈາຍຄວາມຖີ່ກ່ຽວກັບຈຳນວນລວມຂອງງົບປະມານປະຈຳປີ ( ເປັນ US$1000)</u>**



## ການສະໜັບສະໜູນທຶນ

56% ຂອງບັນດາໂຄງການທັງໝົດ ໄດ້ຮັບການສະໜັບສະໜູນທຶນ ແບບພະຫຸພາຄີ, 40% ແບບທະວິພາຄີ ແລະ ອີກ 4% ອາດຖືໄດ້ວ່າ ໄດ້ຮັບທຶນຈາກອົງການ NGOs ລ້ວນໆ, ຍ້ອນວ່າ NGOs ກວມເອົາ 4% ຂອງຕົວແທນ ນີ້ໝາຍຄວາມວ່າ ສ່ວນໜຶ່ງ (ໃນບາງກໍລະນີສ່ວນຫລາຍ ຫລື ທັງໝົດ) ຂອງທຶນຊ່ວຍ ເຫລືອຂອງ NGOs ອາດໄດ້ຈາກອົງການທະວິພາຄີ ຫລື ພະຫຸພາຄີ.

<u>ແຜນວາດ 10: ການກະຈາຍກ່ຽວກັບຮູບແບບການສະໜັບສະໜູນທຶນ</u>




## ຄວາມສຳນຶກຂອງຜູ້ບໍລິຫານໂຄງການ ກ່ຽວກັບຜົນກະທົບຈາກການ ສໍ້ລາດບັງຫລວງ

ໂດຍລວມແລ້ວ, ຜູ້ບໍລິຫານໂຄງການ 72% ຕອບຄຳຖາມໃນມາດຕາແຕ່ 0 ຫາ 20 ແລະ ຄຳຕອບສະເລ່ຍ ແມ່ນ 21. ຜູ້ບໍລິຫານໂຄງການທີ່ປະເມີນວ່າ ການສໍ້ລາດບັງຫລວງມີຜົນກະທົບສູງ ແມ່ນມີຈຳນວນຂ້ອນຂ້າງໜ້ອຍ.

<u>ແຜນວາດ 11: ການກະຈາຍຄວາມຖີ່ ຄວາມສຳນຶກຂອງຜູ້ບໍລິຫານໂຄງການກ່ຽວກັບຜົນກະທົບ ຈາກການສໍ້ລາດບັງຫລວງ</u>



## ສະຫລຸບ

ຈຸດປະສົງຂອງພາກນີ້ ແມ່ນແນໃສ່ເພື່ອນຳໃຊ້ຜົນໄດ້ຮັບ ຈາກການສຳຫລວດ ແລະ ສຳພາດ ທີ່ອີງໃສ່ຄວາມສຳນຶກ ເພື່ອສ້າງຍຸດທະສາດ ໃນທາງປະຕິບັດໃນການຫລຸດຜ່ອນ ການສໍ້ຫລາດບັງຫລວງ. ຕົວຢ່າງ ດັ່ງທີ່ສະແດງ ໃຫ້ເຫັນໃນ ແຜນວາດ 3 ບໍ່ມີທ່າອ່ຽງໃນດ້ານ ຈຳນວນຊ່ຽວຊານທ້ອງຖິ່ນ ຕໍ່ໂຄງການ. ກົງກັນຂ້າມ, ການຈັດຊ່ຽວຊານຕ່າງປະເທດເຮັດວຽກ ໃນໂຄງການມີທ່າອ່ຽງ ທີ່ຈະແຈ້ງ, ບັນດາໂຄງການທີ່ຈ້າງຊ່ຽວຊານຫລາຍຄົນ ມີຈຳນວນໜ້ອຍລົງເລື້ອຍໆ. ຈຳນວນຊ່ຽວຊານທ້ອງຖິ່ນກຳລັງເພີ່ມຂຶ້ນ ເນື່ອງຈາກສະຖານະການດ້ານ ຊັບພະຍາກອນມະນຸດໃນ ສປປ ລາວດີຂຶ້ນ, ການຈ້າງຊ່ຽວຊານທ້ອງຖິ່ນເພີ່ມຂຶ້ນຊ້າໆ ແຕ່ສະໝໍ່າສະເໝີເບິ່ງ ຄືໜ້າຈະແທດເໝາະ (ນີ້ສອດຄ່ອງກັບການຈ້າງຊ່ຽວຊານຕ່າງປະເທດຫລຸດລົງ). ແນ່ນອນວ່າ ການມີເງິນເດືອນສູງກວ່າເງິນເດືອນລັດຖະກອນໃນລະດັບດຽວກັນ 25 ເທົ່າ ຊ່ຽວຊານທ້ອງຖິ່ນມີແຮງຈູງໃຈສູງທີ່ຈະເຂົ້າເຮັດວຽກ ແລະ ຍັງຄົງເຮັດວຽກໃນຂະແໜງການ ODA.

ພາກການສຳພາດແລະຄຳຖາມເປີດ ໃນແບບສອບຖາມສະເໜີວ່າ ໂດຍສະເພາະບາງ ອົງການຈັດຕັ້ງມັກນຳ ໃຊ້ວິທີການຈັດສັນທຶນຊ່ວຍເຫລືອ ຊຶ່ງເປັນຕົວເພີ່ມຄວາມເປັນໄປໄດ້ທີ່ຈະເຮັດໃຫ້ມີ "ການກະທຳຜິດໂດຍອົງການຂອງລັດ". ຜູ້ບໍລິຫານໂຄງການຜູ້ໜຶ່ງໃຫ້ຂໍ້ສັງເກດວ່າ ຫລັງຈາກທີ່ອົງການຊ່ວຍເຫລືອລ້າໄດ້ກຳນົດໃຫ້ມີ "ການຄວບຄຸມທີ່ເຄັ່ງຄັດ ອົງການຂອງປະເທດ ທີ່ໄດ້ຮັບການຊ່ວຍເຫລືອໄດ້ໂຄສະນາ ຊັກຊວນຢ່າງເຂັ້ມຂຸ້ນ ເພື່ອຮັບເອົາທຶນຊ່ວຍເຫລືອ ຈາກຜູ້ອື່ນ ທີ່ມີໃຈກວ້າງກວ່າ ຕໍ່ວິທີການກະຈາຍທຶນຊ່ວຍເຫລືອ". ຜູ້ບໍລິຫານໂຄງ ການອີກຜູ້ໜຶ່ງ ທີ່ເຮັດວຽກກັບອົງການຈັດຕັ້ງພະຫຸພາຄີ ກ່າວຢ່າງເປີດເຜີຍວ່າ "ໂຄງການຊຶ່ງມອບຄວາມຮັບຜິດຊອບ ແລະ ການຄວບຄຸມການເບີກຖອນທຶນຊ່ວຍເຫລືອ ໃຫ້ແກ່ອຳນາດການປົກຄອງທ້ອງຖິ່ນ ມີຄວາມອ່ອນໄຫວຫລາຍກວ່າ". ມີການເວົ້າຢໍ້າເລື້ອຍໆວ່າ ຜູ້ກະທຳຜິດຕໍ່ໂຄງການພະຫຸພາຄີໄດ້ຖືກລະບຸວ່າມາຈາກ "ອົງການຈັດຕັ້ງປະຕິບັດຂອງປະເທດໄດ້ຮັບການຊ່ວຍເຫລືອ".

ສະຖິຕິທີ່ໜ້າສົນໃຈອັນໜຶ່ງ ໄດ້ຈາກແບບສອບຖາມແມ່ນ ຄວາມສຳນຶກຂອງຜູ້ບໍລິຫານ ໂຄງການກ່ຽວກັບຜົນ ກະທົບຈາກການສໍ້ລາດບັງຫລວງ ຕໍ່ໂຄງການຂອງເຂົາເຈົ້າ (ເບິ່ງແຜນວາດ 11). ຜົນໄດ້ຮັບຈາກແບບ ສອບຖາມຊີ້ໃຫ້ເຫັນວ່າ ຕາມມາດຕາ 0 ຫາ 100, ຄ່າສະເລ່ຍຂອງຜົນກະທົບຈາກການສໍ້ລາດບັງ ຫລວງໃນລະດັບໂຄງການທີ່ໄດ້ແມ່ນ 21 ຊຶ່ງສອດຄ່ອງກັບຂໍ້ມູນ ໄດ້ຈາກການສຳພາດ. ເວົ້າສະເພາະກໍ່ຄື ຜູ້ຈັດການໂຄງການຫລາຍຄົນກ່າວວ່າ ເຂົາເຈົ້າ "ຍອມໃຫ້ຊັບພະຍາກອນຂອງໂຄງການສູນເສຍສູງສຸດບໍ່ ເກີນ 20%" ຫລື ຜູ້ບໍລິຫານອີກຜູ້ໜຶ່ງເວົ້າອີກແບບໜຶ່ງວ່າ ຈະບໍ່ມີການດຳເນີນມາດຕະການແກ້ໄຂໃດໆ ຕາບໃດທີ່ຄວາມສູນເສຍ "ບໍ່ເກີນ 20%". ຕົວຢ່າງ ອີງຕາມຜູ້ບໍລິຫານຄົນໜຶ່ງ 15% ເປັນລະດັບທີ່ ຜູ້ໃຫ້ທຶນ Q ຕັ້ງໄວ້ເປັນ "ລະດັບຍືນຍົງ". ຊັບພະຍາກອນຂອງໂຄງການ Q ສູນເສຍຮອດ 40% ພາຍໃຕ້ຜູ້ບໍລິຫານ ຄົນກ່ອນ ແຕ່ຜູ້ບໍລິຫານຄົນນີ້ປະສົບຜົນສຳເລັດໃນການຫລຸດຄວາມສູນເສຍໃຫ້ເຫລືອ 15%. ໃນເມື່ອຖືກຖາມ ວ່າ ເຮັດໄດ້ແນວໃດ ລາວຕອບວ່າ "ຝ່າຍລາວຮູ້ຕະຫລອດວ່າ ຜູ້ໃຫ້ທຶນ Q ຈະຍອມໃຫ້ຊັບພະຍາກອນສູນເສຍ 15%". ຄວາມສູນເສຍໃນລະດັບ 40% ສະທ້ອນເຖິງຄວາມບົກຜ່ອງ ຂອງຜູ້ບໍລິຫານຄົນກ່ອນທີ່ຈະຮັກສາສະຖານະພາບຂອງລາວເອງໃນຂະນະນັ້ນ.

ແນ່ນອນ, ຊັບພະຍາກອນບໍ່ແມ່ນແຕ່ເງິນສະເໝີໄປ ແລະ ຜູ້ບໍລິຫານແຕ່ລະຄົນປະເມີນຜົນກະທົບ

ຈາກການສໍ້ລາດບັງຫລວງເປັນລັກສະນະຄວາມຄິດສ່ວນຕົວ. ແຕ່ຢ່າງໃດກໍ່ດີ, ໂດຍທີ່ງົບປະມານປະຈໍາປີ ຂອງບັນດາໂຄງການທີ່ເປັນຕົວແທນ ສະເລ່ຍ US$722.000 ແລະ ງົບປະມານຫລາຍສຸດຫລາຍກວ່າ US$11 ລ້ານ ແມ່ນແຕ່ຄວາມສູນເສຍພຽງແຕ່ 5% ຂອງຊັບພະຍາກອນທີ່ເປັນເງິນຄວນພຽງພໍທີ່ຈະເປັນລະດັບເຕືອນໄພ ໄດ້ແລ້ວ. ຄວາມຈິງແລ້ວ, ອີງຕາມຜູ້ຕອບຄໍາຖາມສ່ວນໃຫຍ່ ສະຖານະການໃນຂະນະນີ້ ຢູ່ໃນຂັ້ນເຕືອນໄພແລ້ວ. ຜູ້ບໍລິຫານເກືອບທຸກຄົນເຫັນພ້ອມກັນວ່າ ການສໍ້ລາດບັງຫລວງ ເປັນບັນຫາສໍາຄັນ ຫລື "ໜັກໜ່ວງ" ສໍາລັບໂຄງການຊ່ວຍເຫລືອ ODA. ທີ່ຈິງຜູ້ຕອບສ່ວນໃຫຍ່ເຫັນພ້ອມກັນວ່າ ຜູ້ບໍລິຫານ "ບໍ່ມີເຄື່ອງມືໃດໆ" ທີ່ຈະປະເຊີນກັບການສໍ້ລາດບັງຫລວງໃນລະດັບໂຄງການ. ຄໍາເຫັນຢູ່ລຸ່ມນີ້ສະແດງໃຫ້ເຫັນວ່າ ບັນດາຜູ້ບໍລິຫານໃຫ້ທັດສະນະເຖິງຄວາມເປັນຫ່ວງ:

> "ໃນປະມານ 3/4 ຂອງຈໍານວນໂຄງການທັງໝົດ ເກີດມີການກະທໍາຜິດຮຸນແຮງ ແລະ ຜິດປົກກະຕິ"

> "ການກະທໍາຜິດໃນປະເທດອິນໂດເນເຊຍຢູ່ໃນຂັ້ນໜັກໜ່ວງ ແລະ ສິ່ງຜົນໃຫ້ທຶນຊ່ວຍເຫລືອເປັນລ້ານໆໂດລາ ສູນຫາຍໄປ. ເຖິງວ່າຜູ້ໃຫ້ທຶນຈະຮູ້ກໍ່ຕາມ ແຕ່ມີການດໍາເນີນການພຽງໜ້ອຍດຽວ. ຂ້າພະເຈົ້າມີຄວາມຮູ້ສຶກວ່າ ໃນ ສປປ ລາວ ຜູ້ຄົນຫາກໍ່ຮູ້ວ່າ ເຂົາເຈົ້າສາມາດນໍາ ໃຊ້ລະບົບເພື່ອໃຫ້ໄດ້ມາຊຶ່ງຜົນປະໂຫຍດສ່ວນຕົນ ຫລາຍປານໃດ. ຂ້າພະເຈົ້າເຫັນມີການສໍ້ລາດບັງຫລວງເພີ່ມຫລາຍຂຶ້ນໃນ 12 ເດືອນຜ່ານມາ".

> "ຄັນຖ້າຜູ້ໃຫ້ທຶນບໍ່ດໍາເນີນ ມາດຕະການຫລາຍຂຶ້ນ ແລະ ຖືກເບິ່ງວ່າພວມດໍາເນີນ ການບາງຢ່າງກ່ຽວກັບການ ສໍ້ລາດບັງຫລວງ ຈາກນັ້ນຄົນທ້ອງຖິ່ນ ຈະສືບຕໍ່ຈະຫຍາຍຂອບເຂດອອກຕື່ມ. ເຖິງວ່າຜູ້ໃຫ້ທຶນຊ່ວຍເຫລືອເອງ ຈະມີຈຸດຢືນຕ້ານການສໍ້ລາດບັງຫລວງກໍ່ຕາມ ແຕ່ການປະຕິບັດການຕົວຈິງຂອງເຂົາເຈົ້າບໍ່ກົງກັບຄໍາເວົ້າ ຂອງເຂົາເຈົ້າ".

ຄໍາເວົ້າຂ້າງເທິງໝາຍເຖິງ ຜູ້ບໍລິຫານຈະຈັດຕັ້ງປະຕິບັດ ຫລື ຍອມຮັບມາດຕະການ ຕ້ານການສໍ້ລາດບັງຫລວງ ໃນເມື່ອເຂົາເຈົ້າໄດ້ຮັບການສະໜັບສະໜູນ ຈາກຜູ້ໃຫ້ທຶນຊ່ວຍເຫລືອ ທີ່ນໍາມາໃຊ້ໄດ້ໃນລະດັບພາກສະໜາມ. ອີງຕາມຜົນການສໍາຫລວດ 40% ຂອງຈໍານວນໂຄງການ ມີຂໍ້ແນະນໍາສໍາລັບຕ້ານການສໍ້ລາດບັງຫລວງທີ່ກໍານົດໃຫ້ແລ້ວ, ແຕ່ຍ້ອນຂາດການບັງຄັບໃຊ້ໂດຍຜູ້ໃຫ້ທຶນໃນຂັ້ນບໍລິຫານ ຜູ້ບໍລິຫານບາງຄົນຈຶ່ງນໍາ ໃຊ້ນະໂຍບາຍຕ້ານການສໍ້ລາດບັງຫລວງ "ໃນລະດັບປະເທດ" ຫລື "ລະດັບພາກສະໜາມ" ຂອງຕົນເອງໂດຍ ບໍ່ອີງໃສ່ວັດທະນາທໍາຂອງ ອົງການຈັດຕັ້ງທີ່ວາງໄວ້ກວ້າງໆ.

## ຂໍ້ຈໍາກັດຂອງການສໍາຫລວດ

ຈາກຈໍານວນປະຊາກອນທາງສະຖິຕິ ຂອງຜູ້ບໍລິຫານໂຄງການມີເຖິງ 250 ຄົນໃນ ສປປ ລາວ, ຈຶ່ງມີການ ປະຕິບັດຕາມຫລັກການລວມທີ່ວ່າ "ຕົວແທນຍິ່ງໃຫຍ່ຍິ່ງດີ". ບັນດາຂໍ້ຈໍາກັດທີ່ຕິດພັນໂດຍພື້ນຖານກັບການ ເລືອກການສໍາຫລວດອີງໃສ່ຄວາມສໍານຶກ ຊຶ່ງໃນນັ້ນຂໍ້ມູນທີ່ໄດ້ຈາກວິທີການເຊັ່ນນີ້ໃນທາງພຶດຕິກໍາຕົວຈິງ ແລ້ວຢັ້ງຢືນບໍ່ໄດ້ (Lim and Stern 2002). ນອກຈາກນັ້ນ, ຂໍ້ມູນອີງໃສ່ຄວາມສໍານຶກຈະຕ້ອງຖືວ່າ ເປັນ "ພາວະຈິ່ງ" ໝາຍເຖິງການວາດພາບ ເອົາຄວາມຄິດເຫັນ

ສ່ວນຕົວຂອງຜູ້ຕອບຄຳຖາມນະເວລາໃດໜຶ່ງ ໃນຂະນະທີ່ມີການຈັດຕັ້ງປະຕິບັດແບບສອບຖາມ. ໃນຂະນະທີ່ ດັດຊະນີຄວາມສຳນຶກກ່ຽວກັບການສໍ້ລາດບັງຫລວງ ຂອງ Transparency International ສາມາດຫລຸດຜ່ອນບັນຫາດັ່ງກ່າວນີ້ ໃຫ້ເຫລືອໜ້ອຍສຸດ ໂດຍໃຊ້ "ຕົວເລກສະເລ່ຍທີ່ຕໍ່ເນື່ອງ" ພາຍໃນຂອບເວລາ 3 ປີ ແລະ ສຳຫລວດໂຄງການ ຫລື ອົງການຈັດຕັ້ງໜຶ່ງຫລາຍຄັ້ງ, ແຕ່ຍຸດທະສາດດັ່ງກ່າວ ບໍ່ສາມາດນຳມາໃຊ້ໃນກໍລະນີຂອງການຄົ້ນຄວ້າຄັ້ງນີ້ (TICPI 2003, Seligson 2001). ຂໍ້ຈຳກັດອີກຢ່າງຂອງການສຳຫລວດ ກ່ຽວພັນກັບຕົວແທນຂະໜາດນ້ອຍ. ຜູ້ຂຽນຫວັງທີ່ຈະເກັບຕົວແທນປະມານ 60 ຫົວໜ່ວຍ ແຕ່ໃນໄລຍະເວລາ 5 ອາທິດສາມາດຫາໄດ້ແຕ່ 45 ຄົນ ທີ່ເຕັມໃຈຮັບແບບສອບຖາມ ຊຶ່ງໃນນັ້ນແບບສອບຖາມ 25 ສະບັບເທົ່ານັ້ນຖືກສົ່ງຄືນ. ຂໍ້ສັງເກດສຸດທ້າຍ ແບບສອບຖາມໂດຍພື້ນຖານແມ່ນອີງໃສ່ ການສັງເກດປະສົບການເກືອບ 4 ປີ ເຮັດວຽກຢ່າງໃກ້ຊິດກັບຂະແໜງການ ODA ໃນນະຄອນຫລວງວຽງຈັນ ແລະ ແຂວງຫລວງພະບາງ. ດ້ວຍເຫດນີ້, ການສຳຫລວດ ເອງຈຶ່ງອີງໃສ່ປະສົບການເຫລົ່ານັ້ນ ແລະ ປະສົບການຂອງເພື່ອນມິດສະຫາຍ ແລະ ອະດີດຜູ້ຮ່ວມງານທີ່ຊ່ວຍ ກວດກາວຽກພາກສະໜາມ. ເຖິງວ່າຈະມີຂໍ້ຈຳກັດທີ່ຕິດພັນນຳຂໍ້ສະຫລຸບທີ່ນຳສະເໜີຢູ່ຂ້າງເທິງກໍ່ຕາມ ແຕ່ເຖິງຢ່າງໃດກໍ່ດີ ຂໍ້ສະຫລຸບເຫລົ່ານີ້ມີເຫດມີຜົນພາຍໃຕ້ອຸປະສັກຂອງການຄົ້ນຄວ້າຄັ້ງນີ້ ແລະ ນຳໃຊ້ໄດ້ກັບ ສະຖານະການໃນລະດັບໂຄງການຂອງ ODA ໃນ ສປປ ລາວໃນປັດຈຸບັນ.

ບັນຫາຂອງການສໍ້ລາດບັງຫລວງ ໃນລະດັບໂຄງການ ບໍ່ມີສັນຍານວ່າຈະຫລຸດໜ້ອຍຖອຍລົງ. ກົງກັນຂ້າມ, ບ່ອນໃດທີ່ການຄວບຄຸມບໍ່ເຄັ່ງຄັດ ສະຖານະການສໍ້ລາດບັງຫລວງຈະເຮັ່ງຮ້າຍຂຶ້ນ. ເຈດຕະນາຂອງການນຳ ສະເໜີຂໍ້ສະຫລຸບໃນເອກະສານສະບັບນີ້ ແມ່ນເພື່ອເປັນ ສັນຍານເຕືອນເລັກນ້ອຍ ຕໍ່ບັນດາກິດຈະກຳໃນລະດັບ ໂຄງການທີ່ມີຄວາມເຄັ່ງຄັດໜ້ອຍ ຊຶ່ງຜູ້ໄດ້ຮັບປະໂຫຍດ ຕົ້ນຕໍແມ່ນກຸ່ມເປົ້າໝາຍໃນ ສປປ ລາວ ແລະ ຜູ້ຈ່າຍອາກອນໃນປະເທດ ຂອງຜູ້ໃຫ້ທຶນຊ່ວຍເຫລືອ.

## ຜູ້ຂຽນ

ເອກະສານສະບັບນີ້ໄດ້ສະຫລຸບເອົາເນື້ອໃນ ໂດຍຫຍໍ້ຈາກບົດນິພົນທີ່ຂຽນໂດຍ ເຄຣີ ຟູເອີສຳລັບປະລິນຍາໂທ ໃນສາຂາການພັດທະນາລະຫວ່າງ ປະເທດທີ່ມະຫາວິທະຍາໄລແຫ່ງຊາດຍີ່ປຸ່ນໃນເດືອນເມສາ 2004. ທ່ານ ໃດສົນໃຈອ່ານບົດນິພົນດັ່ງກາວ ລວມທັງການວິເຄາະດ້ານຈຳນວນ ແລະ ແບບອະທິບາຍ ສາມາດເບິ່ງໄດ້ທີ່ ເວັບໄຊຂອງຜູ້ຂຽນ: http://feuer.seph.ws/hp. ຜູ້ຂຽນເຮັດວຽກໃນ ສປປ ລາວ ແຕ່ປີ 1997 ຫາ 2000 ແລະ ຂະນະນີ້ຢູ່ໃນແຂວງນີກາຕະ, ປະເທດຍີ່ປຸ່ນ.

## ເອກະສານອ້າງອີງ


ADB. 1999. *ADB Anticorruption Policy - Description and Answers to Frequently Asked Questions*. Asian Development Bank. Manila.

ARMM. 1998. *Manila Declaration on the Prevention and Control of Transnational Crime*. Press release from the Asia Regional Ministerial Meeting. Manila.

Akiyama, Suzanne, Takamasa Akiyama, and Minato, Naonobu. 2003. *International Development Assistance: Evolution and Prospects - With specific reference to the World Bank and Japan*. Trends in Development Assistance - Series 1. FASID. Tokyo.

CPC. 2002. *Foreign Aid Report 2000 - 2001*. Committee for Planning and Cooperation. Vientiane.

GoJ. 1999. Government of Japan, Ministry of Foreign Affairs. Japan's ODA Annual Report. *History of Japan's Assistance to Developing Countries (1945-1999)*. Chapter 8. http://www.mofa.go.jp/policy/oda/summary/1999/index.html. Last accessed 29/12/2003.

GoJ. 2002. UNAFEI, partnership institute of United Nations and Government of Japan. Corruption Control in Criminal Justice. Training course pamphlet for "administrators in charge of legislation on corruption control in criminal justice, investigators, public prosecutors and judges". JICA. Tokyo.

IMF. 2003. *Lao People's Democratic Republic: Financial Position in the Fund as of November 30, 2003*. International Monetary Fund homepage. http://www.imf.org/external/np/tre/tad/exfin2.cfm?memberKey1=570&date1Key=2003%2D11%2D30. Last accessed 29 December 2003

Langseth, P. 2001. *Measuring Corruption at the Village Level.* Global Program Against Corruption. UNODC. Vienna.

Lim, L.Y.C. and Stern, A. 2002. "State Power and Private Profit: the political economy of corruption in Southeast Asia". *Asian-Pacific Economic Literature*. Vol 16, No 2.

OECD. 1997. *OECD Convention on International Bribery*. OECD. Paris.

Seligson, M. A. 2001. *Good Government and Transparency in Honduras After Hurricane Mitch: A Study of Citizen Views*. Report prepared by Casals & Associates under USAID Task Order No. OUT-AEP-I-00-00-00010-00. Casals & Associates. United States.

TICPI. 2003. *Transparency International Corruption Perceptions Index*. Transparency International Secretariat. Berlin.

UNDP. 2003. *Human Development Report 2003 - Millennium Development Goals: A compact among nations to end human poverty*. United Nations Development Programme. Oxford University Press. New York.

UNgarc. 1997. *United Nations General Assembly Resolution on Corruption.* Resolution 51/59. United Nations. New York.

UNODC. 2004. *United Nations Office on Drugs and Crime Homepage*. http://www.unodc.org/unodc/corruption.html. last accessed 2 January 2004

USemb. 2000. *US Commitment to New International Anti-Corruption Initiatives*. Press release of the United States Embassy in Barbados. US Embassy. Barbados.

WDI. 2004. World Development Indicators Online. The World Bank Group.

World Bank. 2003. *Country Brief: Lao People's Democratic Republic*. http://web.worldbank.org/WBSITE/EXTERNAL/COUNTRIES/EASTASIAPACIFICEXT/LAOPRDEXTN/menuPK:293693~pagePK:141132~piPK:141107~theSitePK:293684,00.html. Last accessed 22 January 2005.

World Bank. 2004. *World Bank Anticorruption Homepage*. http://www1.worldbank.org/publicsector/anticorrupt/index.cfm. Last accessed 4 January 2004.

# ຈົ່ງໃຫ້ການຄົ້ນຄ້ວາຂອງທ່ານ ເປັນທີ່ຮັບຮູ້



## 8 ລ້ານກີບສຳລັບລາງວັນບົດຄົ້ນຄ້ວາດ້ານການພັດທະນາ

Juth Pakai

# ວາລະສານການພັດທະນາຂອງລາວ

## ການປະກອບສ່ວນທີ່ຕ້ອງການ

ທີມງານອົງການສະຫະປະຊາຊາດ ສ.ປ.ປ.ລາວໃຫ້ການສະໜັບສະໜູນການສ້າງວາລະສານກ່ຽວກັບການພັດທະນາທີ່ເອີ້ນວ່າຈຸດປະກາຍ, ຊຶ່ງມີຫົວຂໍ້ວ່າ ທັດສະນະຕໍ່ການພັດທະນາຂອງ ສ.ປ.ປ.ລາວ. ຈຸດປະກາຍມີເປົ້າໝາຍເພື່ອກະຕຸກຊຸກຍູ້ໃຫ້ມີການສົນທະນາໃນທຸກບັນຫາທີ່ພົວພັນເຖິງການພັດທະນາໃນ ສ.ປ.ປ.ລາວ. ວາລະສານດັ່ງກ່າວນີ້ຈະກະຈາຍຄວາມຮູ້ ແລະ ໃຊ້ເປັນເວທີເພື່ອໂອ້ລົມສົນທະນາ ແລະ ແລກປ່ຽນການຄົ້ນຄວ້າວິເຄາະແບບເລິກເຊິ່ງ, ໃນຂະນະດຽວກັນກໍ່ເປັນການສົ່ງເສີມເປົ້າໝາຍ ແລະ ພັນທະຕາມເນື້ອໃນຖະແຫຼງການສະຫັດສະວັດ.

ວາລະສານທີ່ຈະຈັດພິມຂຶ້ນສາມເທື່ອຕໍ່ປີນີ້ກຳລັງຊອກຫາການປະກອບສ່ວນທາງດ້ານວຽກການຂຽນຈາກຊຸມຊົນທີ່ມີສ່ວນກ່ຽວຂ້ອງກັບການພັດທະນາ, ລວມທັງນັກພັດທະນາພາຍໃນແລະຈາກສາກົນ, ພະນັກງານລັດ, ພະນັກງານຈາກອົງການຮ່ວມມືສອງຝ່າຍແລະຫຼາຍຝ່າຍຕ່າງໆ ແລະ ອົງການທີ່ບໍ່ຂຶ້ນກັບລັດຖະບານ, ນັກຂ່າວ, ນັກວິຊາການ, ນັກຄົ້ນຄວ້າ ຫຼື ຜູ້ໃດກໍ່ຕາມທີ່ມີຜົນປະໂຫຍດໃນ ສປປລາວ. ວາລະສານດັ່ງກ່າວນີ້ຈະຖືກຂຽນເປັນພາສາລາວ ແລະ ພາສາອັງກິດ ແລະ ສາມາດຫາອ່ານໄດ້ໃນຮູບແບບພິມ ແລະ ຂໍ້ມູນທາງລະບົບອອນລາຍນ໌.

ອົງການ ສະຫະປະຊາຊາດໃນ ສປປລາວ ເຫັນວ່າມັນແມ່ນໂອກາດອັນດີສຳລັບນັກເຄື່ອນໄຫວການພັດທະນາ ແລະອົງການຈັດຕັ້ງຕ່າງໆທີ່ຢາກເຜີຍແຜ່ບົດລາຍງານ, ການຄົ້ນຄວ້າສຶກສາ ແລະ ຄວາມຄິດເຫັນຕໍ່ແງ່ມຸມໃດໜຶ່ງ ຂອງຫົວຂໍ້ການພັດທະນາປະເທດນີ້. ເອກະສານທັງໝົດທີ່ສົ່ງມາສະເໜີເພື່ອຮັບການພິຈາລະນາ ຈາກຄະນະກຳມະການຮຽບຮຽງນັ້ນ ຄວນຈະເປັນພາສາອັງກິດ ຫຼື ພາສາລາວ. ບົດຄວາມບໍ່ຄວນຈະຍາວເກີນແປດໜ້າເຈ້ຍ A4. ເອກະສານຕົ້ນສະບັບຄວນມີບົດສະຫຼຸບສັ້ນໆ(100 ຫາ 120ຄຳ) ຂອງບັນຫາທີ່ສະເໜີ, ການຄົ້ນພົບທີ່ສຳຄັນທີ່ສຸດ ແລະ ບັນຊີລາຍຊື່ຂອງເອກະສານອ້າງອີງທີ່ເໝາະສົມ. ສຳລັບບົດແນະນຳສະບັບສົມບູນຄົບຖ້ວນຂອງຈຸດປະກາຍ,ສົ່ງອີເມລມາໄດ້ທີ່ **laodevelopment.journal@undp.org** ຫຼືສົ່ງຈົດໝາຍໄປທີ່ກອງເລຂາ, ຈຸດປະກາຍ c/o UNDP, ຕູ້ໄປສະນີ 345, ວຽງຈັນ, ສ.ປ.ປ.ລາວ.

ຄະນະກຳມະການຮຽບຮຽງ ຈະຮັບຮອງເອົາຕົ້ນສະບັບໃນຄວາມເຂົ້າໃຈ ທີ່ວ່າພວກມັນຈະໄດ້ຮັບການທົບທວນ. ຜູ້ປະກອບສ່ວນຄວນຈະແຈ້ງ ໃຫ້ຮູ້ວ່າເອກະສານທີ່ສົ່ງມາໃຫ້ນັ້ນ ເຄີຍໄດ້ຮັບການພິມເຜີຍແຜ່ ຫຼື ສົ່ງໄປເພື່ອພິມເຜີຍແຜ່ບ່ອນອື່ນມາກ່ອນຫຼືບໍ່.

**The Secretariat**
**Juth Pakai, c/o UNDP**
**PO Box 345**
**Vientiane**
**Lao PDR**
**Tel. +(856 21) 213390-97**
**e-mail: laodevelopment.journal@undp.org**